Public Disclosure Authorized
Public Disclosure Authorized
Public Disclosure Authorized

ກຸ່ມທະນາຄານໂລກ ຂອບການເປັນຄູ່ຮ່ວມມືກັບປະເທດ

ສຳລັບ ສປປ ລາວ 2017-2021

WORLD BANK GROUP

ຂົງເຂດຈຸດສຸມ ແລະ ຈຸດປະສົງ:

ສະໜັບສະໜູນການ ເຕີບໂຕທີ່ສົມດູນ

ລົງທຶນໃສ່ການ ພັດທະນາຄົນ

ປົກປັກຮັກສາສິ່ງ ແວດລ້ອມ

ບັນຫາທີ່ພົວພັນກັບຫຼາຍຂະແໜງການ:

ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ ລະບຽບການ

WORLD BANK GROUP

ກຸ່ມທະນາຄານໂລກ ຂອບການເປັນຄູ່ຮ່ວມມືກັບປະເທດ

ສຳລັບ ສປປ ລາວ 2017-2021

ອັດຕາແລກປ່ຽນເງິນຕາ

ອັດຕາແລກປ່ຽນໃນວັນທີ 1 ມີນາ 2017

1 ໂດລາສະຫະລັດ = 8.200 ກີບ

ປີງົບປະມານ: ມັງກອນ ຫາ ທັນວາ

ຄຳສັບຫຍໍ້

ADB	ທະນາຄານພັດທະນາອາຊີ
AML	ໜ່ວຍງານຕ້ານການຟອກເງິນ
ASA	ການຊ່ວຍເຫຼືອໃຫ້ຄຳປຶກສາວິຊາການ ແລະ ການວິໄຈ
ASEAN	ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ)
BOL	ທະນາຄານແຫ່ງ ສປປ ລາວ (ທຫລ)
CGAP	ແຜນດຳເນີນງານດ້ານບົດບາດຍິງຊາຍ
CLR	ບົດລາຍງານຜົນສຳເລັດແລະຖອດຖອນບົດຮຽນ
COS	ການສຳຫຼວດຄວາມຄິດເຫັນຂອງປະເທດ
CPF	ຂອບການເປັນຄູ່ຮ່ວມມືກັບປະເທດ
CPS	ຍຸດທະສາດການເປັນຄູ່ຮ່ວມມືກັບປະເທດ
CPIA	ການປະເມີນດ້ານນະໂຍບາຍແລະສະຖາບັນຂອງປະເທດ
CRVS	ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງພົນລະເມືອງ
DPF	ການສະໜັບສະໜຸນທຶນ ສຳລັບນະໂຍບາຍການພັດທະນາ
EAP	ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ
ECD	ການສຶກສາຂອງເດັກກ່ອນໄວຮຽນ
EdL	ລັດວິສາຫະກິດໄຟຟ້າລາວ
EU	ສະຫະພາບເອີລົບ
FCPF	ກອງທຶນຮ່ວມເພື່ອການຫຍຸດຜ່ອນປ່າໄມ້
FIP	ແຜນງານລົງທຶນໃສ່ ປ່າໄມ້
FY	ປີງົບປະມານ
GDP	ລວມຍອດຜະລິດຕະພັນພາຍໃນ
GNI	ລາຍໄດ້ແຫ່ງຊາດ
GOL	ລັດຖະບານແຫ່ງ ສປປ ລາວ
HGNDP	ແຜນງານພັດທະນາລະບົບການຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ
HMTA	ການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດໃນຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່
ICA	ການປະເມີນບັນຍາກາດການລົງທຶນ
IDA	ສະມາຄົມພັດທະນາສາກົນ
IEG	ກຸ່ມກວດສອບທີ່ເປັນເອກະລາດ
IFC	ອົງການການເງິນສາກົນ
IMF	ກອງທຶນການເງິນສາກົນ
Lao PDR	ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ)
LECS	ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນຂອງ ສປປ ລາວ
LENS 2	ໂຄງການສິ່ງແວດລ້ອມ ແລະ ສັງຄົມຢຸ່ ສປປລາວ ໄລຍະ 2
LSIS	ການສຳຫຼວດດັດຊະນີສັງຄົມຂອງ ສປປ ລາວ
MDG	ເປົ້າໝາຍສະຫັດສະວັດດ້ານການພັດທະນາ
MDTF	
MEM	ກະຊວງພະລັງງານ ແລະ ບໍ່ແຮ່ (ພບ)
MIGA	ອົງການຄ້ຳປະກັນການລົງທຶນຫຼາຍຝ່າຍ
MIWRM	ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານສຳລັບແມ່ນ້ຳຂອງ
MMR	ອັດຕາການຕາຍຂອງແມ່
MOF	ກະຊວງການເງິນ (ກງ)
MONRE	ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ)
MW	ເມກາວັດ
NSEDP	ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ
NT2	ໂຄງການນ້ຳເທີນ 2
PFM	ການຄຸ້ມຄອງວຽກງານການເງິນຂອງລັດ
PLR	ການທົບທວນຜົນການປະຕິບັດງານ ແລະ ການຖອດຖອນບົດຮຽນ
PPP	ຄວາມສາມາດຊື້ທຽບເທົ່າ
PRF	ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)
SCD	ການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ
SDG	ເປົ້າໝາຍການພັດທະນາແບບຍືນຍົງ
SDR	ສະກຸນເງິນ ເອສດີອາຣ໌
SEEDTA	ໂຄງການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາພະລັງງານ ແລະ ບໍ່ແຮ່ ແບບຍືນຍົງ
SME	ວິສາຫະກິດຂະໜາດນ້ອຍ ແລະ ກາງ
SOB	ທະນາຄານທຸລະກິດຂອງລັດ
UN	ອົງການສະຫະປະຊາຊາດ (ອົງການ ສປຊ)
UNFPA	ກອງທຶນປະຊາກອນຂອງອົງການ ສປຊ
UNICEF	ກອງທຶນເພື່ອເດັກຂອງອົງການ ສປຊ (ອົງການຢູນິເຊັບ)
WBG	ກຸ່ມທະນາຄານໂລກ
WHO	ອົງການອະນາໄມໂລກ

ສາລະບານ

I. ພາກສະຫລຸບ 3
II. ການພັດທະນາເສດຖະກິດໃນຊຸມປີທີ່ຜ່ານມາ 6
III. ຂອບການເປັນຄູ່ຮ່ວມມື ຂອງກຸ່ມທະນາຄານໂລກ 15
IV. ການບໍລິຫານຄວາມສ່ຽງ 29

ເອກະສານຊ້ອນທ້າຍ

ຕາຕະລາງ 1: ຕາຕະລາງ Matrix ຕິດຕາມຜົນໄດ້ຮັບ ຂອງຂອບການເປັນຄູ່ຮ່ວມມືກັບປະເທດ 30

ຕາຕະລາງ

ຕາຕະລາງ 1: ຂົງເຂດຈຸດສຸມ ແລະ ຈຸດປະສົງ ຂອງຂອບການເປັນຄູ່ຮ່ວມມືກັບປະເທດ (CPF) 4
ຕາຕະລາງ 2: ບູລິມະສິດຂອງການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ ສຳລັບ ສປປ ລາວ 16
ຕາຕະລາງ 3: ແຜນງານຂອງກຸ່ມທະນາຄານໂລກ ປີງົບປະມານ 2017-2021 27

ຮູບສະແດງ

ຮູບສະແດງ 1: ທ່າອ່ຽງຂອງຄວາມທຸກຍາກຢູ່ ສປປ ລາວ 10
ຮູບສະແດງ 2: ຄ່າສະເລ່ຍຂອງການຊົມໃຊ້, ຈັດແບ່ງເປັນສິບສ່ວນ 10
ຮູບສະແດງ 3: ການຊົມໃຊ້, ໂດຍສະເພາະຂອງຜູ້ທຸກຍາກ, ເພີ່ມຂຶ້ນຊ້າກວ່າການເຕີບໂຕທາງດ້ານເສດຖະກິດ 11

I. ພາກສະຫລຸບ

1. ເອກະສານສະບັບນີ້ ແມ່ນໄດ້ສະຫຼຸບຂອບການເປັນຄູ່ຮ່ວມມື (CPF) ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ແລະ ກຸ່ມທະນາຄານໂລກ (WBG) ສຳລັບໄລຍະ 2017-2021. ຂອບການເປັນຄູ່ຮ່ວມມືດັ່ງກ່າວຂອງກຸ່ມທະນາຄານໂລກ ເລັ່ງໃສ່ໃຫ້ການສະໜັບສະໜູນ ການເຂົ້າເຖິງການລະໂອກາດຢ່າງຖ້ວນອນສຳລັບທຸກຄົນ, ລວມທັງການເຕີບໂຕສີຂຽວຢ່າງຍືນຍົງ, ການປັບປຸງການເຂົ້າເຖິງການບໍລິການດ້ານການພັດທະນາມະນຸດ ແລະ ພື້ນຖານໂຄງລ່າງ ແລະ ການລະໂອກາດສຳລັບທຸກຄົນ. ຍຸດທະສາດການເປັນຄູ່ຮ່ວມມືກັບປະເທດ (CPS) ໄລຍະ 2012-2016 ທີ່ຜ່ານມາ ໄດ້ສ້າງພື້ນຖານທີ່ໜັກແໜ້ນ ແລະ ການພົວພັນທີ່ແໜ້ນແຟ້ນກັບລັດຖະບານ ແຫ່ງ ສປປ ລາວ.

2. ຂອບການເປັນຄູ່ຮ່ວມມືກັບ ສປປ ລາວ (CPF) ໃຫ້ການສະໜັບສະໜູນແກ່ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020). ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໄດ້ມີນະໂຍບາຍທີ່ມຸ້ງໝາຍນຳເອົາ ສປປ ລາວ ເຂົ້າສູ່ເສັ້ນທາງເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ສົ່ງເສີມຄວາມອຸດົມຮັ່ງມີ ຢ່າງທົ່ວເຖິງຕາມທິດຍືນຍົງ ບົນພື້ນຖານຫຼັກການຂອງການເຕີບໂຕສີຂຽວ. ການພັດທະນາຂອງ ສປປ ລາວ ໄດ້ມີຄວາມກ້າວໜ້າຢ່າງໃຫຍ່ຫຼວງໃນໄລຍະສອງທົດສະວັດທີ່ຜ່ານມາ, ເຖິງແມ່ນວ່າຍັງມີສິ່ງທ້າທາຍທີ່ສຳຄັນ. ລາຍຮັບໄດ້ເພີ່ມຂຶ້ນ, ຄວາມທຸກຍາກໄດ້ຫລຸດລົງ, ການເຂົ້າເຖິງການບໍລິການຂອງລັດຫຼາຍດ້ານທີ່ສຳຄັນ ໄດ້ຮັບການປັບປຸງດີຂຶ້ນ ແລະ ຍ້ອນແນວນັ້ນ ສປປ ລາວ ຈຶ່ງໄດ້ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ຂອງຕົນຈຳນວນໜຶ່ງ. ດ້ວຍການເຕີບໂຕຂອງລວມຍອດຜະລິດຕະພັນໃນ (GDP) ສະເລ່ຍ 8 ສ່ວນຮ້ອຍຕໍ່ປີ ນັບແຕ່ປີ 2000 ເປັນຕົ້ນມາ, ສປປ ລາວ ໃນປັດຈຸບັນ ໄດ້ເປັນປະເທດທີ່ມີລາຍຮັບປານກາງລະດັບຕ່ຳ ທີ່ມີລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນເທົ່າກັບປະມານ 1.740 ໂດລາສະຫະລັດ ໃນປີ 2015. ເຖິງຢ່າງໃດກໍຕາມ, ການເຕີບໂຕດັ່ງກ່າວ ຍັງຖືກຂັບເຄື່ອນໂດຍການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ອຸດົມສົມບູນຂອງປະເທດເປັນອັນຕົ້ນຕໍ ແຕ່ລະດັບຄວາມສົມດຸນ, ຄວາມສາມາດປັບຕົວໄດ້ ແລະ ຄວາມຍືນຍົງກໍຍັງຕ່ຳ ຖ້າສົມທຽບໃສ່ປະເທດອື່ນໃນພາກພື້ນ. ການແຜ່ຫຼາຍຂອງບັນຫາການຂາດໂພຊະນາການ ແລະ ລະດັບການຊຶມໃຊ້ໃນຄົວເຮືອນທີ່ຍັງຕ່ຳໂດຍລວມ ເປັນສິ່ງສະແດງໃຫ້ເຫັນວ່າ ຍັງມີສິ່ງທ້າທາຍຕໍ່ຊີວິດການເປັນຢູ່ພື້ນຖານຂອງປະຊາຊົນໃນປະເທດຢູ່.

3.ໂດຍອີງໃສ່ສະພາບເງື່ອນໄຂທາງດ້ານເສດຖະກິດ ແລະ ສັງຄົມຂອງປະເທດ ແລະ ບົດຮຽນຈາກປະສົບປະການ, ຂອບການເປັນຄູ່ຮ່ວມມືນີ້ (CPF) ໄດ້ນຳໃຊ້ສາມມາດຖານໃນການຄັດເລືອກບູລິມະສິດເພື່ອສຸມໃສ່ສ້າງແຜນການມີສ່ວນຮ່ວມຂອງກຸ່ມທະນາຄານໂລກສຳລັບໄລຍະ 2017-2021. ມາດຖານການຄັດເລືອກທຳອິດແມ່ນ CPF ໃຫ້ການສະໜັບສະໜູນແກ່ບູລິມະສິດຂອງລັດຖະບານ ສປປ ລາວ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII. ມາດຖານອັນທີສອງແມ່ນສຸມໃສ່ບູລິມະສິດ ທີ່ໄດ້ກຳນົດຢູ່ໃນການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD). ອັນທີສາມແມ່ນອີງໃສ່ຂົງເຂດທີ່ທະນາຄານໂລກມີຄວາມລ້ຳເລີດໄດ້ປຽບ ລວມທັງການສົມທຽບໃສ່ແຜນງານຂອງຄູ່ຮ່ວມ ພັດທະນາອື່ນໆ. ຂອບການເປັນຄູ່ຮ່ວມມື (CPF) ຍັງສ່ອງແສງບົດຮຽນທີ່ໄດ້ຮັບຈາກການທົບທວນຜົນສຳເລັດ ແລະ ບົດຮຽນຂອງຍຸດທະສາດການ ເປັນຄູ່ຮ່ວມມືກັບສປປ ລາວ (CPS) ສຳລັບໄລຍະ 2012-2016 ທີ່ຜ່ານມາ. ແຜນງານຂອງກຸ່ມທະນາຄານໂລກທີ່ວ່າງອອກ ຍັງສ່ອງແສງເຖິງການປຶກສາຫາລືຢ່າງກວ້າງຂວາງ ກັບພາກເອກະຊົນ, ຄູ່ຮ່ວມການພັດທະນາ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນຄົ້ນຄວ້າ ແລະ ລັດຖະບານແຫ່ງ ສປປ ລາວ.

4. ການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD) ສຳລັບ ສປປ ລາວ, ຊຶ່ງໄດ້ປະຕິບັດສຳເລັດໃນເດືອນກຸມພາ 2017, ໄດ້ກຳນົດບູລິມະສິດທີ່ເປັນອັນລວມ ໃນການສ້າງສະຖາບັນໃຫ້ມີຄວາມເຂັ້ມແຂງ ແລະ ສາມເສັ້ນທາງການພັດທະນາດັ່ງນີ້: (i) ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ມີປະສິດທິພາບ; (ii) ການສົ່ງເສີມທ່າແຮງບໍ່ມຊ້ອນຂອງຂະແໜງການທີ່ບໍ່ແມ່ນຊັບພະຍາກອນ ເພື່ອສ້າງການລະໂອກາດ; ແລະ (iii) ການສ້າງຊັບສິນດ້ານການພັດທະນາມະນຸດ ໃຫ້ສາມາດຮັບໂອກາດດັ່ງກ່າວ ແລະ ເພື່ອຫລຸດຜ່ອນຄວາມສ່ຽງ ແລະ ປົກປ້ອງໝາກຜົນທີ່ໄດ້ຮັບຈາກການພັດທະນາ. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໄດ້ອີງໃສ່ການວິໄຈຜົນການວິເຄາະບັນຫາຂອງປະເທດຢ່າງ ເປັນລະບົບ (SCD) ແລະ ຂໍ້ແນະນຳກ່ຽວກັບເສັ້ນທາງການພັດທະນາດັ່ງກ່າວ.

5. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ເລັ່ງໃສ່ໃຫ້ການສະໜັບສະໜູນແກ່ ສປປ ລາວ ເພື່ອ ກ້າວໄປສູ່ການບັນລຸສອງເປົ້າໝາຍຂອງກຸ່ມທະນາຄານໂລກໄດ້ໄວຂຶ້ນ ຄື: ຍຸດຕິຄວາມທຸກຍາກທີ່ຮ້າຍແຮງ ແລະ ສົ່ງເສີມການແບ່ງປັນຄວາມອຸດົມຮັ່ງມີຢ່າງທົ່ວເຖິງ[1]. ຄວາມຄືບໜ້າໄປສູ່ການບັນລຸສອງເປົ້າໝາຍດັ່ງກ່າວ ຈະຕິດພັນກັບການຮັກສາອັດຕາການເຕີບໂຕສູງໃນປັດຈຸບັນ ພ້ອມທັງເພີ່ມທະວີຄວາມສາມາດແຈກຢາຍຜົນປະໂຫຍດຢ່າງທົ່ວເຖິງ, ຫລຸດຜ່ອນຄວາມບອບບາງຕໍ່ຄວາມສ່ຽງຕ່າງໆ ແລະ ຫັນປ່ຽນໄປສູ່ຮູບແບບການເຕີບໂຕສີຂຽວ ແລະ ມີຄວາມສາມາດປັບຕົວໄດ້.

6. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ແນໃສ່ໃຫ້ການສະໜັບສະໜູນແກ່ 10 ເປົ້າໝາຍ ໃນ ບັນດາ 20 ເປົ້າໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII, ຊຶ່ງຖືກຄັດເລືອກໂດຍອີງໃສ່ຂົງເຂດທີ່ກຸ່ມທະນາຄານໂລກມີຄວາມລີ້ງເລີກໄດ້ປຽບ, ຄວາມຕ້ອງການຂອງ ສປປ ລາວ ແລະ ອຸປະສັກຕົ້ນຕໍຕໍ່ການຫລຸດຜ່ອນຄວາມທຸກຍາກ ແລະ ການແບ່ງປັນຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ທີ່ໄດ້ກຳນົດໃນບົດວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD). ຜົນໄດ້ຮັບທີ່ຄາດໝາຍໄວ້ ມີຄວາມສອດຄ່ອງຢ່າງສະໜິດແໜ້ນກັບບັນດາຄາດໝາຍຂອງເປົ້າໝາຍການພັດທະນາແບບຍືນຍົງ (SDGs).

ຕາຕະລາງ 1: ຂົງເຂດຈຸດສຸມ ແລະ ຈຸດປະສົງ ຂອງຂອບການເປັນຄູ່ຮ່ວມມືກັບ ສປປ ລາວ (CPF)

ສະໜັບສະໜູນການເຕີບໂຕທີ່ສົມດຸນ

- ປັບປຸງວຽກງານການເງິນຂອງລັດ ໃຫ້ກ້າວ ເຂົ້າສູ່ເສັ້ນທາງທີ່ໝັ້ນຄົງຍືນຍົງ ແລະ ສະໜັບສະໜູນສະເຖຍລະພາບຂອງ ຂະແໜງການເງິນ
- ສ້າງຄວາມສະດວກສະບາຍໃຫ້ແກ່ການ ດຳເນີນທຸລະກິດ
- ລົງທຶນໃສ່ພື້ນຖານໂຄງລ່າງ ເພື່ອການເຕີບໂຕ ແລະ ຄວາມສົມດຸນ

ລົງທຶນໃສ່ການພັດທະນາຄົນ

- ຫລຸດຜ່ອນການແຜ່ຫຼາຍຂອງການຂາດ ສານອາຫານ
- ປັບປຸງຄຸນນະພາບຂອງການສຶກສາຂັ້ນປະຖົມ ແລະ ອະນຸບານ ແລະ ສ້າງຄວາມຈູງໃຈ ໃຫ້ເດັກຍິງມາໂຮງຮຽນ
- ປັບປຸງການເຂົ້າເຖິງການບໍລິການດ້ານສາທາ ລະນະສຸກທີ່ມີຄຸນນະພາບສູງ
- ຫລຸດຜ່ອນຄວາມບອບບາງ-ອ່ອນແອ ແລະ ເພີ່ມການເຂົ້າເຖິງການບໍລິການດ້ານສັງ ຄົມຢ່າງທົ່ວເຖິງ

ປົກປັກຮັກສາສິ່ງແວດລ້ອມ

- ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະ ຊາດຢ່າງຍືນຍົງ
- ປັບປຸງການຄຸ້ມຄອງຄວາມສ່ຽງຈາກໄພພິ ບັດໃຫ້ເຂັ້ມແຂງ ແລະ ສ້າງຄວາມເຂັ້ມແຂງ ທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ ແລະ ໄພພິບັດ

ບັນຫາທີ່ພົວພັນກັບຫຼາຍຂະແໜງການ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ

7. ການຊ່ວຍເຫຼືອດ້ານການເງິນ ຂອງຂອບການເປັນຄູ່ຮ່ວມມືກັບປະເທດ (CPF). ການຊ່ວຍເຫຼືອດ້ານການເງິນຂອງ CPF ຈະສະໜັບສະໜູນການພັດທະນາຂອງ ສປປ ລາວ ໂດຍຜ່ານບ້ອງທຶນຂອງສະມາຄົມການພັດທະນາສາກົນ (IDA) 18 ທີ່ຈັດສັນໃຫ້ແກ່ ສປປ ລາວ ສຳລັບປີງົບປະມານ 2018-2020 ໃນມູນຄ່າລະຫວ່າງ 242 ລ້ານ ຫາ 272 ລ້ານ ໂດລາສະຫະລັດ. ບ້ອງທຶນ IDA18 ໄດ້ເພີ່ມຂຶ້ນປະມານ 60 ສ່ວນຮ້ອຍ ທຽບໃສ່ ທຶນຊ່ວຍເຫຼືອຂອງບ້ອງທຶນ IDA17 ສຳລັບປີງົບປະມານ 2015-2017 ທີ່ມີມູນຄ່າປະມານ 173 ລ້ານ ໂດລາສະຫະລັດ. ການສະໜອງທຶນ IDA ໃໝ່ດັ່ງກ່າວ ຈະເປັນການເພີ່ມເຕີມຈາກບັນດາໂຄງການທີ່ໄດ້ຮັບທຶນຈາກ IDA ທີ່ຍັງດຳເນີນຢູ່ໃນປັດຈຸບັນ ຊຶ່ງມີມູນຄ່າທັງໝົດ

1. ສອງເປົ້າໝາຍຂອງກຸ່ມທະນາຄານໂລກແມ່ນ: (1) ຫລຸດຜ່ອນອັດຕາສ່ວນຂອງປະຊາຊົນທີ່ດຳລົງຊີວິດໂດຍອີງໃສ່ລາຍຮັບຕ່ຳກວ່າ 1,25 ໂດລາສະຫະລັດ ຕໍ່ມື້ ໃຫ້ຍັງເຫຼືອ 3 ສ່ວນຮ້ອຍ ໃນທົ່ວໂລກໃນປີ 2030, ແລະ (2) ປັບປຸງມາດຕະຖານຊີວິດການເປັນຢູ່ຂອງປະຊາກອນ 40 ສ່ວນຮ້ອຍທີ່ມີລາຍຮັບຕ່ຳທີ່ສຸດ . ເບິ່ງ World Bank Group Strategy 2013.

347,5 ລ້ານ ໂດລາສະຫະລັດ ໃນເດືອນກຸມພາ 2017 ບອກກັບກອງທຶນຮ່ວມຈາກບາງຄູ່ຮ່ວມພັດທະນາ ຈຳນວນ 60 ລ້ານ ໂດລາສະຫະລັດ. ນອກຈາກນັ້ນ, ຍັງຈະມີການສຶກສາ ກ່ຽວກັບວິທີທາງເລືອກເພື່ອນຳໃຊ້ທຶນຂອງ IDA ທີ່ສະໜອງໃຫ້ແກ່ພາກພື້ນ ເປັນຕົ້ນສຳລັບຂະແໜງພະລັງງານ. ອົງການການເງິນສາກົນ (IFC) ໄດ້ມີການສະໜອງທຶນທັງໝົດໃນປັດຈຸ ບັນ ຈຳນວນ 35 ລ້ານ ໂດລາສະຫະລັດ. ການສະໜອງທຶນຂອງກຸ່ມທະນາຄານໂລກທີ່ຄາດວ່າຈະເພີ່ມຂຶ້ນ ໄດ້ສ້າງການລະໂອກາດໃນການຂະຫຍາຍໝາກຜົນທີ່ຄາດວ່າຈະໄດ້ຮັບຈາກການພັດທະນາ ຕໍ່ຂົງເຂດສຳຄັນຕິດພັນກັບການເຕີບໂຕສີຂຽວ ແລະ ບັນຫາການຂາດໂພຊະນາການ ໂດຍຜ່ານໂຄງການທີ່ສຳຄັນໃນດ້ານສາທາລະນະສຸກ, ການສຶກສາ, ກະສິກຳ ແລະ ການສະໜອງນ້ຳ ສະອາດ ແລະ ສຸຂະອະນາໄມຢູ່ເຂດຊົນນະບົດ, ຊຶ່ງຂົງເຂດທີ່ກ່າວມາສຸດທ້າຍນີ້ແມ່ນສາເຫດທີ່ພື້ນເດັ່ນອັນດັບທີສອງ ຂອງບັນຫາເດັກທີ່ມີລວງສູງຫລຸດມາດຕະຖານໃນທົ່ວໂລກ.

8. ກົນໄກການປະສານງານ ແລະ ການຮ່ວມມື ໃນຮູບແບບ ກຸ່ມທະນາຄານໂລກອັນດຽວ ລວມມີ ທະນາຄານໂລກ (WB), ອົງການການເງິນສາກົນ (IFC) ແລະ ອົງການຄ້ຳປະກັນການລົງທຶນແບບຫຼາຍຝ່າຍ (MIGA) ມີຄວາມເຂັ້ມແຂງ ແລະ ຈະສືບຕໍ່ເພີ່ມທະວີຂຶ້ນ. ສຳລັບແຕ່ລະຜົນໄດ້ຮັບທີ່ຄາດໝາຍໄວ້, ຂອບການເປັນຄູ່ຮ່ວມມື (CPF) ຄາດວ່າຈະນຳໃຊ້ທາງເລືອກວິທີການທີ່ດັດປັບໃຫ້ສອດຄ່ອງກັບສະພາບ ໂດຍນຳໃຊ້ຄວາມຮູ້ໃນອົງກອນກຸ່ມທະນາຄານໂລກ, ຄວາມສາມາດເຕົ້າໂຮມຜູ້ທີ່ສ່ວນຮ່ວມ ແລະ ການລົງທຶນທາງດ້ານການເງິນ ຂອງກຸ່ມທະນາຄານໂລກ.

9. ຄວາມສ່ຽງລວມ ຕໍ່ການບັນລຸຈຸດປະສົງ ໃນຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໄດ້ຖືກປະເມີນຢູ່ໃນ *ລະດັບສູງສົມຄວນ.* ສປປ ລາວໄດ້ປະເຊີນກັບຄວາມສ່ຽງຈຳນວນໜຶ່ງ ແລະ ຄວາມບອບບາງ ທີ່ສາມາດເປັນອຸປະສັກ ຕໍ່ການບັນລຸເປົ້າໝາຍທາງດ້ານເສດຖະກິດ ແລະ ສັງຄົມຂອງ ສປປ ລາວ ແລະ ຕໍ່ຜົນໄດ້ຮັບທີ່ຄາດໝາຍໄວ້ ຂອງບັນດາໂຄງການທີ່ໄດ້ຮັບການສະໜັບສະໜຸນຈາກກຸ່ມທະນາຄານໂລກ ພາຍໃຕ້ຂອບ CPF. ຄວາມສ່ຽງຕົ້ນຕໍແມ່ນພົວພັນກັບການບໍລິຫານລັດທີ່ບໍ່ເຂັ້ມແຂງ; ສະພາບເສດຖະກິດມະຫາພາກມີຄວາມບອບບາງ ແລະ ມີຄວາມສ່ຽງສູງຈາກບັນຫາເຄັ່ງຕຶງດ້ານໜີ້ສິນ; ແລະ ການຈັດຕັ້ງປະຕິບັດນະໂຍບາຍຄຸ້ມຄອງຊັບພະຍາກອນທຳມະຊາດຍັງບໍ່ທັນເຂັ້ມແຂງ. ການມີຄວາມມຸ່ງໝັ້ນທາງດ້ານການເມືອງທີ່ໜັກແໜ້ນ ຈະເປັນກະແຈເພື່ອແກ້ໄຂສິ່ງທ້າທາຍທາງດ້ານການບໍລິຫານລັດຢູ່ ສປປ ລາວ ແລະ ລັດຖະບານຊຸດໃໝ່ກໍ່ໄດ້ສະແດງເຖິງຄວາມມຸ້ງໝັ້ນດັ່ງກ່າວ.

II. ສະພາບເງື່ອນໄຂ ແລະ ອາລະການພັດທະນາຂອງ ສປປ ລາວ

ການພັດທະນາເສດຖະກິດໃນຊຸມປີທີ່ຜ່ານມາ

10. ການຫັນປ່ຽນທີ່ຈະແຈ້ງພາຍໃຕ້ລັດຖະບານ ແຫ່ງ ສປປ ລາວ ຊຸດໃໝ່ທີ່ໄດ້ຮັບການ ແຕ່ງຕັ້ງໃນເດືອນເມສາ 2016 ແມ່ນຄວາມມຸ່ງໝັ້ນທີ່ຈະແຈ້ງ ແລະ ເປັນຮູບປະທຳຫຼາຍກວ່າເກົ່າ ຕໍ່ຄວາມຍືນຍົງ ແລະ ການເຕີບໂຕສີຂຽວ[2]. ເຖິງແມ່ນວ່າການພັດທະນາຊັບພະຍາກອນ ທຳມະຊາດ ຍັງຈະສືບຕໍ່ເປັນປັດໄຈຂັບເຄື່ອນຕົ້ນຕໍຂອງການເຕີບໂຕທາງດ້ານເສດຖະກິດ, ແຕ່ຖ້າຫາກ ບໍ່ມີການປັບປຸງລະບົບເພື່ອຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງແລ້ວ, ຜົນກະທົບທາງລົບຕໍ່ສັງຄົມ ແລະ ສິ່ງແວດລ້ອມຈະບໍ່ສາມາດປົວ ແປງຄືນໄດ້ ແລະ ພາຍໃນເວລາອີກບໍ່ດົນ ຜົນກະທົບດ້ານລົບດັ່ງກ່າວອາດຈະສູງລື່ນຜົນປະໂຫຍດທາງດ້ານເສດຖະກິດຈາກການຂຸດຄົ້ນ ແລະ ຈະ ຫລຸດຜ່ອນການລະໂອກາດໃນອະນາຄົດໄດ້. ວິໄສທັດ ໄລຍະ 15 ປີ, ຍຸດທະສາດ ໄລຍະ 10 ປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ທີ່ຖືກຮັບຮອງເອົາໂດຍສະພາແຫ່ງຊາດທີ່ໄດ້ຮັບການເລືອກຕັ້ງໃໝ່, ທັງໝົດນີ້ໄດ້ເປັນກຳລັງໜູນໃຫ້ແກ່ຄວາມມຸ້ງໝັ້ນໃນການຫັນ ປ່ຽນກອບຄວາມຄິດໄປສູ່ການເຕີບໂຕສີຂຽວ ແລະ ຄວາມຍືນຍົງ ຊຶ່ງເປັນທິດທາງເພື່ອແນະນຳລັດຖະບານໃຫ້ກ້າວໄປສູ່ການບັນລຸເປົ້າໝາຍຂອງຕົນ ໃນການເຮັດໃຫ້ ສປປ ລາວ ກາຍເປັນປະເທດທີ່ມີລາຍຮັບປານກາງລະດັບສູງ ໃນປີ 2030.

---

2. ກຸ່ມທະນາຄານໂລກໃຫ້ຄຳນິຍາມການເຕີບໂຕສີຂຽວວ່າເປັນ ການເຕີບໂຕທີ່ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ, ສະອາດ ເນື່ອງຈາກມັນຫລຸດຜ່ອນມົນລະພິດ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ, ເຂັ້ມແຂງຫົນທານ ເພາະມັນຮັບຜິດຊອບຕໍ່ *ໄພອັນຕະລາຍທາງທຳມະຊາດ* ແລະ ບົດບາດຂອງການຄຸ້ມຄອງສິ່ງແວດລ້ອມ ແລະ ທຶນທຳມະຊາດ ໃນ*ການສະກັດກັ້ນໄພພິບັດ ທີ່ເກີດຂຶ້ນຕົວຈິງ* (ທະນາຄານໂລກ 2012. Inclusive Green Growth: The Pathway to Sustainable Development).

11. ເສດຖະກິດລາວ ຍັງສືບຕໍ່ຂະຫຍາຍຕົວຢ່າງແຂງແຮງ; ເຖິງແມ່ນວ່າ ອັດຕາການເຕີບໂຕໃນຊຸມປີທີ່ຜ່ານມາມໍ່ໆນີ້ ໄດ້ມີລະດັບຕ່ຳກວ່າອັດຕາສະເລ່ຍຜ່ານມາ. ໃນປີ 2016, ການເຕີບໂຕທາງດ້ານເສດຖະກິດ ມີລະດັບປະມານ 7 ສ່ວນຮ້ອຍ, ທຽບໃສ່ 7,4 ສ່ວນຮ້ອຍໃນປີ 2015 ແລະ ສະເລ່ຍປະມານ 8 ສ່ວນຮ້ອຍແຕ່ປີ 2000 ເປັນຕົ້ນມາ, ຊຶ່ງສ່ອງແສງໃຫ້ເຫັນວ່າຜົນຜະລິດດ້ານ ບໍ່ແຮ່ໂດຍລວມບໍ່ເພີ່ມຂຶ້ນ, ການຂະຫຍາຍຕົວຂອງສິນເຊື່ອ ແລະ ການໃຊ້ຈ່າຍຂອງພາກລັດມີຈັງຫວະທີ່ຊ້າລົງ. ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນ ໄດ້ບັນລຸ 1.740 ໂດລາສະຫະລັດ ໃນປີ 2015, ຊຶ່ງເຮັດໃຫ້ ສປປ ລາວ ໄດ້ເປັນປະເທດທີ່ມີລາຍຮັບປານກາງລະດັບຕ່ຳ. ຍ້ອນທຶນທຳມະຊາດກວມອັດຕາສ່ວນ 45 ສ່ວນຮ້ອຍຂອງຄວາມຮັ່ງມີຂອງຊາດ (2013), ການເພີ່ມຂຶ້ນຂອງການນຳໃຊ້ຊັບພະຍາກອນທຳມະຊາດ ໄດ້ປະກອບ ສ່ວນສະເລ່ຍ 3 ຈຸດສ່ວນຮ້ອຍຂອງການເຕີບໂຕທັງໝົດ ໃນໄລຍະດັ່ງກ່າວ. ໃນເວລາດຽວກັນ, ຄວາມເສຍຫາຍດ້ານສິ່ງແວດລ້ອມຢູ່ ສປປ ລາວ ກໍມີທ່າອ່ຽງເພີ່ມຂຶ້ນ ໂດຍຊັບພະຍາກອນທຳມະຊາດສະເລ່ຍຕໍ່ຫົວຄົນ ໄດ້ຫລຸດລົງແບບກ້າວກະໂດດເຖິງຫົກເທົ່າ ໃນລະຫວ່າງປີ 2000 ຫາ 2013. ການເຕີບໂຕໃນຊຸມປີ 2000 ໄດ້ຖືກຂັບເຄື່ອນໂດຍບໍ່ແຮ່; ແຕ່ ການປະ ກອບສ່ວນຂອງຂະແໜງດັ່ງກ່າວໄດ້ມີທ່າອ່ຽງຫລຸດລົງໃນຊຸມ ປີ ຜ່ານມາ, ຊຶ່ງສະແດງເຖິງການຫລຸດລົງຂອງລາຄາ ແລະ ສະພາບແວດລ້ອມດ້ານລະບຽບການບໍ່ທັນເຂັ້ມແຂງ. ຫຼັງຈາກນັ້ນ, ໂຄງການເຂື່ອນໄຟຟ້າ, ຊຶ່ງຄາດວ່າຈະຕອບສະໜອງຄວາມຕ້ອງ ການຂອງບັນດາປະເທດໃກ້ຄຽງເປັນສ່ວນໃຫຍ່, ໄດ້ເປັນແຫຼ່ງຕົ້ນຕໍຂອງການເຕີບໂຕ ແລະ ສປປ ລາວ ໄດ້ ເພີ່ມຄວາມສາມາດຕິດຕັ້ງຂຶ້ນສິບທົບ ໃນລະຫວ່າງປີ 2000 ຫາ 2016 ເຖິງລະດັບສູງກວ່າ 6.000 ເມກາວັດ, ຊຶ່ງສ່ວນຫຼາຍແມ່ນຜ່ານການເຮັດສັນ ຍາກັບພາກເອກະຊົນພາຍໃນ ແລະ ຕ່າງປະເທດ.

12. ຫວ່າງມໍ່ໆມານີ້, ການເຕີບໂຕໄດ້ມີພື້ນຖານທີ່ກວ້າງຂວາງຫຼາຍຂຶ້ນ. ການບໍລິການໄດ້ຂະຫຍາຍຕົວ ລວມທັງການ ຄ້າຍົກ ແລະ ການຄ້າຍ່ອຍ, ການທ່ອງທ່ຽວ ແລະ ການຂົນສົ່ງ ສ່ວນໜຶ່ງຍ້ອນການກະຈາຍຜົນປະໂຫຍດຈາກໂຄງການຊັບພະຍາກອນທຳມະຊາດ ການເປີດກວ້າງເສດຖະກິດ (ຂະແໜງທະນາຄານ, ການຂົນສົ່ງ ແລະ ອື່ນໆ) ລວມທັງການຂະຫຍາຍຕົວທາງດ້ານການເງິນ-ງົບປະມານ. ເຖິງຢ່າງໃດກໍຕາມ, ການບໍລິການຍັງສຸມໃສ່ແຕ່ຂະແໜງການ ທີ່ມີມູນຄ່າເພີ່ມຕ່ຳ. ກະສິກຳທີ່ສ້າງວຽກເຮັດງານທຳໃຫ້ແກ່ສອງສ່ວນສາມຂອງກຳລັງ ແຮງງານໃນປີ 2012 (ຕາມຂໍ້ມູນຫຼ້າສຸດທີ່ມີ) ຍັງມີລັກສະນະການຜະລິດແບບກຸ້ມຢູ່ກຸ້ມກິນ ທີ່ມີສະມັດຕະພາບການຜະລິດຕ່ຳ. ແຕ່ກໍມີສິ່ງສະແດງ ເຖິງການເລີ່ມການຜະລິດເຂົ້າເປັນສິນຄ້າ ແລະ ພືດຊະນິດອື່ນກໍ່ມີຄວາມສຳຄັນເພີ່ມຂຶ້ນ, ເຊັ່ນ: ຜັກຕ່າງໆ, ສາລີ, ໝາກຖົ່ວ, ກາເຟ, ກ້ວຍ, ຢາງພາລາ ແລະ ອື່ນໆ. ອຸດສາຫະກຳປຸງແຕ່ງໄດ້ມີການຂະຫຍາຍຕົວ, ນອກຈາກການຜະລິດເຄື່ອງນຸ່ງຫົ່ມທີ່ເຄີຍມີມາແລ້ວ, ໄດ້ມີອຸດສາຫະກຳປຸງແຕ່ງປະເພດອື່ນ ທີ່ເລີ່ມຂະຫຍາຍຕົວ ສ່ວນຫຼາຍແມ່ນມາຈາກເຂດເສດຖະກິດພິເສດ ຊຶ່ງ ກໍສະແດງວ່າ ບໍລິສັດຂອງ ສປປ ລາວ ສາມາດເຂົ້າຮ່ວມໃນຕ່ອງໂສ້ການສະ ໜອງຂອງພາກພື້ນໄດ້ຫຼາຍຂຶ້ນຢ່າງມີປະສິດທິຜົນ. ນອກຈາກນັ້ນ, ການເຕີບໂຕຢ່າງວ່ອງໄວ ແລະ ການຂະຫຍາຍຕົວຂອງພື້ນຖານຂອງຜູ້ຊົມໃຊ້ ກໍໄດ້ ຊຸກຍູ້ກິດຈະກຳກໍ່ສ້າງໃນອະສັງລິຫະມະຊັບ ເພື່ອເປັນທຸລະກິດ ແລະ ທີ່ຢູ່ອາໄສ.

13. ແນວໂນ້ມທາງດ້ານເສດຖະກິດ ສຳລັບໄລຍະກາງ ໂດຍລວມຍັງມີລັກສະນະທາງບວກ ຖ້າຫາກມີການປັບປຸງການ ຄຸ້ມຄອງເສດຖະກິດມະຫາພາກ, ການເພີ່ມທະວີວຽກງານວາງແຜນ ແລະ ການຄຸ້ມຄອງໃນຂະແໜງໄຟຟ້າ ແລະ ກາ ນປະຕິຮູບທີ່ປັບປຸງສະພາບແວດລ້ອມການເຮັດທຸລະກິດໃຫ້ດີຂຶ້ນ. ອີງໃສ່ສະພາບຂໍ້ມູນພື້ນຖານ, ການເຕີບໂຕຄາດວ່າຈະມີລະ ດັບສະເລ່ຍປະມານ 7 ສ່ວນຮ້ອຍຕໍ່ປີ ເນື່ອງຈາກສະພາບເສດຖະກິດຂອງພາກພື້ນມີທ່າອ່ຽງທີ່ເອື້ອອຳນວຍ ໄດ້ເປັນປັດໄຈຕົວດຶງທີ່ສຳຄັນ ສຳລັບເສດຖະກິດຂອງ ສປປ ລາວ. ຫຼັງຈາກໄດ້ມີການຫລຸດລົງໃນຊຸມປີທີ່ຜ່ານ ມາ, ລາຄາທອງຄາດວ່າຈະເພີ່ມຂຶ້ນຄືນ. ການຜະລິດໄຟຟ້າປະມານ 500-1.000 ເມກາວັດ ຕໍ່ປີ ຄາດວ່າຈະເພີ່ມຕື່ມໃຫ້ແກ່ຄວາມສາມາດຜະລິດຂອງລະບົບໄຟຟ້າ ໃນໄລຍະກາງ ເນື່ອງຈາກຫຼາຍໂຄງ ການໄຟຟ້າໄດ້ນຳເຂົ້າສູ່ ການດຳເນີນງານ. ສະພາບດັ່ງກ່າວ ຈະຮັບປະກັນການເພີ່ມຂຶ້ນຂອງມູນຄ່າການສົ່ງອອກຂອງ ສປປ ລາວ ແລະ ການລົງທຶນໂດຍກົງຂອງຕ່າງປະເທດ. ຂະແໜງການທີ່ບໍ່ແມ່ນຊັບພະຍາກອນ ຄາດວ່າຈະສາມາດສືບຕໍ່ຂະຫຍາຍຕົວຖ້າວ່າ ລາຍຮັບ ຈາກຂະແໜງ ຊັບພະຍາກອນໄດ້ກະຈາຍໄປເຖິງ ຂະແໜງການອື່ນ ຊຶ່ງຈະຊ່ວຍກະຕຸ້ນຄວາມຕ້ອງການ ແລະ ຍ້ອນວ່າການເຊື່ອມໂຍງຢ່າງສະໜິດແໜ້ນພາຍ ໃຕ້ປະຊາຄົມເສດຖະກິດອາຊຽນ (AEC) ໄດ້ເປີດກາລະໂອກາດໃຫ້ແກ່ພາກເອກະຊົນ. ເຖິງຢ່າງໃດກໍຕາມ, ຖ້າຂາດການປັບປຸງການຄຸ້ມຄອງ ເສດຖະກິດ, ຄວາມສ່ຽງທາງດ້ານເສດຖະກິດມະຫາພາກ ແລະ ຄວາມເປັນໄປໄດ້ຂອງຜົນກະທົບທາງລົບຕໍ່ການເຕີບໂຕ ແລະ ຊີວິດການເປັນຢູ່ ຍັງຈະຢູ່ໃນລະດັບສູງ. ເຖິງແມ່ນວ່າ ລັດຖະບານໄດ້ສະເໜີການປະຕິຮູບຈຳນວນໜຶ່ງ, ແຕ່ຜົນການປະຕິບັດຕົວຈິງຍັງມີລັກສະນະຄ່ອຍເປັນຄ່ອຍ ໄປຢູ່. ເຊັ່ນດຽວກັນ, ເພື່ອສ້າງການໂອກາດສຳລັບພາກເອກະຊົນ, ມັນຮຽກຮ້ອງໃຫ້ມີການປະຕິຮູບໃນຫຼາຍຂົງເຂດທີ່ຈະຊ່ວຍ ສປປ ລາວ ປັບ ປຸງດີຂຶ້ນຈາກອັນດັບທີ່ຕ່ຳຫຼາຍໃນການຈັດອັນດັບຂອງສາກົນ ໃນດ້ານຄວາມສາມາດແຂ່ງຂັນ, ລວມທັງການປັບປຸງດ້ານການບໍລິຫານຄຸ້ມຄອງ

ຊຶ່ງມີຄວາມສຳຄັນທີ່ສຸດເພື່ອເຮັດໃຫ້ການເຕີບໂຕຂອງພາກເອກະຊົນມີຄວາມຟົດຟື້ນ, ເຊັ່ນ: ການແກ້ໄຂບັນຫາຜົນປະໂຫຍດສະເພາະກຸ່ມຄົນ ແລະ ການໄດ້ຮັບການປະຕິບັດທີ່ເທົ່າທຽມກັນ. ການປະຕິຮູບທີ່ສຳຄັນຂອງຂະແໜງ ພະລັງານ ລວມເອົາມາດຕະການເພື່ອກຳນົດຕະຫຼາດເພື່ອຮອງຮັບການຜະລິດໄຟຟ້າທີ່ເພີ່ມຂຶ້ນໄວ, ວາງແຜນຂະຫຍາຍການຜະລິດໃນອະນາຄົດ ເພື່ອປັບປຸງການຄຸ້ມຄອງຊັບພະຍາກອນນ້ຳ ສຳລັບການນຳໃຊ້ຕ່າງໆ, ເພີ່ມປະສິດທິພາບ ແລະ ຮັບປະກັນໃຫ້ມີຄວາມສົມດຸ່ ລະຫວ່າງໜີ້ສິນ ແລະ ການຂາຍ. ຖ້າຫາກມີການຫລຸດລົງຕື່ມຂອງລາຄາທອງ, ຄຳ, ກາເຟ ແລະ ຢາງພາລາ, ມັນສາ ມາດນຳໄປສູ່ການຫລຸດຜ່ອນຜົນຜະລິດຂອງບໍ່ແຮ່ ແລະ ກະສິກຳ, ສ້າງຜົນກະທົບທາງລົບຕໍ່ຊີວິດການເປັນຢູ່ ແລະ ສ້າງຄວາມກົດດັນເພີ່ມຂຶ້ນຕື່ມຕໍ່ງົບ ປະມານຂອງລັດ.

14. ນະໂຍບາຍງົບປະມານໃນໄລຍະປານກາງ ຈະເລັ່ງໃສ່ປັບປຸງຄວາມຍືນຍົງຂອງບັນຊີການເງິນຂອງລັດ; ແຕ່ ແຜນການລົງທຶນຂອງລັດໃນປັດຈຸບັນທີ່ມີຄາດໝາຍສູງຄາດວ່າຈະເຮັດໃຫ້ການຂາດດຸນແລະໜີ້ສິນຢູ່ໃນລະດັບສູງ. ໃນເບື້ອງລາຍຮັບ, ກົດໝາຍວ່າດ້ວຍສ່ວຍສາອາກອນ ໄດ້ຖືກດັດແກ້ເພື່ອຍົກອັດຕາອາກອນຊົມໃຊ້ ຂຶ້ນສຳລັບສິນຄ້າບາງປະເພດ (ຊຶ່ງຈະມີຜົນບັງຄັບໃຊ້ແຕ່ປີ 2018 ເປັນຕົ້ນໄປ ແລະ ຄາດວ່າຈະສ້າງລາຍຮັບເພີ່ມປະມານ 0,3 ສ່ວນຮ້ອຍຂອງ GDP) ແລະ ໄດ້ມີການພິຈາລະນານຳໃຊ້ອາກອນໃໝ່ຈຳນວນໜຶ່ງ (ອາກອນທີ່ດິນ, ສິ່ງແວດລ້ອມ ແລະ ຊັບສິນ). ເພື່ອປັບປຸງການຄຸ້ມຄອງອາກອນ, ລັດຖະບານໄດ້ປັບປຸງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເພື່ອເຮັດໃຫ້ການຍື່ນຟອມເສຍອາກອນມີຄວາມກະທັດຮັດກວ່າເກົ່າ ແລະ ໄດ້ດັດແກ້ບົດແນະນຳການຈັດຕັ້ງປະຕິບັດເພື່ອຮັບ ປະກັນໃຫ້ການບັງຄັບ ປະຕິບັດມີປະສິດທິຜົນດີກວ່າເກົ່າ. ລາຍຮັບຈາກອຸດສາຫະກຳບໍ່ແຮ່ (129 ລ້ານ ໂດລາສະຫະລັດ ໃນປີ 2015-2016) ຈະຫລຸດລົງເປັນລຳດັບ ເນື່ອງຈາກສອງກິດຈະການທີ່ນຳໜ້າ ຈະຫລຸດຜ່ອນການເຄື່ອນໄຫວລົງເປັນກ້າວໆພາຍໃນຫ້າປີຂ້າງໜ້າ. ລາຍຮັບດັ່ງກ່າວຈະຖືກທົດແທນ ໂດຍລາຍຮັບຈາກຂະແໜງໄຟຟ້າທີ່ຈະເພີ່ມຂຶ້ນ (151 ລ້ານ ໂດລາສະຫະລັດ ໃນປີ 2015-2016) ເປັນລຳດັບໃນໄລຍະຍາວ. ໃນເວລາດຽວກັນ, ລັດຖະບານກຳມີເຈດຈຳນົງໃນການຄວບຄຸມຢ່າງຮັດກຸມ ຕໍ່ການຮັບລັດຖະກອນໃໝ່ ແລະ ລາຍຈ່າຍເງິນເດືອນ, ຍົກລະດັບລະບຽບການຈັດຊື້ຂອງລັດ ແລະ ປັບປຸງການຄຸ້ມຄອງການລົງທຶນຂອງລັດໃຫ້ດີຂຶ້ນ. ມາດຕະການຄວບຄຸມທີ່ເຂັ້ມງວດ, ການເຈລະຈາເງື່ອນໄຂຂອງໜີ້ສິນຄືນໃໝ່ ແລະ ການກຳນົດການຈັດສັນທຶນຈຳນວນ 30 ສ່ວນຮ້ອຍຂອງລາຍຈ່າຍລົງທຶນ ເພື່ອຊຳລະໜີ້ສິນຄ້າງຄ້າ ຄາດວ່າຈະສາມາດແກ້ໄຂໜີ້ສິນຄ້າງຈ່າຍໃຫ້ຫລຸດລົງຢ່າງເປັນລຳດັບ. ບັນດາມາດຕະການດັ່ງກ່າວ ຄາດວ່າຈະຊ່ວຍສ້າງກຳລັງແຮງດ້ານການເງິນຂອງລັດຖະບານ (fiscal space). ແຕ່ຖ້າຫາກບໍ່ມີມາດຕະການເພີ່ມເຕີມ, ກຳລັງແຮງທາງດ້ານການເງິນຂອງລັດຖະບານ (fiscal space) ດັ່ງກ່າວ ຄາດວ່າຈະຖືກນຳໃຊ້ເຂົ້າໃນການປະກອບສ່ວນຂອງລັດຖະບານ ໃນໂຄງການສ້າງທາງລົດໄຟສ່ວນທີ່ຜ່ານປະເທດລາວຂອງສາຍ ຄຸນໝິງ-ສິງກະໂປ, ຊຶ່ງຈະເຮັດໃຫ້ການຂາດດຸນງົບປະມານ ແລະ ໜີ້ສິນລັດຍັງມີລະດັບສູງ.

15. ເມື່ອ ສປປ ລາວ ກ້າວໄປສູ່ການມີຄວາມສ່ຽງສູງ ດ້ານພາລະໜີ້ສິນ, ໂອກາດສຳລັບການກູ້ຢືມໃນອະນາຄົດໄດ້ຫຼຸດລົງຢ່າງຫຼວງຫຼາຍ ແລະ ຄວາມເປັນຫ່ວງ ກ່ຽວກັບຄວາມຍືນຍົງຂອງໜີ້ສິນໄດ້ເພີ່ມຂຶ້ນ. ໃນປີ 2016, ລາຍຈ່າຍດອກເບ້ຍຄາດວ່າ ມີມູນຄ່າປະມານ 1,5 ສ່ວນຮ້ອຍຂອງ GDP, ຊຶ່ງລົ້ນມູນຄ່າງົບປະມານທີ່ຈັດສັນໃຫ້ແກ່ຂະແໜງກະສິກຳ. ຄວາມຕ້ອງການໃນການຊຳລະໜີ້ (ຕົ້ນທຶນແລະດອກເບ້ຍ) ຄາດວ່າຈະເພີ່ມຂຶ້ນຈາກ 7 ສ່ວນຮ້ອຍຂອງ GDP ໃນໄລຍະທົດສະວັດທີ່ຜ່ານມາ ເປັນ 12 ສ່ວນຮ້ອຍ ໃນໄລຍະ 2016 ຫາ 2020. ການຄາດເຄື່ອນທາງດ້ານງົບປະມານ ຕົວຢ່າງ ກໍລະນີທີ່ມູນຄ່າກໍ່ສ້າງຂອງໂຄງການທາງລົດໄຟເພີ່ມຂຶ້ນ ຫຼື ກໍລະນີມີຄວາມຫຍຸ້ງຍາກຫຼາຍຂຶ້ນໃນການເຂົ້າເຖິງຕະຫຼາດເງິນທຶນ ເນື່ອງຈາກສະພາບຕະຫລາດທຶນຢູ່ຕ່າງປະເທດມີຄວາມຮັດກຸມ ອາດຈະມີຜົນເຮັດໃຫ້ການຊຳລະໜີ້ບໍ່ມີຄວາມຍືນຍົງ. ເພື່ອຮັບປະກັນໃຫ້ພາລະແບກຫາບໜີ້ສິນມີຄວາມຍືນຍົງ ມັນຮຽກຮ້ອງໃຫ້ມີການປັບປຸງງົບປະມານໃຫ້ມີຄວາມເຂັ້ມແຂງຢ່າງເປັນລຳດັບ ແລະ ຫຼຸດຜ່ອນການຂາດດຸນ ພ້ອມທັງ ການປັບປຸງການຄຸ້ມຄອງໜີ້ສິນພາກລັດ, ຊຶ່ງຈະເຮັດໃຫ້ມີຄວາມຮັບຮູ້ເພີ່ມຂຶ້ນ ກ່ຽວກັບຄວາມສ່ຽງຂອງການກູ້ຢືມທຶນທີ່ບໍ່ມີເງື່ອນໄຂຜ່ອນຜັນ ແລະ ການຈັດລຽງບຸລິມະສິດ ເພື່ອຮັບປະກັນໃຫ້ມີການກູ້ຢືມ ສະເພາະແຕ່ສຳລັບໂຄງການທີ່ເປັນບຸລິມະສິດ, ເລືອກໂຄງການທີ່ເປັນໜ້າເຊື່ອຖື ແລະ ມີອັດຕາສ່ວນຜົນຕອບແທນສູງທີ່ສຸດ.

3. ມາເຖິງປັດຈຸບັນ, ລັດຖະບານ ສປປ ລາວ ໄດ້ສະແດງການສະໜອງສິດ ກ່ຽວກັບການປະຕິບັດ ຂໍ້ລິເລີ່ມຄວາມໂປ່ງໃສຂອງອຸດສາຫະກຳບໍ່ແຮ່ (EITI), ແຕ່ໄດ້ຄົ້ນຄວ້າຢ່າງຕັ້ງໜ້າ ກ່ຽວກັບນະໂຍບາຍທາງດ້ານການເງິນທີ່ມີປະສິດທິພາບຫຼາຍກວ່າເກົ່າ ສຳລັບອຸດສາຫະກຳບໍ່ແຮ່.

ສະພາບຄວາມທຸກຍາກ

16. ເຖິງແມ່ນວ່າສະພາບເສດຖະກິດມະຫາພາກໄດ້ມີການປັບປຸງດີຂຶ້ນທຽບໃສ່ຊຸມປີຜ່ານມາ,ແຕ່ສະພາບເສດຖະກິດມະຫາພາກຍັງເປັນສິ່ງທ້າທາຍ ແລະ ຄວາມມຸ່ງໝັ້ນໃນການຄຸ້ມຄອງໃຫ້ກັບຄືນມະຫາພາກໃຫ້ກັບຄືນມາເຂັ້ມແຂງເຮັດໃຫ້ມີຄວາມເຂັ້ມແຂງ ຍັງບໍ່ທັນຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ໃນດ້ານໜຶ່ງ, ການຂາດດຸນງົບປະມານ ແລະ ການຂາດດຸນຂອງບັນຊີຊໍາລະປົກກະຕິກັບຕ່າງປະເທດ ແລະ ໜີ້ສິນ ຍັງມີລະດັບສູງ ແລະ ອາດສາມາດເພີ່ມຂຶ້ນຕື່ມໃນໄລຍະໃກ້ໆນີ້. ອີກດ້ານໜຶ່ງ, ມາດຕະການທາງດ້ານງົບປະມານທີ່ວາງອອກ (ການລິບລ້າງການຍົກເວັ້ນພາສີ-ອາກອນຕໍ່ການນໍາເຂົ້າສິນຄ້າບາງປະເພດ, ການຂະຫຍາຍຖານອາກອນ, ການປັບປຸງການຄຸ້ມຄອງອາກອນໃຫ້ເຂັ້ມແຂງ) ແລະ ນະໂຍບາຍຂອງຂະແໜງການເງິນການທະນາຄານ (ການປັບປຸງໂຄງສ້າງຂອງທະນາຄານທີ່ອ່ອນແອ) ເຫັນວ່າມີຄວາມສອດຄ່ອງເໝາະສົມກັບແຜນການທີ່ຈະເຮັດໃຫ້ສະພາບເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ. ມາດຕະການດັ່ງກ່າວ ສົມທົບກັບການຄຸ້ມຄອງໜີ້ສິນທີ່ເຂັ້ມແຂງຂຶ້ນ ແລະ ການສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດໃນການຄຸ້ມຄອງແລະ ຂະແໜງທະນາຄານແລະປັບປຸງກົດລະບຽບ ສາມາດເຮັດໃຫ້ລະດັບໜີ້ສິນມີຄວາມໝັ້ນທ່ຽງ ແລະ ສ້າງຄວາມຍືນຍົງດີຂຶ້ນ, ເຖິງແມ່ນວ່າອາດຈະຈໍາເປັນດັດປັບມາດຕະການຫຼືເພີ່ມເຕີມ ໂດຍຂຶ້ນກັບຜົນການປະຕິບັດງົບປະມານໃນໄລຍະຕໍ່ໜ້າ. ເຖິງແມ່ນວ່າ ໄດ້ມີຫຼາຍຢ່າງທີ່ຊີ້ບອກເຖິງຂອງຄວາມໜ້າເຊື່ອຖືຂອງໂຄງສ້າງເສດຖະກິດມະຫາພາກ, ແຕ່ກໍ່ຂຶ້ນກັບຄວາມມຸ່ງໝັ້ນ ແລະ ຄວາມສາມາດຂອງພາກລັດໃນການຈັດຕັ້ງປະຕິບັດ.

17. ຄວາມທຸກຍາກຢູ່ ສປປ ລາວ ໄດ້ຫລຸດລົງ. ປະເທດໄດ້ບັນລຸຄາດໝາຍຂອງເປົ້າໝາຍສະຫັດສະວັດດ້ານການພັດທະນາຂອງຕົນທີ່ວາງອອກ ສໍາລັບການຫລຸດຜ່ອນຄວາມທຸກຍາກໃຫ້ມີລະດັບຕໍ່າກວ່າ 24 ສ່ວນຮ້ອຍໃນປີ 2015 ແລະ ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນຢ່າງຫຼວງຫຼາຍ. ການຄາດຄະເນ ຈາກການສໍາຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນຢູ່ ສປປ ລາວ ຄັ້ງຫຼ້າສຸດ (LECS 5) ໄດ້ສະແດງໃຫ້ເຫັນວ່າ ອັດຕາສ່ວນຄວາມທຸກຍາກ - ອີງໃສ່ເສັ້ນຄວາມທຸກຍາກແຫ່ງຊາດ - ໄດ້ຫລຸດລົງຈາກ 34 ສ່ວນຮ້ອຍໃນສົກປີ 2002/03 ເປັນ 23 ສ່ວນຮ້ອຍໃນສົກປີ 2012/13 (ຊຶ່ງລວມຈໍານວນມີປະມານ 1,5 ລ້ານຄົນ). ຜ່ານການວັດແທກໂດຍນໍາໃຊ້ເສັ້ນຄວາມທຸກຍາກທີ່ສາມາດສົມທຽບໃນລະດັບສາກົນ ຄື 1,90 ໂດລາສະຫະລັດ (2011 PPP) ຕໍ່ມື້, ຄວາມທຸກຍາກໄດ້ຫລຸດລົງຈາກ 24 ສ່ວນຮ້ອຍໃນສົກປີ 2002/03 ເປັນ 15 ສ່ວນຮ້ອຍໃນສົກປີ 2012/13 (ຮູບສະແດງ 1)[4]. ການບັນລຸເປົ້າ ໝາຍຂອງກຸ່ມທະນາຄານໂລກໃນການຫລຸດຜ່ອນຄວາມທຸກຍາກທີ່ສຸດໃຫ້ມີລະດັບຕໍ່າກວ່າ 3 ສ່ວນຮ້ອຍ ຈະໝາຍເຖິງການຫລຸດຈໍານວນຄົນທຸກຍາກຢູ່ ສປປ ລາວ ໃຫ້ໄດ້ຫຼາຍກວ່າ 800.000 ຄົນ.

18. ລະດັບການຊົມໃຊ້ຂອງພົນລະເມືອງສ່ວນຫຼາຍຍັງຕໍ່າ ທຽບໃສ່ມາດຕະຖານຂອງສາກົນ. ເກືອບ 80 ສ່ວນຮ້ອຍຂອງພົນລະເມືອງຍັງດໍາລົງຊີວິດດ້ວຍລະດັບລາຍຮັບທີ່ຕໍ່າກວ່າ 5,5 ໂດລາສະຫະລັດ ຕໍ່ມື້ (2011 PPP), ຊຶ່ງການມີລາຍຮັບທີ່ຕໍ່າກວ່າລະດັບດັ່ງກ່າວ ຖືວ່າຄົວເຮືອນ ບໍ່ມີຄວາມໝັ້ນຄົງທາງດ້ານເສດຖະກິດ. ອັດຕາດັ່ງກ່າວແມ່ນສູງ ທຽບໃສ່ຢູ່ຫວຽດນາມ ຊຶ່ງມີອັດຕາຕໍ່າກວ່າ 40 ສ່ວນຮ້ອຍ ແລະ ຢູ່ໄທ ຊຶ່ງມີອັດຕາຕໍ່າກວ່າ 20 ສ່ວນຮ້ອຍ (ຮູບສະແດງ 2). ຢູ່ ສປປ ລາວ, ແມ່ນແຕ່ພົນລະເມືອງ 10 ສ່ວນຮ້ອຍທີ່ຮັ່ງມີທີ່ສຸດ (ບໍ່ລວມເອົາຜູ້ທີ່ມີຄວາມຮັ່ງມີຫຼາຍ ຊຶ່ງໂດຍທົ່ວໄປ ບໍ່ໄດ້ລວມເຂົ້າໃນການສໍາຫຼວດ) ໂດຍສະເລ່ຍ ກໍຍັງດໍາລົງຊີວິດດ້ວຍລາຍຮັບທີ່ຕໍ່າກວ່າລະດັບມາດຕະຖານ ທຽບໃສ່ສະເລ່ຍຊົ້ນປານກາງຂອງໂລກ ຈໍານວນ 15 ໂດລາສະຫະລັດ ຕໍ່ມື້ (2011 PPP). ສະພາບດັ່ງກ່າວ ເຮັດໃຫ້ນະໂຍບາຍການແບ່ງປັນຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ມີຄວາມສໍາຄັນ ສໍາລັບປະຊາຊົນສ່ວນຫຼາຍ.

4. ອໍານາດຊື້ທຽບເທົ່າ (PPP) ແມ່ນການວັດແທກທີ່ນໍາໃຊ້ ເພື່ອສົມທຽບລາຍຮັບ ຫຼື ຕົວປ່ຽນທາງດ້ານເສດຖະກິດອື່ນໆໃນຕົວຈິງ, ໂດຍຄໍານຶງເຖິງຄວາມແຕກຕ່າງຂອງລະດັບລາຄາຢູ່ປະເທດຕ່າງໆ.

ຮູບສະແດງ 1: ທ່າອ່ຽງຂອງຄວາມທຸກຍາກຢູ່ ສປປ ລາວ



ແຫຼ່ງຂໍ້ມູນ: ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ ການຊົມໃຊ້ຂອງຄົວເຮືອນ ຂອງຄົວເຮືອນຢູ່ ສປປ ລາວ ຄັ້ງທີ 5 (LECS 5)

ຮູບສະແດງ 2: ຄ່າສະເລ່ຍຂອງການຊົມໃຊ້, ແຍກເປັນສິບສ່ວນ



ແຫຼ່ງຂໍ້ມູນ: ການສຳຫຼວດການໃຊ້ຈ່າຍ ແລະ ຢູ່ ສປປ ລາວ ຄັ້ງທີ 5 (LECS 5)

19. ຊີວິດການເປັນຢູ່ທີ່ໄດ້ຮັບການປັບປຸງດີຂຶ້ນໂດຍລວມ ແມ່ນໄດ້ບໍ່ໄດ້ສະແດງໃຫ້ເຫັນເຖິງຄວາມແຕກໂຕນກັນຫຼາຍລະຫວ່າງພາກ ແລະ ກຸ່ມປະຊາກອນທີ່ມີເງື່ອນໄຂເສດຖະກິດ-ສັງຄົມທີ່ຕ່າງກັນ. ອັດຕາຄວາມທຸກຍາກຢູ່ເຂດຊົນນະບົດແມ່ນ 29 ສ່ວນຮ້ອຍ ຊຶ່ງສູງກວ່າອັດຕາ 10 ສ່ວນຮ້ອຍຢູ່ເຂດຕົວເມືອງ ແລະ ຄວາມແຕກໂຕນດັ່ງກ່າວ ໄດ້ຫຍັບກວ້າງອອກ ໃນລະຫວ່າງ ສົກປີ 2007/08 ຫາ 2012/13. ຄວາມທຸກຍາກຍັງມີລັກສະນະລວມສູນຢູ່ເຂດພູດອຍ ແລະ ໃນກຸ່ມປະຊາຊົນທີ່ໄດ້ຮັບການສຶກສາໜ້ອຍ ແລະ ຜູ້ທີ່ເອື່ອຍອີງໃສ່ການຜະລິດກະສິກຳແບບກຸ້ມຕົນເອງເປັນຕົ້ນຕໍ. ໂດຍສະເພາະແລ້ວ, ຄວາມທຸກຍາກມັກເກີດຂຶ້ນໃນກຸ່ມບັນດາຊົນເຜົ່າ. ປະມານສອງສ່ວນສາມຂອງຜູ້ທຸກຍາກຢູ່ ສປປ ລາວ ແມ່ນບັນດາຊົນເຜົ່າ ເຖິງແມ່ນວ່າພວກເຂົາກວມພຽງແຕ່ໜຶ່ງສ່ວນສາມຂອງພົນລະເມືອງໃນປະເທດ.

20. ການເພີ່ມຂຶ້ນໜຶ່ງສ່ວນຮ້ອຍຂອງລວມຍອດຜະລິດຕະພັນພາຍໃນ ສະເລ່ຍຕໍ່ຫົວຄົນ (GDP per capita)ເຮັດໃຫ້ຄວາມທຸກຍາກຫລຸດລົງ 0,4 ສ່ວນຮ້ອຍ ຢູ່ ສປປ ລາວ, ທຽບໃສ່ຄວາມທຸກຍາກທີ່ຫລຸດລົງ 1,2 ສ່ວນຮ້ອຍ ຢູ່ກຳປູເຈຍ[5]. ການເຕີບໂຕທາງດ້ານເສດຖະກິດໃນໄລຍະຜ່ານມາຍັງບໍ່ທັນສາມາດເຮັດ ໃຫ້ການຊົມ ໃຊ້ສະເລ່ຍຂອງຄົວເຮືອນເພີ່ມຂຶ້ນ ຢ່າງສົມສ່ວນກັບການ ຂະຫຍາຍຕົວ ແລະ ມັນຍັງມີລັກສະນະເອື້ອອຳນວຍແກ່ຄົວເຮືອນທີ່ບໍ່ທຸກຍາກ ຫຼາຍກວ່າຄົວເຮືອນທີ່ທຸກຍາກ. ການຊົມໃຊ້ສະເລ່ຍຕໍ່ຫົວຄົນໄດ້ເພີ່ມຂຶ້ນໃນລະດັບ 2,2 ສ່ວນຮ້ອຍຕໍ່ປີ - ຕ່ຳກວ່າການເພີ່ມຂຶ້ນຂອງ GDP ສະເລ່ຍຕໍ່ຫົວຄົນປະມານ 3,5 ຈຸດສ່ວນຮ້ອຍ ໃນລະຫວ່າງສົກປີ 2002/03 ຫາ 2012/13. ການເພີ່ມຂຶ້ນຂອງການຊົມໃຊ້ໃນກຸ່ມປະຊາກອນ 40 ສ່ວນຮ້ອຍ ທີ່ທຸກຍາກທີ່ສຸດ ມີພຽງແຕ່ 1,3 ສ່ວນຮ້ອຍເທົ່ານັ້ນ (ຮູບສະແດງ 3)ຊຶ່ງໄດ້ເຮັດໃຫ້ຄວາມບໍ່ສະເໝີພາບເພີ່ມຂຶ້ນ.

ຮູບສະແດງ 3: ການຊົມໃຊ້, ໂດຍສະເພາະຂອງຜູ້ທຸກຍາກ, ເພີ່ມຂຶ້ນຊ້າກວ່າການເຕີບໂຕທາງດ້ານເສດຖະກິດ



ແຫຼ່ງຂໍ້ມູນ: ຂໍ້ມູນຈາກບັນຊີແຫ່ງຊາດ ແລະ ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ ຂອງຄົວເຮືອນຢູ່ ສປປ ລາວ ຄັ້ງທີ 5 (LECS 5

21. ຄວາມແຕກໂຕນກັນລະຫວ່າງຍິງ-ຊາຍ ໄດ້ຫລຸດລົງຢ່າງຕໍ່ເນື່ອງ ສຳລັບການສຶກສາຂັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ, ແຕ່ຍັງຄົງມີຄວາມແຕກໂຕນຢູ່ໃນຂົງເຂດສາທາລະນະສຸກ, ໂດຍສະເພາະໄດ້ສະ ແດງອອກໃນການຕາຍຂອງແມ່ທີ່ຍັງສືບຕໍ່ມີອັດຕາສູງ, ການແຕ່ງດອງໄວ ແລະ ການຖືພາຂອງເດັກໄວໜຸ່ມ. ການແຕ່ງດອງໄວ ແລະ ການຖືພາຄັ້ງທຳອິດໃນຕອນອາຍຸຍັງຕ່ຳ ໄດ້ເພີ່ມ ຄວາມສ່ຽງຂອງບັນຫາສັບສົນທາງດ້ານສຸຂະພາບ, ໂດຍສະເພາະສຳລັບແມ່ຍິງໄວໜຸ່ມ.

5. World Bank 2012. Poverty profile in Lao PDR: poverty report for the Lao consumption and expenditure survey 2012-2013 (Report No. 100120).

22. ການເພີ່ມຂຶ້ນຂອງລາຍໄດ້ຂອງແຮງງານຂອງຄົວເຮືອນໄດ້ເປັນປັດໄຈສຳຄັນທີ່ປະກອບສ່ວນແກ່ການຫລຸລີງຂອງຄວາມທຸກຍາກ. ປັດໄຈທີ່ເຮັດໃຫ້ລາຍໄດ້ເພີ່ມຂຶ້ນແມ່ນການເພີ່ມຂຶ້ນຂອງຄວາມສາມາດ ແລະ ການລະໂອກາດທາງດ້ານເສດ ຖະກິດຂອງຄົວເຮືອນ. ອັນພິເສດແມ່ນ: (i) ທຶນມະນຸດໄດ້ຮັບການປັບປຸງດີຂຶ້ນ ແລະ ຄວາມສຳເລັດດ້ານການສຶກສາໄດ້ເພີ່ມຂຶ້ນ; (ii) ການເຂົ້າເຖິງທີ່ດິນໄດ້ເພີ່ມຂຶ້ນ (ລວມທັງ ທີ່ດິນກະສິກຳຢູ່ເຂດຊົນນະບົດ); ແລະ (iii) ໂອກາດດ້ານວຽກເຮັດງານທຳໃນຂະແໜງອື່ນທີ່ບໍ່ແມ່ນກະສິກຳໄດ້ຂະຫຍາຍຕົວ, ຊຶ່ງເຮັດໃຫ້ສັດສ່ວນຂອງ ກະສິກຳໃນການສະໜອງວຽກເຮັດງານທຳ ໄດ້ຫລຸດລົງຈາກ 73 ສ່ວນຮ້ອຍໃນປີ 2002/03 ເປັນ 64 ສ່ວນຮ້ອຍໃນປີ 2012/13.

23. ກະສິກຳເປັນຂະແໜງທີ່ສ້າງລາຍຮັບສ່ວນໃຫຍ່ ໃຫ້ແກ່ປະຊາຊົນທຸກຍາກ ແລະ ຫລຸດຜ່ອນຄວາມທຸກຍາກ. ການຊົມ ໃຊ້ຂອງຄົວເຮືອນທີ່ທຸກຍາກໄດ້ ເພີ່ມຂຶ້ນ ຍ້ອນການເຕີບໂຕຂອງກະສິກຳ ຊຶ່ງໄດ້ກວມ 44 ສ່ວນຮ້ອຍ ຂອງການຫລຸດຜ່ອນຄວາມທຸກຍາກ ໃນລະຫວ່າງປີ 2002/03 ຫາ 2012/13. ຂະແໜງທີ່ປະກອບສ່ວນຫຼາຍແກ່ການຫລຸດຜ່ອນຄວາມທຸກຍາກ ເປັນອັນດັບທີສອງ ແລະ ທີສາມ ແມ່ນອຸດສາຫະກຳປຸງແຕ່ງ (14 ສ່ວນຮ້ອຍ) ແລະ ກິດຈະກຳໂຮງແຮມ ແລະ ການຄ້າ (ຂະແໜງລະ 7 ສ່ວນຮ້ອຍ). ການເຕີບໂຕຂອງກະສິກຳ ສະເລ່ຍແມ່ນ 4 ສ່ວນຮ້ອຍ, ຊຶ່ງຍັງຕ່ຳຫຼາຍ ທຽບໃສ່ລະດັບຄວາມອາດສາມາດຂອງປະເທດ ກະສິກຳ; ສະນັ້ນ, ຈຶ່ງບໍ່ສາມາດສ້າງຜົນກະທົບແຮງຕໍ່ການ ຫລຸດຜ່ອນຄວາມທຸກຍາກຫລາຍເທົ່າທີ່ຄວນ.

24. ການມີລະດັບການສຶກສາທີ່ສູງຂຶ້ນ ຊ່ວຍໃຫ້ແຮງງານສາມາດຫັນປ່ຽນໄປສູ່ການຈ້າງງານຢູ່ຂະແໜງການອື່ນທີ່ບໍ່ແມ່ນກະ ສິກຳ ຊຶ່ງມີລາຍຮັບສູງກວ່າ ແລະ ມັນຍັງຊ່ວຍເພີ່ມສະມັດຕະພາບຂອງການຜະລິດກະສິກຳໃຫ້ສູງຂຶ້ນຊຶ່ງປະກອບສ່ວນໃຫ້ແກ່ ການເພີ່ມລາຍຮັບຈາກກະສິກຳ. ໂດຍລວມ, ຄົວເຮືອນທີ່ມີການສຶກສາດີ ມີຄວາມສາມາດດີກວ່າ ໃນການຫລຸດພົ້ນອອກຈາກຄວາມທຸກຍາກ ບໍ່ວ່າຢູ່ໃນຂະແໜງກະສິກຳ ຫຼື ຂະແໜງທີ່ບໍ່ແມ່ນກະສິກຳ. ການສຶກສາແມ່ນກຳລັງສຳຄັນທີ່ເຮັດໃຫ້ມີຄວາມສາມາດ ເພື່ອເຮັດໃຫ້ປະຊາຊົນປັບຕົວຂຶ້ນ ແລະ ຫລຸດພົ້ນອອກຈາກຄວາມທຸກຍາກ. ຄວາມແຕກໂຕນກັນຂອງຄວາມສາມາດຫລຸດພົ້ນອອກຈາກຄວາມທຸກຍາກ ລະຫວ່າງ ບັນດາຊົນເຜົ່າ ແລະ ກຸ່ມລາວລຸ່ມ ໄດ້ຫຼຸດລົງ ເມື່ອຄຳນຶງເຖິງລະດັບການສຶກສາ ແລະ ການດຳລົງຊີວິດ, ເຖິງແມ່ນວ່າຍັງບໍ່ທັນສາມາດລົບລ້າງໄດ້ໝົດຢ່າງຂາດຕົວ.

25. ຍ້ອນຂາດລະບົບຕາໜ່າງປ້ອງກັນຄວາມປອດໄພຢ່າງພຽງພໍ, ຄົວເຮືອນຍັງປະເຊີນກັບຄວາມອ່ອນໄຫວຕໍ່ຄວາມສ່ຽງໆ ຊຶ່ງໄດ້ເປັນສິ່ງກີດໜ່ວງຕໍ່ການຫລຸດຜ່ອນຄວາມທຸກຍາກ.ປະຊາຊົນຈຳນວນຫຼາຍທີ່ໄດ້ຫລຸດພົ້ນອອກຈາກຄວາມທຸກຍາກໄປແລ້ວໄດ້ກັບຄືນ ໄປທຸກຍາກອີກ,ຊຶ່ງເຮັດໃຫ້ບາດກ້າວການຫລຸດຜ່ອນຄວາມທຸກຍາກຊ້າລົງ.ເຄິ່ງໜຶ່ງຂອງຈຳນວນຄົນທຸກຍາກໃນປີ2012/13ບໍ່ໄດ້ເປັນຄົນທຸກຍາກໃນ ໄລຍະກ່ອນນັ້ນ. ໂດຍທົ່ວໄປ, ຄົວເຮືອນມີເງື່ອນໄຂໜ້ອຍຫລືບໍ່ພຽງພໍ ໃນການຮັບມືກັບ ວິກິດການທາງດ້ານການເງິນຫລືການໃຊ້ຈ່າຍທີ່ສູງບາດດຽວ ທີ່ມັກເກີດຂຶ້ນເລື້ອຍໆ. ຄົວເຮືອນທີ່ເອື່ອຍອີງໃສ່ກະສິກຳ ແລະ ການປະມົງ ເປັນຜູ້ທີ່ມີຄວາມອ່ອນໄຫວຕໍ່ຄວາມສ່ຽງກວ່າໝູ່, ດ້ານໜຶ່ງແມ່ນຍ້ອນເຫດ ການຮ້າຍແຮງທາງດ້ານສະພາບດິນຟ້າອາກາດ ແລະ ອີກດ້ານໜຶ່ງ ແມ່ນຍ້ອນການເໜັງຕີງແຮງຂອງລາຄາ.

ສິ່ງທ້າທາຍຂອງການພັດທະນາ

26. ນອກຈາກຂະແໜງຊັບພະຍາກອນທຳມະຊາດແລ້ວ, ການຂະຫຍາຍຕົວຂອງຂະແໜງການກໍ່ສ້າງ ແລະ ການບໍລິການ ກໍໄດ້ເຕີບໂຕຢ່າງແຂງແຮງ, ແຕ່ຂະແໜງກະສິກຳ ແລະ ອຸດສາຫະກຳປຸງແຕ່ງ. ໃນດ້ານໜຶ່ງ, ການເພີ່ມຂຶ້ນຊ້າຂອງສະມັດຕະພາບ ການຜະລິດ ແລະ ຜົນກຳໄລຈາກຂະແໜງກະສິກຳ ໄດ້ຈຳກັດການປະກອບສ່ວນຂອງຂະແໜງດັ່ງກ່າວໃນການຫລຸດຜ່ອນຄວາມທຸກຍາກ. ອີກດ້ານໜຶ່ງ, ການບໍລິການໄດ້ຂະຫຍາຍຕົວສູງ, ແຕ່ຍັງບໍ່ທັນມີການພັດທະນາໃນລະດັບສູງ ແລະ ສ່ວນຫລາຍຍັງແມ່ນກິດຈະກຳທີ່ມີມູນຄ່າເພີ່ມຕ່ຳ. ການເຕີບໂຕ ຂອງຂະແໜງອື່ນນອກຈາກກະສິກຳສ່ວນໃຫຍ່ກໍ່ແມ່ນມາຈາກຂະແໜງຊັບພະຍາກອນທຳມະຊາດ ຊຶ່ງບໍ່ໄດ້ສ້າງວຽກເຮັດງານທຳຂຶ້ນຫລາຍຢ່າງສົມ ສ່ວນກັບການເຕີບໂຕ, ຄືຕ່ຳກວ່າ 20.000 ຕຳແໜ່ງງານ ໄດ້ຖືກສ້າງຂຶ້ນຈາກຂະແໜງນີ້ ໃນຈຳນວນວຽກເຮັດງານທຳ 400.000 ຕຳແໜ່ງງານທີ່ເກີດຂຶ້ນ (ບໍ່ລວມຕຳແໜ່ງງານໃນຂະແໜງກະສິກຳ) ໃນໄລຍະແຕ່ປີ 2002/03 ຫາ 2012/13. ນອກຈາກນັ້ນ, ວຽກເຮັດງານທຳທີ່ມີຜົນຕອບແທນສູງ ສ່ວນ ຫຼາຍແມ່ນຕ້ອງການໃຫ້ມີລະດັບການສຶກສາສູງ, ຊຶ່ງຂໍ້ຈຳກັດຂອງຜູ້ທຸກຍາກ ແລະ ອັນນີ້ໄດ້ຈຳກັດການມີສ່ວນຮ່ວມຂອງພວກເຂົາໃນຂະບວນການເຕີບໂຕ.

27. ການແກ້ໄຂບັນຫາຄົງຄ້າງໃນການການພັດທະນາມະນຸດ (ເປັນຕົ້ນແມ່ນການສານອາຫານ) ຮຽກຮ້ອງໃຫ້ມີວິທີການແກ້ໄຂທີ່ຫຼາຍຂະແໜງການມີສ່ວນຮ່ວມ ໃນຂົງເຂດບູລິມະສິດ. ນອກຈາກນັ້ນ, ຜົນໄດ້ຮັບທີ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນໂດຍສະເພາະໃນບັນດາກຸ່ມຊົນເຜົ່າ ເຮັດໃຫ້ຕ້ອງໄດ້ເພີ່ມຄວາມສຳຄັນຂອງວິທີການກຳນົດເປົ້າໝາຍຈຸດສຸມ ແລະ ເຮັດວຽກງານເຜີຍແຜ່ຂົນຂວາຍຢ່າງກວ້າງຂວາງ ເພື່ອກະຕຸ້ນໃຫ້ປະຊາຊົນ ຕ້ອງການມາໃຊ້ການບໍລິການ. ອັນສຸດທ້າຍ, ການວາງນະໂຍບາຍ ແລະ ມາດຕະການແມ່ນຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ແລະເຂົ້າໃຈຢ່າງເລິກເຊິ່ງວ່າ ໃນໄລຍະຍາວ, ການເຄື່ອນຍ້າຍຂອງປະຊາກອນອາດຈະເປັນທາງເລືອກໄປສູ່ການເຊື່ອມໂຍງທາງດ້ານເສດຖະກິດ ສຳລັບປະຊາກອນສ່ວນໃຫຍ່ ໂດຍສະເພາະປະຊາຊົນຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຍ້ອນເຂດດັ່ງກ່າວມີຄວາມຈຳກັດດ້ານໂອກາດທາງດ້ານເສດຖະກິດ ແລະ ດ້ານການສະໜອງການບໍລິການຂອງລັດ.

28. ການເຂົ້າເຖິງການບໍລິການຂັ້ນພື້ນຖານໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ, ແຕ່ສິ່ງທ້າທາຍຍັງມີຢູ່. ແຜນງານຂະຫຍາຍໄຟຟ້າຢູ່ ສປປ ລາວ, ຊຶ່ງເປັນໜຶ່ງໃນບັນດາແຜນງານທີ່ມີຄວາມສຳເລັດດີທີ່ສຸດໃນໂລກ, ໄດ້ກ້າວເຂົ້າສູ່ໄລຍະສຸດທ້າຍ ແລະ ອັດຕາສ່ວນການຊົມໃຊ້ໄຟຟ້າໃນປັດຈຸບັນ ໄດ້ກວມສູງກວ່າ 90 ສ່ວນຮ້ອຍຂອງຄົວເຮືອນ. ສິ່ງທ້າທາຍແມ່ນການບັນລຸ 10 ສ່ວນຮ້ອຍຂອງຄົວເຮືອນທີ່ຍັງເຫຼືອ. ການເຂົ້າເຖິງການສະໜອງນ້ຳສະອາດ ແລະ ສຸຂະອະນາໄມທີ່ດີ ໄດ້ເພີ່ມຂຶ້ນ ແຕ່ກໍ່ຍັງມີຄວາມແຕກໂຕນກັນ ແລະ ຍັງມີຜົນກະທົບຢ່າງບໍ່ສົມສ່ວນຕໍ່ຜູ້ທຸກຍາກ. ຕົວຢ່າງ: ມີພຽງແຕ່ 60 ສ່ວນຮ້ອຍຂອງຈຳນວນໂຮງຮຽນປະຖົມເທົ່ານັ້ນທີ່ໄດ້ຮັບການສະໜອງນ້ຳ ແລະ ວິດຖ່າຍ. ຄວາມຍາວຂອງຕາໜ່າງເສັ້ນທາງໄດ້ເພີ່ມຂຶ້ນ ປະມານ 50 ສ່ວນຮ້ອຍ ໃນໄລຍະທົດສະວັດທີ່ຜ່ານມາ ແລະ ໃນປັດຈຸບັນ ປະມານ 56 ສ່ວນຮ້ອຍຂອງພົນລະເມືອງຢູ່ເຂດຊົນນະບົດ ສາມາດເຂົ້າເຖິງເສັ້ນທາງທີ່ນຳໃຊ້ໄດ້ໃນທຸກລະດູການ; ແຕ່ບາງເຂດ ໂດຍສະເພາະຢູ່ຊົນນະບົດ ກໍ່ບໍ່ທັນມີເສັ້ນທາງເຊື່ອມຕໍ່ເທື່ອ.

29. ການຂະຫຍາຍຕົວຂອງເສດຖະກິດ ໄດ້ສ້າງຜົນກະທົບຫຼາຍສົມຄວນຕໍ່ສິ່ງແວດລ້ອມຂອງ ສປປ ລາວ ຍ້ອນການເພີ່ມຂຶ້ນຂອງມົນລະພິດ ແລະ ການຫລຸດນ້ອຍຖອຍລົງຂອງຊັບພະຍາກອນທຳມະຊາດ. ເຊັ່ນດຽວກັນກັບຢູ່ປະເທດອື່ນທີ່ມີຄວາມຮັ່ງມີທາງດ້ານຊັບພະຍາກອນ, ການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) ຂອງ ສປປ ລາວ ໄດ້ຖືກຂັບເຄື່ອນໂດຍການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ກິດຈະກຳເສດຖະກິດທີ່ເຮັດໃຫ້ມົນລະພິດເພີ່ມຂຶ້ນ. ຄ່າສົ້ນເປືອງຂອງການເຊື່ອມໂຊມຂອງສິ່ງແວດລ້ອມໄດ້ເພີ່ມຂຶ້ນເຖິງລະດັບສູງກວ່າ 7 ສ່ວນຮ້ອຍຂອງ GDP ໃນປີ 2013, ຊຶ່ງສູງກວ່າລະດັບຂອງປະເທດອື່ນໆໃນຂົງເຂດອາຊີຕາເວັນອອກ ແລະ ປາຊີຟິກ (EAP), ແລະ ຕົ້ນຕໍແມ່ນຍ້ອນການຫລຸດນ້ອຍຖອຍລົງຂອງປ່າໄມ້. ສປປ ລາວ ມີອັດຕາການປົກຫຸ້ມຂອງປ່າໄມ້ສູງກວ່າໝູ່ ໃນອາຊີຕາເວັນອອກໃຕ້ ແລະ ເປັນໜຶ່ງໃນເຂດທີ່ມີອັດຕາສ່ວນຊະນິດພັນຕົ້ນໄມ້ສູງທີ່ສຸດໃນໂລກ ຊຶ່ງເຮັດໃຫ້ເປັນບູລິມະສິດຂອງໂລກ ສຳລັບການອະນຸລັກຊີວະນາໆພັນ. ແຕ່ການຕັດໄມ້ທຳລາຍປ່າ ແລະ ການເຊື່ອມໂຊມຂອງປ່າໄມ້ ໄດ້ເພີ່ມຂຶ້ນໄວ ຊຶ່ງຄາດຄະເນການປົກຫຸ້ມຂອງປ່າໄມ້ໄດ້ຫລຸດລົງເປັນປະມານ 40 ສ່ວນຮ້ອຍຂອງເນື້ອທີ່ດິນຂອງປະເທດ ໃນປີ 2010 (ຈາກ 70 ສ່ວນຮ້ອຍ ໃນປີ 1940 ແລະ 47 ສ່ວນຮ້ອຍ ໃນປີ 1992). ສັດປ່າຕົກຢູ່ໃນຄວາມສ່ຽງສູງຂຶ້ນ ຈາກການລ່າສັດຜິດກົດໝາຍ ແລະ ການສູນເສຍທີ່ຢູ່ອາໄສ (ລວມທັງລະບົບນິເວດທາງນ້ຳ) ແລະ ອັດຕາສ່ວນຂອງການສູນພັນໄດ້ເພີ່ມຂຶ້ນ ເຊັ່ນ: ເສືອ ແລະ ປາຂ່າ. ນອກຈາກການຫລຸດນ້ອຍຖອຍລົງດັ່ງກ່າວ, ບາງການຂຸດຄົ້ນຊັບພະຍາກອນທີ່ສາມາດທົດແທນໄດ້ ຍັງມີລັກສະນະອີງໃສ່ຕາມການລະໂອກາດ ແລະ ຂາດການວາງແຜນຕິດພັນກັບຂະແໜງການທີ່ປັ່ນອ້ອມ ຊຶ່ງເຮັດໃຫ້ການເຕີບໂຕທາງດ້ານເສດຖະກິດ ທີ່ເກີດຂຶ້ນນັ້ນ ບໍ່ມີປະສິດທິພາບເທົ່າທີ່ຄວນ. ໂດຍສະເພາະ, ຂະແໜງໄຟຟ້ານ້ຳຕົກ ອາດກ້າວໄປເຖິງຈຸດຈຳກັດ ຖ້າຫາກບໍ່ມີການຄຸ້ມຄອງຊັບພະຍາກອນນ້ຳ ແລະການວາງແຜນການນຳໃຊ້ນ້ຳເພື່ອຜະລິດໄຟຟ້າ (ຄວາມດຸ່ນດ່ຽງການນຳໃຊ້ພະລັງງານນ້ຳ) ແລະ ການນຳໃຊ້ນ້ຳເພື່ອຈຸດປະສົງອື່ນໆ. ໃນເວລາດຽວກັນ, ກິດຈະກຳທາງດ້ານເສດຖະກິດ ມີຄວາມສ່ຽງເພີ່ມຂຶ້ນຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ. ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ສາມາດມີຜົນກະທົບທາງລົບຢ່າງຮ້າຍແຮງຕໍ່ກິດຈະກຳຕ່າງໆທາງດ້ານເສດຖະກິດ.

30. ການເອື່ອຍອີງໃສ່ຊັບພະຍາກອນທຳມະຊາດ, ສະພາບທາງດ້ານພູມສັນຖານ, ມູນເຊື້ອທາງດ້ານເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ ໄດ້ກຳນົດເສັ້ນທາງການພັດທະນາ ທີ່ປະກອບມີການເຕີບໂຕທີ່ແຂງແຮງ ແຕ່ມີຄວາມສົມດຸນຈຳກັດ ແລະ ຄວາມສ່ຽງສູງຕໍ່ຄວາມຍືນຍົງ. ສິ່ງທ້າທາຍຕົ້ນຕໍຂອງການພັດທະນາຂອງ ສປປ ລາວ ແມ່ນການຮັກສາການເຕີບໂຕທາງດ້ານເສດຖະກິດໃຫ້ແຂງ ແຮງ ພ້ອມ ກັບ ແກ້ໄຂບັນຫາການສ້າງຄວາມເຂັ້ມແຂງດ້ານສະຖາບັນ, ການພັດທະນາມະນຸດ ລວມທັງບັນ ຫາການເຊື່ອມໂຊມຂອງສິ່ງແວດລ້ອມ ທີ່ ສປປ ລາວ ກຳລັງປະເຊີນ.

III. ຂອບການເປັນຄູ່ຮ່ວມມືກັບ ສປປ ລາວ ຂອງກຸ່ມທະນາຄານໂລກ

ສະພາບລວມ ຂອງຂອບການເປັນຄູ່ຮ່ວມມືຂອງກຸ່ມທະນາຄານໂລກ

31. ຂອບການເປັນຄູ່ຮ່ວມມື (CPF) ຂອງກຸ່ມທະນາຄານໂລກ (WBG) ແນໃສ່ສະໜັບສະໜູນການເຂົ້າເຖິງການລະໂອກາດ ຢ່າງຖ້ວນອນສຳລັບທຸກຄົນ. ໂດຍອີງໃສ່ສະພາບເງື່ອນໄຂທາງດ້ານເສດຖະກິດ ແລະ ສັງຄົມຂອງ ສປປ ລາວ ແລະ ບົດຮຽນຈາກປະສົບປະການ, ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໄດ້ນຳໃຊ້ສາມເງື່ອນໄຂເພື່ອ ຄັດເລືອກ ຂົງເຂດຈຸດສຸມ ສຳລັບຂອບຮ່ວມມືດັ່ງກ່າວນີ້ ຂອງກຸ່ມທະນາຄານໂລກ ສຳລັບໄລຍະແຕ່ 2017-2021. ເງື່ອນໄຂ ກັ່ນຕອງທີໜຶ່ງແມ່ນ CPF ໃຫ້ການສະໜັບສະໜູນແກ່ບູລິມະສິດຂອງລັດຖະບານ ສປປ ລາວ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII. ອັນທີສອງແມ່ນສຸມໃສ່ບູລິມະສິດທີ່ໄດ້ກຳນົດຢູ່ໃນການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD). ອັນທີສາມແມ່ນພົວພັນກັບຂົງເຂດທີ່ທະນາຄານໂລກສາມາດປະກອບສ່ວນໄດ້ຫລາຍທີ່ສຸດ ລວມທັງການສົມທຽບໃສ່ແຜນງານຂອງຄູ່ຮ່ວມພັດທະນາອື່ນໆ. ແຜນງານຂອງກຸ່ມທະນາຄານໂລກທີ່ວາງອອກ ສ່ອງແສງການປຶກສາຫາລືຢ່າງກວ້າງຂວາງ ກັບພາກເອກະຊົນ, ຄູ່ຮ່ວມການພັດທະນາ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນຄົ້ນຄວ້າ ແລະ ລັດຖະບານຂອງ ສປປ ລາວ.

32. ຂອບການເປັນຄູ່ຮ່ວມມືກັບ ສປປ ລາວ (CPF) ຂອງກຸ່ມທະນາຄານໂລກ (WBG) ຖືກສ້າງຂຶ້ນໂດຍອີງໃສ່ຜົນຂອງການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD) ທີ່ໄດ້ປະຕິບັດສຳເລັດຫວ່າງມໍ່ໆມານີ້[6]. ການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD) ໄດ້ສະແດງໃຫ້ເຫັນວ່າ, ເຊັ່ນດຽວກັນກັບຢູ່ປະເທດອື່ນໆທີ່ມີຄວາມຮັ່ງມີທາງດ້ານຊັບພະຍາກອນ, ການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) ຂອງ ສປປ ລາວ ໄດ້ຖືກຂັບເຄື່ອນໂດຍການນຳໃຊ້ຊັບພະຍາກອນທຳມະຊາດ ທີ່ເຮັດໃຫ້ຊັບພະຍາກອນດັ່ງກ່າວຫຼຸດລົງ. ນອກຈາກນັ້ນ, ການເຕີບໂຕດັ່ງກ່າວ ຍັງບໍ່ທັນສ້າງລາຍຮັບໃຫ້ແກ່ລັດຖະບານຢ່າງມີປະສິດທິຜົນ ຫຼື ທຶນມະນຸດ ແລະ ທຶນທາງດ້ານວັດຖຸເທົ່າທີ່ຄວນ ເພື່ອສະໜັບສະໜຸນການສ້າງວຽກເຮັດງານທຳ ຫຼື ສ້າງຂະແໜງທີ່ມີຄວາມສາມາດແຂ່ງຂັນໄດ້. ບົດ SCD ໄດ້ແນະນຳສາມເສັ້ນທາງເພື່ອບັນລຸສອງເປົ້າໝາຍຂອງກຸ່ມທະນາຄານໂລກ: (i) ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ມີປະສິດທິພາບ; (ii) ການສົ່ງເສີມທ່າແຮງບໍ່ມຊ້ອນຂອງຂະແໜງທີ່ບໍ່ແມ່ນຊັບພະຍາກອນ ເພື່ອສ້າງການລະໂອກາດ; ແລະ (iii) ການສ້າງຄວາມສາມາດຂອງປະຊາຊົນໃຫ້ສາມາດຮັບການລະໂອກາດດັ່ງກ່າວ ແລະ ເພື່ອຫລຸດຜ່ອນຄວາມສ່ຽງ ແລະ ປົກປ້ອງຜົນໄດ້ຮັບຈາກການພັດທະນາ. ສາມເສັ້ນທາງດັ່ງກ່າວແມ່ນເພື່ອບັນລຸເປົ້າໝາຍລວມໃນການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ. ຈາກຂໍ້ແນະນຳເຫລົ່ານີ້, ໄດ້ມີສິບສອງຂົງເຂດບູລິມະສິດ ຊຶ່ງສະແດງຢູ່ໃນຕາຕະລາງ 2 ຂ້າງລຸ່ມນີ້.

ຕາຕະລາງ 2: ບູລິມະສິດຂອງການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ ສຳລັບ ສປປ ລາວ

ບູລິມະສິດສູງສຸດ

ສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີຍຸດທະສາດ ແລະ ການຄຸ້ມຄອງສິ່ງແວດລ້ອມຢ່າງມີຄວາມຮັບ ຜິດຊອບ

ຍົກສະມັດຕະພາບການຜະລິດກະສິກຳ ເພື່ອສະໜັບສະໜຸນລາຍຮັບໃຫ້ສູງຂຶ້ນ

ລົງທຶນໃສ່ການປັບປຸງໂພຊະນາການ ເພື່ອບັນລຸຄວາມເຕີບໃຫຍ່ ຂະຫຍາຍຕົວຂອງເດັກຢ່າງເຕັມສ່ວນ



ປັບປຸງຄຸນນະພາບຂອງການສຶກສາ ແລະ ສົ່ງເສີມການມາໂຮງຮຽນຂອງເດັກຍິງ

ເຮັດໃຫ້ໜີ້ສິນຂອງລັດກ້າວສູ່ເສັ້ນທາງທີ່ໝັ້ນຄົງ ແລະ ເຮັດໃຫ້ຂະແໜງການເງິນມີສະຖຽນລະພາບ

ບູລິມະສິດສູງ

ສ້າງຄວາມສະດວກສະບາຍໃຫ້ແກ່ການດຳເນີນທຸລະກິດ ແລະ ສ້າງວຽກເຮັດງານທຳທີ່ດີ

ລົງທຶນໃສ່ພື້ນຖານໂຄງລ່າງ ເພື່ອການເຕີບໂຕ ແລະ ຄວາມສົມດຸນ

ປັບປຸງຄຸນນະພາບ ແລະ ການເຂົ້າເຖິງ ການບໍລິການດ້ານສາທາລະນະສຸກເພື່ອໃຫ້ປະຊາຊົນມີກຳລັງແຮງຜະລິດໄດ້ຫຼາຍຂຶ້ນ

ບູລິມະສິດປານກາງ

ສ້າງຕັ້ງ ແລະ ນຳໃຊ້ລະບົບການຄຸ້ມຄອງຄວາມສ່ຽງຈາກໄພພິບັດທີ່ເຂັ້ມແຂງ



ປະຕິບັດອີງປະກອບຂອງລະບົບປະກັນສັງຄົມຂັ້ນພື້ນຖານ ເພື່ອຫລຸດຜ່ອນຄວາມອ່ອນແອ

ປັບປຸງຄວາມສົມດຸນຂອງຂະແໜງການເງິນ ເພື່ອປັບປຸງການເຂົ້າເຖິງສິນເຊື່ອ ແລະ ຫລຸດຜ່ອນຄວາມສ່ຽງ

< ເພີ່ມທະວີການບໍລິຫານລັດ ແລະ ສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ >

6. ທະນາຄານໂລກ 2017. ການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (ບົດລາຍງານ ສະບັບເລກທີ 112241-LA)

33. ຂອບການເປັນຄູ່ຮ່ວມມືກັບ ສປປ ລາວ (CPF) ແນໃສ່ໃຫ້ການສະໜັບສະໜູນແກ່ 10 ເປົ້າໝາຍ ໃນ 20 ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII, ຊຶ່ງຖືກຄັດເລືອກໂດຍອີງໃສ່ເງື່ອນໄຂຂົງເຂດທີ່ ກຸ່ມທະນາຄານໂລກສາມາດປະກອບສ່ວນໄດ້ສູງສຸດ, ຄວາມຕ້ອງການຂອງລັດຖະບານແຫ່ງ ສປປ ລາວ ແລະ ຂໍ້ທ້າຍາກຕໍ່ການຫລຸດຜ່ອນຄວາມທຸກຍາກ ແລະ ການແບ່ງປັນຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ທີ່ໄດ້ປະກົດໃນບົດວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD). ເປົ້າໝາຍຂອງຂອບການເປັນຄູ່ຮ່ວມມືນີ້ ມີຄວາມສອດຄ່ອງຢ່າງສະໜິດແໜ້ນກັບບັນດາຄາດໝາຍ ຂອງເປົ້າໝາຍການພັດທະນາແບບຍືນຍົງ (SDGs). ການສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ມີຢູ່ໃນປະຈຸບັນ ແລະ ການກຳນົດໂຄງການໃຫມ່ທີ່ສ້າງຂຶ້ນບົນພື້ນຖານ ການຖອດຖອນບົດຮຽນຈາກໄລຍະທີ່ຜ່ານມາແລະການເລັ່ງ ໃສ່ປະກອບສ່ວນຕໍ່ການບັນລຸເປົ້າໝາຍ SDGs ແມ່ນຈະຊ່ວຍບັນລຸເປົ້າໝາຍຂອງ CPF.

34. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໃຫ້ການສະໜັບສະໜູນແກ່ວາລະຂອງໂລກ ທີ່ ສປປ ລາວ ໄດ້ຮັບຮອງເອົາຜ່ານເປົ້າໝາຍການພັດທະນາແບບຍືນຍົງ (SDGs) ທີ່ໄດ້ເຊື່ອມສານຢ່າງລະອຽດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ສັນຍາປາຣີ ກ່ຽວກັບການປ່ຽນແປງດິນຟ້າອາກາດ ຊຶ່ງ ສປປ ລາວ ໄດ້ໃຫ້ສັດຕະຍາບັນໃນເດືອນກັນຍາ 2016. ກຸ່ມທະນາຄານໂລກ ຈະສືບຕໍ່ຮ່ວມມືຢ່າງໃກ້ສິດກັບຄູ່ຮ່ວມພັດທະນາ ແລະ ບັນດາອົງການຂອງອົງການ ສປຊ. CPF ຍັງມີຄວາມສອດຄ່ອງຢ່າງສະໜິດແໜ້ນ ກັບຍຸດທະສາດຂອງກຸ່ມທະນາຄານໂລກຢູ່ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ (EAP) ທີ່ສຸມໃສ່ຫ້າຂົງເຂດບູລິມະສິດ: (i) ການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງ; (ii) ວຽກເຮັດງານທຳ ແລະ ການເຕີບໂຕທີ່ນຳໜ້າໂດຍພາກເອກະຊົນ; (iii) ການບໍລິຫານຄຸ້ມຄອງ ແລະ ສະຖາບັນ; (iv) ພື້ນຖານໂຄງລ່າງ ແລະ ການຫັນເປັນຕົວເມືອງ; ແລະ (v) ການຄຸ້ມຄອງຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ; ແລະ ພິເສດແມ່ນສຸມໃສ່ບົດບາດຍິງ-ຊາຍ ແລະ ໂພຊະນາການ.

35.ການເສື່ອມສານບົດບາດຍິງຊາຍເຂົ້າ ໃນບັນດາໂຄງການທີ່ກຸ່ມທະນາຄານໂລກສະໜັບສະໜຸນ. ການແກ້ໄຂບັນຫາບົດບາດຍິງ-ຊາຍ ໄດ້ຖືກເຊື່ອມສານຢ່າງຄົບຖ້ວນເຂົ້າໃນໂຄງການຂອງກຸ່ມທະນາຄານໂລກ. ໃນປັດຈຸບັນ (ຕົ້ນປີ 2017), ປະມານ 80 ສ່ວນຮ້ອຍ ຂອງໂຄງການທີ່ດຳເນີນຢູ່ ໄດ້ຮັບຮູ້ບົດບາດຍິງ-ຊາຍ, ນັ້ນຄື ໂຄງການໄດ້ເຊື່ອມສານການວິເຄາະບົດບາດຍິງ-ຊາຍ ເຂົ້າໃນວຽກງານວິເຄາະໂຄງການ, ກຳນົດກິດຈະກຳໃນໂຄງການບົນພື້ນຖານການວິເຄາະດັ່ງກ່າວ ແລະ ການຕິດຕາມກວດກາຕົວຊີ້ວັດທີ່ແຍກເພດ. ອັດຕາສ່ວນດັ່ງກ່າວແມ່ນສູງສົມຄວນ ທຽບໃສ່ອັດຕາສ່ວນສະເລ່ຍ ຂອງບັນດາໂຄງການທີ່ທະນາຄານໂລກສະໜັບສະໜຸນຢູ່ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ. ເປົ້າໝາຍແມ່ນຮັກສາລະດັບດັ່ງກ່າວໄວ້. ນອກນັ້ນ, ໂດຍຮ່ວມກັບພາກເອກະຊົນ, ການລົງທຶນ ແລະ ການບໍລິການໃຫ້ຄຳປຶກສາດ້ານວິຊາການ ຂອງອົງການການເງິນສາກົນ (IFC) ຍັງໄດ້ເລັ່ງໃສ່ສິ່ງເສີມບົດບາດຂອງແມ່ຍິງໃນການເຄື່ອນໄຫວທຸລະກິດ.

36. ຍຸດທະສາດການ ການປະສານຂອງກຸ່ມທະນາຄານໂລກອັນດຽວ ແລະ ການຮ່ວມມື ລະຫວ່າງ ທະນາຄານໂລກ (WB), ອົງການການເງິນສາກົນ (IFC) ແລະ ອົງການຄ້ຳປະກັນການລົງທຶນແບບຫຼາຍຝ່າຍ (MIGA) ມີຄວາມເຂັ້ມແຂງ ແລະ ຍັງຈະສືບຕໍ່ເພີ່ມທະວີຂຶ້ນ. ການຮ່ວມມື ລະຫວ່າງ ທະນາຄານໂລກ (WB) ແລະ ອົງການການເງິນສາກົນ (IFC) ໄດ້ເພີ່ມຂຶ້ນຫຼາຍໃນຊຸມປີທີ່ຜ່ານມາ, ເປັນຕົ້ນໃນຂະແໜງນ້ຳ, ປ່າໄມ້, ການຄ້າ ແລະ ການເງິນ.

37. ແຜນງານ ຂອງຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໄດ້ສຸມໃສ່ການເຂົ້າເຖິງ ການລະໂອກາດຢ່າງຖ້າວທົ່ວ ສຳລັບທຸກຄົນ ແລະ ມີເປົ້າໝາຍເລັ່ງໃສ່ສາມຂົງເຂດຈຸດສຸມ ສຳລັບການມີສ່ວນຮ່ວມຂອງກຸ່ມທະນາຄານໂລກ ຢູ່ ສປປ ລາວ, ຄື: (i) ສະໜັບສະໜຸນການເຕີບໂຕທີ່ສົມດຸນ, (ii) ລົງທຶນໃສ່ການພັດທະນາຄົນ, ແລະ (iii) ປົກປັກຮັກສາສິ່ງແວດລ້ອມ. ຂົງເຂດຈຸດສຸມດັ່ງກ່າວແມ່ນ ສອດຄ່ອງກັບຈຸດສຸມລວມ ທີ່ພົວພັນກັບທຸກຂະແໜງການຄື: ສ້າງຄວາມເຂັ້ມ ແຂງໃຫ້ແກ່ສະຖາບັນ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ.

ຂົງເຂດຈຸດສຸມທີ 1: ສະໜັບສະໜູນການເຕີບໂຕທີ່ສົມດຸນ

ຈຸດປະສົງ 1.1 - ສົ່ງເສີມວຽກງານການເງິນຂອງລັດເຂົ້າສູ່ເສັ້ນທາງທີ່ຍືນຍົງ ແລະ ສະໜັບສະໜູນຄວາມໝັ້ນຄົງຂອງ ຂະແໜງການເງິນ

38. ກຸ່ມທະນາຄານໂລກມີ ຫຼາຍວິທີທາງ ເພື່ອໃຫ້ການສະໜັບສະໜູນແກ່ການປັບປຸງ ການຄຸ້ມຄອງວຽກງານ ການເງິນຂອງລັດ ແລະ ສະຖຽນລະພາບດ້ານເສດຖະກິດມະຫາພາກ, ໂດຍຮັບຮູ້ຄວາມສຳຄັນທີ່ສຸດ ຂອງຄວາມເປັນເຈົ້າການ ແລະ ການນຳພາທີ່ແທດຖ້ຽ ແລະ ເຂັ້ມແຂງຂອງລັດຖະບານ ໃນການດຳເນີນນະໂຍບາຍດ້ານງົບປະມານ, ເງິນຕາ, ການເງິນ ແລະ ອັດຕາແລກປ່ຽນຢ່າງລະມັດລະວັງ. ການຕິດຕາມສະພາບເສດຖະກິດມະຫາພາກທີ່ດຳເນີນຢູ່ໃນປັດຈຸບັນ ລວມທັງຊຸດບົດລາຍງານສະພາບເສດຖະກິດຂອງ ສປປ ລາວ (Lao Economic Monitor) ຈະສືບຕໍ່ເຮັດໃຫ້ກຸ່ມທະນາຄານໂລກ ສາມາດສະໜອງຄຳແນະນຳຢ່າງທັນການ ໃຫ້ແກ່ລັດຖະບານ ກ່ຽວກັບບັນຫາເສດຖະກິດມະຫາພາກ. ການໃຫ້ຄຳປຶກສາດ້ານວິຊາການ ແລະ ວິໄຈ (ASA) ດ້ານການພັດທະນາຂະແໜງ ການເງິນການທະນາຄານ ຄາດວ່າຈະໃຫ້ການສະໜັບສະໜູນແກ່ ທະນາຄານແຫ່ງ ສປປ ລາວ (BOL) ໃນການປັບປຸງວຽກງານດ້ານການຟອກເງິນ ແລະ ການປະຕິບັດໃຫ້ສອດຄ່ອງ ກັບອັດຕາສ່ວນຄວາມພຽງພໍຂອງທຶນ ຂອງທະນາຄານທຸລະກິດຂອງລັດຕາມຫລັກການ Basel. ການໃຫ້ການສະໜັບສະໜູນທຶນ ສຳລັບແຜນງານດຸ່ນດ່ຽງງົບປະມານ (DPF) ຈະສືບຕໍ່ເປັນກົນໄກທີ່ສຳຄັນ ສຳລັບການປຶກສາຫາລືດ້ານນະໂຍບາຍ ກ່ຽວກັບການຄຸ້ມຄອງເສດຖະກິດມະຫາພາກ, ໂດຍລວມເອົາມາດຕະການຄຸ້ມຄອງເສດຖະກິດເຂົ້າໃນແຜນງານດັ່ງກ່າວ. ໂຄງການວຽກງານສະຖິຕິ ແລະ ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງພົນລະເມືອງ (CRVS) ທີ່ຢູ່ໃນແຜນ ຈະເລັ່ງໃສ່ເສີມຂະຫຍາຍຄວາມສາມາດຂອງ ລັດຖະບານແຫ່ງ ສປປ ລາວ ເພື່ອສ້າງ ແລະ ເຜີຍແຜ່ສະຖິຕິ ກ່ຽວກັບເສດຖະກິດມະຫາພາກ ແລະ ສັງຄົມ-ຄວາມທຸກຍາກ ທີ່ໜ້າເຊື່ອຖື ແລະ ທັນເວລາ ສຳລັບການຕິດຕາມກວດກາ ແລະ ປະເມີນຜົນ ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ເພື່ອປະເມີນ ເສດຖະກິດມະຫາພາກຢ່າງເປັນປົກກະຕິ. ກຸ່ມທະນາຄານໂລກ

ຈະສືບຕໍ່ສະໜັບສະໜຸນລັດຖະບານ ສປປ ລາວ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການສ້າງແຜນງົບປະມານ, ຂະບວນການກະກຽມ ແລະ ການປະຕິບັດ ໂດຍຜ່ານໂຄງການຫັນວຽກງານຄຸ້ມຄອງການເງິນຂອງລັດ (PFM) ໄປສູ່ທັນສະໄໝ ທີ່ດຳເນີນຢູ່ໃນປັດຈຸບັນ. ການສະໜັບສະໜຸນການຫັນວຽກງານຄຸ້ມຄອງການເງິນຂອງລັດໄປສູ່ທັນສະໄໝ ຍັງຄາດວ່າຈະຊ່ວຍປັບປຸງສະພາບແວດລ້ອມທາງດ້ານທຸລະກິດ ດ້ວຍວຽກງານທີ່ພົວພັນກັບການຄຸ້ມຄອງອາກອນມູນຄ່າເພີ່ມ (VAT) ທີ່ເປັນຂໍ້ຈຳກັດຕົ້ນຕໍຕໍ່ທຸລະກິດ ແລະ ອາກອນດັ່ງກ່າວ ຈະຊ່ວຍຂະຫຍາຍຖານອາກອນ ແລະ ເພີ່ມລາຍຮັບ. ທະນາຄານໂລກໃຫ້ການສະໜັບສະໜຸນຕໍ່ວຽກງານການຄຸ້ມຄອງການເງິນຂອງລັດເພື່ອປັບປຸງການບໍລິການໃນທົ່ວທຸກຂະແໜງການ ໂດຍຜ່ານການຊ່ວຍເຫລືອດ້ານວິຊາການ ແລະ ອາດຈະຜ່ານໂຄງການໂດຍຂຶ້ນກັບຄວາມຄືບໜ້າຂອງການປະຕິຮູບການຄຸ້ມຄອງການເງິນຂອງລັດ ແລະ ຄວາມຕ້ອງການຂອງລັດຖະບານ. ການສະໜັບສະໜຸນຂອງທະນາຄານໂລກ ໃຫ້ແກ່ຂະແໜງໄຟຟ້າ ແລະ ບໍ່ແຮ່ ໃນປັດຈຸບັນ ແມ່ນໄດ້ສະໜອງຜ່ານໂຄງການການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຄວາມຂີດສາມາດ ໃນຂະແໜງເຊື່ອນໄຟຟ້າ ແລະ ບໍ່ແຮ່ (HMTA). ໂດຍຂຶ້ນກັບຄວາມຕ້ອງການຂອງລັດຖະບານ ສປປ ລາວ, ອັນນີ້ສາມາດລວມເອົາຕື່ມ ວຽກທີ່ພົວພັນກັບຄຳໝັ້ນສັນຍາຂອງ ສປປ ລາວ ກ່ຽວກັບຂໍ້ລິເລີ່ມຄວາມໂປ່ງໃສຂອງອຸດສາຫະກຳບໍ່ແຮ່ (Extractive Industries Transparency Initiative).

ຈຸດປະສົງ 1.2 ອຳນວຍຄວາມສະດວກດ້ານການດຳເນີນທຸລະກິດ

39. ເຖິງແມ່ນວ່າ ສະພາບແວດລ້ອມດ້ານການຄ້າ ແລະ ການດຳເນີນທຸລະກິດ ໄດ້ມີການປັບປຸງດີຂຶ້ນໃນຫຼາຍດ້ານ, ແຕ່ ສປປ ລາວ ກໍຍັງຕ້ອງການປັບປຸງຕື່ມອີກ ເພື່ອສ້າງຄວາມສະດວກ ແກ່ການເຮັດທຸລະກິດ, ປັບປຸງການເຂົ້າເຖິງແຫຼ່ງທຶນ ແລະ ສ້າງວຽກເຮັດງານທຳທີ່ດີ. ກຸ່ມທະນາຄານໂລກຈະສືບຕໍ່ໃຫ້ການສະໜັບສະໜຸນ ແກ່ແຜນງານພັດທະນາດ້ານການຄ້າ ແລະ ຄວາມສາມາດແຂ່ງຂັນ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ທີ່ດຳເນີນຢູ່ໃນປັດຈຸບັນ ແລະ ຈະສືບຕໍ່ປະຕິບັດວຽກງານຂອງຕົນ ກ່ຽວກັບສະພາບແວດລ້ອມການລົງທຶນຂອງລາວ. ການແກ້ໄຂມາດຕະການທີ່ບໍ່ແມ່ນພາສີ ແລະ ລະບຽບຂັ້ນຕອນທີ່ບໍ່ສະດວກຄວນໄດ້ຮັບການເອົາໃຈໃສ່ເປັນພິເສດ. ວຽກງານນີ້ສາມາດສືບຕໍ່ຈາກ ຜົນສຳເລັດຈາກໂຄງການອຳນວຍຄວາມສະດວກດ້ານພາສີ ແລະ ການຄ້າ (ທີ່ສິ້ນສຸດໃນເດືອນ ມິຖຸນາ 2017), ຊຶ່ງໄດ້ເຮັດໃຫ້ເວລາ ແລະ ປະສິດທິພາບຂອງຂັ້ນຕອນການແຈ້ງເສຍພາສີ ໄດ້ຮັບການປັບປຸງດີຂຶ້ນ. ທະນາຄານໂລກສະໜັບສະໜຸນການເຂົ້າເຖິງແຫຼ່ງທຶນ ໂດຍຜ່ານໂຄງການສົ່ງເສີມການເຂົ້າເຖິງແຫຼ່ງທຶນ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນຢູ່ໃນປັດຈຸບັນ ແລະ ອົງການການເງິນສາກົນ (IFC) ໄດ້ຮ່ວມເຮັດວຽກກັບບາງທະນາຄານ ແລະ ສະຖາບັນການເງິນໃນການເປັນອົງກອນສື່ກາງໃນການສະໜອງແຫລ່ງທຶນ. ໃນປັດຈຸບັນ, ກຸ່ມທະນາຄານໂລກຍັງໄດ້ສະໜັບສະໜຸນສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງຂະແໜງການການເງິນ ໂດຍຜ່ານໂຄງການທີ່ແນໃສ່ ປັບປຸງການກວດກາຕາມລະບຽບການ, ສິດຂອງເຈົ້າໜີ້, ການປະກັນໄພເງິນຝາກ, ມາດຕະຖານການບັນຊີ ແລະ ພື້ນຖານໂຄງລ່າງທາງດ້ານການເງິນ.

40. ໂດຍສອດຄ່ອງກັບແນວທາງ ເສດຖະກິດສີຂຽວ, ສປປ ລາວ ມີເງື່ອນໄຂດີໃນການພັດທະນາ ກະສິກຳສະອາດ ແລະ ມີມູນຄ່າສູງຂຶ້ນ ເພື່ອສະໜອງໃຫ້ຕະຫຼາດຂອງປະເທດໃກ້ຄຽງທີ່ມີຄວາມຮັ່ງມີເພີ່ມຂຶ້ນ. ກຸ່ມທະນາຄານໂລກຈະສະໜັບສະໜຸນຈຸດປະສົງດັ່ງກ່າວ ໂດຍຜ່ານການສະໜອງທຶນໃຫ້ແກ່ໂຄງການໃຫມ່ກ່ຽວກັບການຫັນເປັນການຄ້າໃນຂະແໜງກະສິກຳ ແລະ ຈະສືບຕໍ່ສະໜັບສະໜຸນການປັບປຸງສະພາບແວດລ້ອມດ້ານທຸລະກິດ ແລະ ການຄ້າ ທີ່ເປັນສິ່ງທ້າທາຍຢູ່ ສປປ ລາວ, ຊຶ່ງມີຜົນກະທົບໂດຍສະເພາະຕໍ່ຜະລິດຕະພັນກະສິກຳ ແລະ ການພັດທະນາຂະແໜງທຸລະກິດການກະເສດ ທີ່ແນໃສ່ຕອບສະໜອງຄວາມຕ້ອງການຂອງຕະຫຼາດປະເທດໃກ້ຄຽງ.

41. ການທ່ອງທ່ຽວ ແລະ ເປັນຕົ້ນແມ່ນການທ່ອງທ່ຽວທຳມະຊາດ ໄດ້ຂະຫຍາຍຕົວຂຶ້ນ ແລະ ສະໜອງໂອກາດເພື່ອສ້າງວຽກເຮັດງານທຳ ແລະ ພ້ອມດຽວກັນກໍເນັ້ນໃສ່ການເຕີບໂຕສີຂຽວ. ຜ່ານການປຶກສາຫາລື ກ່ຽວກັບຂອບນະໂຍບາຍການພັດທະນາການເຕີບໂຕສີຂຽວ (Green Growth DPF) ແລະ ບົດສຶກສາວິເຄາະຕ່າງໆທີ່ກ່ຽວຂ້ອງ ທະນາຄານໂລກມີແຜນທີ່ຈະສະໜັບສະໜຸນ ການຄົ້ນຄວ້າທິດທາງເສີມຂະຫຍາຍຍຸດທະສາດເພື່ອດຶງດູດນັກທ່ອງທ່ຽວທີ່ໃຊ້ຈ່າຍສູງ ແນໃສ່ເຮັດໃຫ້ ສປປ ລາວ ເປັນຈຸດໝາຍປາຍທາງ ແລະ ເພື່ອສະໜັບສະໜຸນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດທ່ອງທ່ຽວດັ່ງກ່າວ. ອົງການການເງິນສາກົນ (IFC) ວາງແຜນສືບຕໍ່ຫາໂອກາດເຮັດວຽກກັບພາກເອກະຊົນ ເພື່ອສະໜັບສະໜຸນເຂົາເຈົ້າໃນການຍົກລະດັບການບໍລິການໃນຂະແໜງການທ່ອງທ່ຽວໃຫ້ສູງຂຶ້ນ.

ຈຸດປະສົງ 1.3 ລົງທຶນໃສ່ພື້ນຖານໂຄງລ່າງ ເພື່ອການເຕີບໂຕ ແລະ ຄວາມສົມດູນ

42. ລັດຖະບານມີອາລະການພັດທະນາຢ່າງກວ້າງຂວາງ ເພື່ອຂະຫຍາຍການບໍລິການ ນດ້ານພື້ນຖານໂຄງລ່າ ໂດຍມີຈຸດສຸມສະເພາະ ໃສ່ຄວາມສົມດູນ ແລະ ການບັນລຸ 10 ສ່ວນຮ້ອຍທີ່ຍັງເຫຼືອຂອງຄົວເຮືອນທີ່ຍັງບໍ່ທັນຊົມໃຊ້ໄຟຟ້າ. ການສະໜັບສະໜູນຂອງກຸ່ມທະນາຄານໂລກ ໄດ້ມີຄວາມສຳເລັດ ເປັນຕົ້ນແມ່ນໃນຂະແໜງຂົວ-ທາງ ແລະ ພະລັງງານ ແລະ ຈະສືບຕໍ່. ໂຄງການພັດທະນາຂະແໜງຂົວ-ທາງ ຢູ່ ສປປ ລາວ (Lao Road Sector Projects) ທີ່ດຳເນີນຢູ່ໃນປັດຈຸບັນ ແລະ ທີ່ຖືກອະນຸມັດໃໝ່ ໃຫ້ການສະໜັບສະໜູນແກ່ການຄຸ້ມຄອງຊັບສິນເສັ້ນທາງ ແລະ ການປັບປຸງຄວາມທົນທານຕໍ່ສະພາບດິນຟ້າອາກາດຂອງຕາໜ່າງເສັ້ນທາງ. ຕາໜ່າງເສັ້ນທາງແຫ່ງຊາດຊຶ່ງຮັບໃຊ້ບໍລິມາດການຈະລາຈອນທີ່ມີທາອ່ຽງເພີ່ມຂຶ້ນຢູ່ໃນຕົວເມືອງໃຫຍ່ ລວມທັງນະຄອນຫຼວງວຽງຈັນ ແລະ ການສັນຈອນທາງຜ່ານແດນ ມີຄວາມສຳຄັນທີ່ສຸດສຳລັບ ສປປ ລາວ ເພື່ອເຮັດບົດບາດເປັນໃຈກາງຂອງພາກພື້ນ ແລະ ເພື່ອຂຸດຄົ້ນທ່າແຮງບົ່ມຊ້ອນທາງດ້ານເສດຖະກິດຈາກການເຊື່ອມໂຍງກັບພາກພື້ນ. ແຜນການລົງທຶນ, ເປັນຕົ້ນໃນເສັ້ນທາງແຫ່ງຊາດ ເລກ 13 ທີ່ເປັນກະດູກສັນຫຼັງສຳຄັນຂອງປະເທດ ໄດ້ຖືກວາງອອກ. ແຜນງານຂອງລັດຖະບານ ເພື່ອປັບປຸງປະສິດທິພາບ ແລະ ຄວາມສະຫມ່ຳສະເຫມີຂອງການແຈກຢາຍໄຟຟ້າ ໃນບາງເຂດທີ່ນຳໃຊ້ໄຟຟ້າຫຼາຍ ຢູ່ນະຄອນຫຼວງວຽງຈັນ ກໍໄດ້ຮັບການສະໜັບສະໜູນໂດຍໂຄງການປັບປຸງຕາໜ່າງສາຍສົ່ງໄຟຟ້າ (Power Grid Improvement program) ທີ່ດຳເນີນຢູ່ໃນປັດຈຸບັນ ຊຶ່ງເລັ່ງໃສ່ຫລຸດຜ່ອນການສູນເສຍກະແສໄຟຟ້າ ເພື່ອປັບປຸງປະສິດທິພາບລວມຂອງຂະແໜງໃຫ້ດີຂຶ້ນ.

43. ລັດຖະບານໄດ້ມີຄວາມສຳເລັດໃນການພັດທະນາຊັບພະຍາກອນນ້ຳ ແລະ ການສົ່ງອອກໄຟຟ້າໄປປະເທດໃກ້ຄຽງ ໄດ້ປະກອບສ່ວນໃຫ້ແກ່ລາຍຮັບຢ່າງຫຼວງຫຼາຍ. ໃນປັດຈຸບັນ, ກຸ່ມທະນາຄານໂລກ ກຳລັງໃຫ້ການສະໜັບສະໜູນແກ່ການວິໄຈຄວາມອາດສາມາດເປັນໄປໄດ້ ຂອງການເຊື່ອມຕໍ່ໄຟຟ້າກັບຫວຽດນາມ ແລະ ພິຈາລະນາເພື່ອສ້າງໂຄງການພະລັງງານທົດແທນ (ສຳລັບພະລັງງານນ້ຳ, ລົມ ຫຼື ແສງຕາເວັນ). ອົງການການເງິນສາກົນ (IFC) ແລະ ອົງການຄ້ຳປະກັນການລົງທຶນແບບຫຼາຍຝ່າຍ (MIGA) ກຳລັງດຳເນີນການປະເມີນໂຄງການບາງເຂື່ອນໄຟຟ້າເອກະລາດ ເພື່ອຄວາມເປັນໄປໄດ້ໃນການລົງທຶນໃນໄລຍະອັນໃກ້ນີ້ ແລະ ເພື່ອໃຫ້ການຄ້ຳປະກັນຄວາມສ່ຽງທາງດ້ານການເມືອງ ສຳລັບໂຄງການດັ່ງກ່າວ. ເພື່ອປັບປຸງການປະຕິບັດງານຂອງອົງການຂອງລັດຖະບານທີ່ເຮັດວຽກຄຸ້ມຄອງກວດກາໃນຂະແໜງໄຟຟ້ານ້ຳຕົກ ແລະ ບໍ່ແຮ່, ທະນາຄານໂລກໄດ້ໃຫ້ການສະໜັບສະໜູນດ້ານການວິໄຈຢ່າງກວ້າງຂວາງ ແກ່ກະຊວງພະລັງງານ ແລະ ບໍ່ແຮ່ ໂດຍຜ່ານໂຄງການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດ ໃນຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່ (HMTA) ທີ່ດຳເນີນຢູ່ໃນປັດຈຸບັນ. ຍ້ອນຄວາມສຳຄັນຂອງຂະແໜງການດັ່ງກ່າວຕໍ່ເສດຖະກິດ, ກະຊວງໄດ້ສະເໜີໃຫ້ມີແຜນງານຕິດຕາມຄື: ໂຄງການຊ່ວຍເຫຼືອດ້ານວິຊາການ ໃຫ້ແກ່ການພັດທະນາພະລັງງານ ແລະ ບໍ່ແຮ່ແບບຍືນຍົງ (SEEDTA). ອົງການການເງິນສາກົນ (IFC) ກໍໄດ້ມີ ໂຄງການຊ່ວຍເຫລືອວິຊາການດ້ານນ້ຳ (Hydro Advisory Program) ໃນປີ 2012 ທີ່ສຸມໃສ່ປັບປຸງມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມຂອງຂະແໜງ ເຂື່ອນໄຟຟ້າ. ເປົ້າໝາຍແມ່ນເພື່ອຮັບປະກັນໃຫ້ໂຄງການເຂື່ອນໄຟຟ້າໃໝ່ ທີ່ດຳເນີນໂດຍພາກເອກະຊົນ ປະຕິບັດຕາມຕົວຢ່າງທີ່ດີຂອງສາກົນ ດ້ານສິ່ງແວດລ້ອມ ແລະ ສັງຄົມ.

44.ອາລະການພັດທະນາທີ່ກວ້າງຂວາງເພື່ອປັບປຸງຄວາມສາມາດຂອງຜູ້ທຸກຍາກໃນເຂດຊົນນະບົດໃຫ້ເຂົ້າເຖິງການບໍລິການຂັ້ນພື້ນຖານ ແລະ ເສີມຂະຫຍາຍການມີສ່ວນຮ່ວມຂອງພວກເຂົາ ໃນຂະບວນການພັດທະນາ. ໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ໄລຍະ III (PRF III) ທີ່ໄດ້ຮັບການອະນຸມັດຫວ່າງມໍ່ໆນີ້ ຈະສືບຕໍ່ສະໜັບສະໜູນການປັບປຸງພື້ນຖານໂຄງລ່າງ ໂດຍຄວາມເປັນເຈົ້າການຂອງຊຸມຊົນຢູ່ບ້ານຕ່າງໆ ໃນເຂດຊົນນະບົດ. ໂຄງການ ທລຍ ໄລຍະ III ແລະ ໂຄງການພັດທະນາຂະແໜງຂົວ-ທາງ ຢູ່ ສປປ ລາວ ໄລຍະ II ຈະສືບຕໍ່ສະໜັບສະໜູນການປັບປຸງເສັ້ນທາງຊົນນະບົດ ເພື່ອເພີ່ມອັດຕາສ່ວນຂອງພົນລະເມືອງ ທີ່ເຂົ້າເຖິງເສັ້ນທາງທີ່ສາມາດນຳໃຊ້ໄດ້ທຸກລະດູການໃຫ້ສູງຂຶ້ນ.

ຂົງເຂດຈຸດສຸມທີ 2: ການລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ

ຈຸດປະສົງ 2.1 - ຫລຸດຜ່ອນອັດຕາສ່ວນການຂາດໂພຊະນາການ/ ຂາດສານອາຫານ

45. ການຂາດໂພຊະນາການແມ່ນບັນຫາຕົ້ນຕໍທີ່ພາໃຫ້ ສປປ ລາວ ບໍ່ສາມາດບັນລຸເປົ້າໝາຍ ສະຫັດສະວັດດ້ານການພັດທະນາ (MDGs) ໄດ້. ອັດຕາສ່ວນເດັກລຸ່ມ 5 ປີທີ່ເຕ້ຍກ່ວາມາດຕະຖານຈາກການຂາດໂພຊະນາການຊໍ້າເຮື້ອ ແມ່ນຍັງສູງທີ່ 44 ສ່ວນຮ້ອຍ. ການເພີ່ມຂຶ້ນຂອງການສະໜອງທຶນ IDA ຄາດໝາຍໄວ້ວ່າ ຈະຖືກນຳໄປໃຊ້ເພື່ອຂະຫຍາຍການສະໜັບສະໜູນຂອງທະນາຄານໂລກທີ່ມີຕໍ່ *ຍຸດທະສາດໂພຊະນາການແຫ່ງຊາດ* (*National Nutrition Strategy*) ໃຫ້ເພີ່ມຂຶ້ນໃນຂົງເຂດທີ່ທະນາຄານໂລກມີຄວາມຊຳນານ. ໃນປັດຈຸບັນ, ທະນາຄານໂລກໄດ້ໃຫ້ການສະໜັບສະໜູນຫຼາຍດ້ານ ໂດຍຜ່ານໂຄງການແຜນງານບໍລິຫານຄຸ້ມຄອງສາທາລະນະສຸກ ແລະ ໂພຊະນາການ (HGNDP) ທີ່ໄດ້ໃຫ້ການສະໜັບສະໜູນວຽກງານການປ່ຽນແປງພຶດຕິການດ້ານໂພຊະນາການແຫ່ງຊາດ (5 ລ້ານໂດລາສະຫະລັດ) ພ້ອມທັງກິດຈະກຳການວາງແຜນຄອບຄົວ, ສິ່ງເສີມວຽກງານສຸຂະອະນາໄມ ແລະ ສຸຂາພິບານ, ແລະ ຜ່ານກອງທຶນຫລຸດຜ່ອນຄວາມທຸກຍາກທີ່ຍັງດຳເນີນຢູ່ໃນປັດຈຸບັນ, ໄດ້ໃຫ້ການສະໜັບສະໜູນໃຫ້ແກ່ການເຂົ້າເຖິງນ້ຳສະອາດ, ສ້າງຄວາມຕ້ອງການດ້ານສຸຂາພິບານ ແລະ ສິ່ງເສີມການສ້າງຈິດສຳນຶກກ່ຽວກັບໂພຊະນາການ. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໃນຮອບນີ້ ມີຄວາມມຸ້ງໝາຍຢາກສິ່ງເສີມໂຄງການໃໝ່ ທີ່ສະໜັບສະໜູນການສະໜອງນ້ຳ ແລະ ສຸຂາພິບານ, ເຊິ່ງເປັນສາເຫດຕົ້ນຕໍອັນດັບທີສອງ ທີ່ພາໃຫ້ເດັກເຕ້ຍກ່ວາມາດຕະຖານໃນທົ່ວໂລກ. ນອກຈາກນັ້ນ, CPF ໃນຮອບນີ້ ຍັງມີຄວາມຄາດໝາຍທີ່ຈະໃຫ້ການສະໜັບສະໜູນໂຄງການປະກັນສັງຄົມ ໂດຍການສິ່ງເສີມໃຫ້ຄົນມານຳໃຊ້ການບໍລິການດ້ານສາທາລະນະສຸກ ແລະ ການສຶກສາ, ໂດຍສຸມໃສ່ເດັກຍິງໜຸ່ມ, ໂດຍມີເປົ້າໝາຍສຸດທ້າຍເພື່ອແກ້ໄຂບັນຫາເດັກເຕ້ຍຫຼຸດມາດຕະຖານຈາກການຂາດໂພຊະນາການຊໍ້າເຮື້ອ. ໂຄງການທຸລະກິດການກະເສດທີ່ກຳລັງກະກຽມນັ້ນ ຄາດວ່າຈະສາມາດເພີ່ມລາຍຮັບຂຶ້ນ ແລະ ຊ່ວຍແກ້ໄຂບັນຫາການຂາດອາຫານທີ່ມີໂພຊະນາການໃຫ້ແກ່ປະຊາຊົນຢູ່ເຂດຊົນນະບົດທີ່ມີລາຍໄດ້ຕ່ຳ. ກຸ່ມທະນາຄານໂລກຍັງຈະເພີ່ມທະວີການສຸມໃສ່ບັນຫາການຂາດໂພຊະນາການ ໂດຍປຸກລະດົມການສະໜັບສະໜູນ, ສິ່ງເສີມການປຶກສາຫາລືຕໍ່ນະໂຍບາຍ ແລະ ການແລກປ່ຽນບົດຮຽນ ແລະ ຄວາມຮູ້ກ່ຽວກັບການຂາດໂພຊະນາການ.

ຈຸດປະສົງ 2.2 - ປັບປຸງຄຸນນະພາບຂອງການສຶກສາຂັ້ນປະຖົມ ແລະ ອະນຸບານ ແລະ ສິ່ງເສີມໃຫ້ເດັກຍິງມາໂຮງຮຽນ

46. ການປັບປຸງຜົນໄດ້ຮັບດ້ານການສຶກສາ ມີຄວາມສຳຄັນຕໍ່ອາລະການພັດທະນາຂອງ ສປປ ລາວ; ຄວາມຕ້ອງການລວມຂອງການສຶກສາຂອງເດັກກ່ອນໄວຮຽນ ມີຫຼາຍເປັນພິເສດ. ການສະໜັບສະໜູນຂອງກຸ່ມທະນາຄານໂລກໄດ້ສຸມໃສ່ການສຶກສາຂັ້ນອະນຸ

ບານ ແລະ ປະຖົມ ໂດຍຜ່ານໂຄງການກອງທຶນຮ່ວມສາກົນເພື່ອການສຶກສາ (GPE) ໄລຍະ 2 ແລະ ໂຄງການການສຶກສາຂອງເດັກກ່ອນໄວຮຽນ (ECE)ທີ່ດຳເນີນຢູ່ໃນປັດຈຸບັນ,ຊຶ່ງທັງສອງໂຄງການນີ້ຈະສືບຕໍ່ດຳເນີນໃນຕະຫຼອດໄລຍະຂອງCPFເຖິງເດືອນກໍລະກົດ2019.CPFມຸ້ງໝາຍສືບຕໍ່ໃຫ້ການສະໜັບສະໜຸນແກ່ຂະແໜງການສຶກສາ ໂດຍສືບຕໍ່ສຸມໃສ່ການລົງທຶນໃນການສຶກສາກ່ອນໄວຮຽນ. ທະນາຄານໂລກຍັງໃຫ້ການສະໜັບສະໜຸນແກ່ແຜນງານແຫ່ງຊາດເພື່ອສະໜອງອາຫານໃນໂຮງຮຽນ (National School Feeding program) ໂດຍສົມທົບກັບອົງການອາຫານໂລກ (World Food Program) ເພື່ອເປັນວິທີການຈູງໃຈໃຫ້ເດັກມາໂຮງຮຽນ ແລະ ສະໜອງສານອາຫານເສີມໃຫ້ແກ່ເດັກ. ລວມຢູ່ໃນນີ້ ແມ່ນການສະໜອງເຕົາໄຟຄົວກິນສະອາດ ແລະ ປັດໄຈການປ່ຽນແປງການປະພຶດເພື່ອສະໜັບສະໜຸນໃຫ້ໄດ້ຮັບຜົນດີຂຶ້ນໃນດ້ານໂພຊະນາການ. ຫຼາຍຄູ່ຮ່ວມການພັດ ທະນາໄດ້ມີສ່ວນຮ່ວມຢ່າງຫ້າວຫັນ ໃນການສະໜັບສະໜຸນແຜນງານການສຶກສາຂອງລັດຖະບານ (ເຊັ່ນ: ສະຫະພາບເອີລົບ, GIZ, ອິດສະຕາລີ ແລະ ທະນາຄານພັດທະນາອາຊີ) ແລະ ການສະໜັບສະໜຸນຂອງທະນາຄານໂລກ ແມ່ນເປັນການເພີ່ມເສີມໃຫ້ແກ່ການສະໜັບສະໜຸນດັ່ງກ່າວ.

ຈຸດປະສົງ 2.3 - ປັບປຸງຄຸນນະພາບ ແລະ ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ

47. ໂດຍສອດຄ່ອງກັບແຜນພັດທະນາຂະແໜງສາທາລະນະສຸກ 2016-2020 ຂອງລັດຖະບານ, ສປປ ລາວ ມີເປົ້າໝາຍເລັ່ງໃສ່ສະໜອງການຮັກສາສຸຂະພາບແມ່ ແລະ ເດັກໂດຍບໍ່ເສຍຄ່າ ແລະ ໄດ້ສຸມໃສ່ການບໍລິການຮັກສາສຸຂະພາບຂັ້ນພື້ນຖານ, ການສົ່ງເສີມສຸຂະອະນາໄມ, ຮັບປະກັນລະບົບການເງິນສາທາລະນະສຸກ ແລະ ການປັບປຸງຊັບພະຍາກອນມະນຸດ ພ້ອມທັງສ້າງຄວາມເຂັ້ມແຂງໃນການຄຸ້ມຄອງບໍລິຫານວຽກງານສາທາລະນະສຸກ. ເຊັ່ນດຽວກັບຂະແໜງການສຶກສາ, ໄດ້ມີຄູ່ຮ່ວມພັດທະນາຈຳນວນໜຶ່ງທີ່ເຄື່ອນໄຫວຢ່າງຫ້າວຫັນໃນຂະແໜງສາທາລະນະສຸກ, ເຊັ່ນ: GAVI, WHO, UNICEF ແລະ UNFPA. ບັນຫາທີ່ໜ້າເປັນຫ່ວງໃນຄະນະນີ້ແມ່ນ ການສະໜອງທຶນສ່ວນໃຫຍ່ທີ່ໃຫ້ຂະແໜງສາທາລະນະສຸກຈາກຜູ້ໃຫ້ທຶນ ຄາດວ່າຈະຫຼຸດລົງ ແລະ ເລີ້ມມີການຖອນໂຕອອກເລີ້ມທ້າຍປີ 2017 ເປັນຕົ້ນໄປ ເນື່ອງຈາກ ສປປ ລາວ ໄດ້ເລີ້ມຫຼຸດພົ້ນຈາກເງື່ອນໄຂການຊ່ວຍເຫຼືອເງິນທຶນດັ່ງກ່າວ. ການສະໜັບສະໜຸນຂອງ ທະນາຄານໂລກໃຫ້ແກ່ແຜນງານສາທາລະນະສຸກຂອງລັດຖະບານ ແມ່ນຜ່ານ ໂຄງການແຜນງານບໍລິຫານຄຸ້ມຄອງສາທາລະນະສຸກ ແລະ ໂພຊະນາການ (HGNDP) ທີ່ກຳລັງດຳເນີນຢູ່ໃນປັດຈຸບັນ (ສືບຕໍ່ຮອດເດືອນທັນວາປີ 2020), ຊຶ່ງສຸມໃສ່ວຽກງານສຸຂະພາບແມ່ ແລະ ເດັກ, ການວາງແຜນຄອບຄົວ, ໂພຊະນາການ ແລະ ການຈົດທະບຽນການເກີດ. ໂຄງການແຜນງານບໍລິຫານຄຸ້ມຄອງສາທາລະນະສຸກ ແລະ ໂພຊະນາການ (HGNDP) ໄດ້ເບີກຈ່າຍທຶນໄປແລ້ວປະມານ 50 ສ່ວນຮ້ອຍ ແລະ ຄາດວ່າຈະຕ້ອງການເພີ້ມການສະໜອງທຶນຕື່ມ. ແຜນ CPF ຍັງຈະມີໂຄງການໃໝ່ ທີ່ສຸມໃສ່ການສ້າງຄວາມຕ້ອງການໃຫ້ແກ່ການບໍລິການສາທາລະນະສຸກ, ເປັນຕົ້ນແມ່ນການເຂົ້າເຖິງການຮັກສາສຸຂະພາບເພື່ອທຸກຄົນ ຫຼື ການປົກຄຸມສຸຂະພາບທຸກຖ້ວນໜ້າ (Universal Health Care). ການຂະຫຍາຍອັດຕາປົກຄຸມຢ່າງເຕັມສ່ວນຂອງການວາງແຜນຄອບຄົວ, ລວມທັງການບັນລຸ 20 ສ່ວນຮ້ອຍ ທີ່ມີຄວາມຕ້ອງການແຕ່ຍັງບໍ່ສາມາດເຂົ້າເຖິງການບໍລິການ ແມ່ນໄດ້ຖືກກຳນົດເຂົ້າຢູ່ໃນແຜນສະໜອງທຶນຂອງ IDA ໂດຍທີ່ອົງການ UNFPA ຈະໃຫ້ການສະໜັບສະໜຸນໃນການການຈັດຕັ້ງປະຕິບັດ. ລະບົບຖານຂໍ້ມູນຄຸ້ມຄອງພົນລະເມືອງ, ຊຶ່ງຈະໄດ້ຮັບການສົ່ງເສີມພັດທະນາຂຶ້ນ ເປັນສ່ວນໜຶ່ງຂອງໂຄງການໃໝ່ທີ່ຈະສະໜັບສະໜຸນວຽກງານສະຖິຕິ ແລະ ການຂຶ້ນທະບຽນການເກີດການຕາຍ ແລະ ສະຖິຕິຄຸ້ມຄອງພົນລະເມືອງ (CRVS), ທີ່ມີເປົ້າໝາຍສະໜັບສະໜຸນລະບົບໃຫ້ເຂັ້ມແຂງ ເພື່ອສາມາດຂະຫຍາຍໃຫ້ກວມເອົາການຄຸ້ມຄອງ ການປົກຄຸມສຸຂະພາບທຸກຖ້ວນໜ້າ (Universal Health Care).

ຈຸດປະສົງ 2.4 - ການຫລຸດຜ່ອນຄວາມສ່ຽງ ແລະ ການເຂົ້າເຖິງການບໍລິການທາງສັງຄົມຢ່າງທົ່ວເຖິງ

47.ກົນໄກປະກັນສັງຄົມຢ່າງເປັນທາງການເພື່ອປັບປຸງຄວາມສາມາດຟື້ນຕົວຄົນຕ້ອງຄຽງຄູ່ໄປກັບການລົງທຶນໃນວຽກງານສາທາລະນະສຸກ ແລະ ການສຶກສາ. ປະຊາຊົນຍັງມີຄວາມອ່ອນແອ ຕໍ່ວິກິດການ, ການເຂົ້າເຖິງ ແລະ ການຊົມໃຊ້ການບໍລິການສາທາລະນະສຸກ ແລະ ການສຶກສາທີ່ຍັງຕ່ຳ, ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ແລະ ໃນບາງກຸ່ມຄົນ. ໃນໄລຍະຂອງ CPF, ກຸ່ມທະນາຄານໂລກ ມີເປົ້າໝາຍໃຫ້ການສະໜັບສະໜຸນແກ່ສ່ວນປະກອບພື້ນຖານຂອງລະບົບປະກັນສັງຄົມ, ຊຶ່ງຕົ້ນຕໍແມ່ນແນໃສ່ ຫລຸດຜ່ອນລະດັບຄວາມສ່ຽງຢູ່ເຂດຊົນນະບົດ, ສົ່ງເສີມຄວາມຕ້ອງການ ແລະ ການນຳໃຊ້ການບໍລິການທາງດ້ານສັງຄົມ ແລະ ປັບປຸງສຸຂະພາບຂອງແມ່ ແລະ ເດັກ ແລະ

ໂພຊະນາການ. ໂດຍສຸມສະເພາະໃສ່ເດັກຍິງໄວໜຸ່ມ. ການໄກທີ່ມຸ້ງໝາຍດັ່ງກ່າວລວມມີ ແຜນໃຫ້ເງິນອຸດໜູນ, ການສະໜອງອາຫານໃນໂຮງຮຽນ ແລະ ເງິນສະໜັບສະໜຸນ. ມາດຕະການນີ້ຈະສົມທົບກັບກິດຈະກຳການປ່ຽນແປງພຶດຕິກຳ. ບັນຫາຫຼັກແມ່ນຄວາມສ່ຽງສູງຕໍ່ວິກິດການ, ໂດຍສະເພາະສຳລັບຜູ້ທຸກຍາກ ແລະ ຜູ້ໄກ້ທຸກ, ຊຶ່ງສະແດງໃຫ້ເຫັນເຖິງຄວາມຈຳເປັນຕ້ອງມີການສະໜັບສະໜຸນ ຫຼາຍຂຶ້ນເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ກຸ່ມທີ່ມີຄວາມສ່ຽງສູງທີ່ໃກ້ກັບເສັ້ນທຸກຍາກ. ໂຄງການໃໝ່ນີ້ຈະຄົ້ນຄວ້າຫາວິທີການເພື່ອຫລຸດຜ່ອນສິ່ງດັ່ງກ່າວ, ໂດຍຈະສົ່ງເສີມໂຄງການທີ່ກຳລັງດຳເນີນຢູ່ໃນປັດຈຸບັນໃນຂະແໜງສາທາລະນະສຸກ, ສຶກສາ ແລະ ການຫລຸດຜ່ອນຄວາມທຸກຍາກ.

ຂົງເຂດຈຸດສຸມທີ 3: ປົກປັກຮັກສາສິ່ງແວດລ້ອມ

ຈຸດປະສົງ 3.1 - ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຍືນຍົງ

49. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ຍຸດທະສາດແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດໄດ້ເລັ່ງໃສ່ເຮັດໃຫ້ ສປປ ລາວ ເຂົ້າສູ່ເສັ້ນທາງການພັດທະນາ ການເຕີບໂຕສີຂຽວ ແບບຍືນຍົງ. ຮູບແບບຂອງກຸ່ມທະນາຄານໂລກ ໃນການສະໜອງທຶນແກ່ນະໂຍບາຍ ການພັດທະນາການເຕີບໂຕສີຂຽວແບບຍືນຍົງ ໄດ້ສຸມໃສ່ຮັບຮູ້ສິ່ງທ້າທາຍທີ່ພົບເຫັນໃນປັດຈຸບັນ ຕໍ່ຄວາມຍືນຍົງຂອງການເຕີບໂຕ, ແຕ່ພ້ອມດຽວກັນ ກໍຫວັງໃຫ້ມີຜົນປະໂຫຍດຈາກການລະໂອກາດ. ໃນຕົວຈິງ, ຮູບແບບທີ່ໃຫ້ການສະໜັບສະໜຸນ ລວມເອົາການປັບປຸງລະບອບລະບຽບການໃຫ້ມີຄວາມເຂັ້ມແຂງ ດ້ວຍເຄື່ອງມື ແລະ ກົນໄກການປະສານງານ ເພື່ອບັນຈຸເອົາການພິຈາລະນາດ້ານສິ່ງແວດລ້ອມ ແລະ ສັງຄົມ ເຂົ້າໃນການວາງແຜນ ແລະ ການຕົກລົງ ກ່ຽວກັບການລົງທຶນ, ຊຶ່ງແມ່ນການປ່ຽນແປງ ຈາກ

ຮູບແບບກິດຈະກຳພັດທະນາເພື່ອຂຸດຄົ້ນຊັບພະຍາກອນທຳມະຊາດ ທີ່ມີລັກສະນະຊໍ້ຄາວ. ວັດທະນະທຳການຄຸ້ມຄອງ ແລະ ການວາງແຜນ ແບບເປັນເຈົ້າການ ຈະປະຕິບັດຢ່າງຄຽງຄູ່ກັບການປັບປຸງຄວາມສາມາດທາງດ້ານ ການຄວບຄຸມດູແລ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ.

49. ກຸ່ມທະນາຄານໂລກຈະສືບຕໍ່ ແລະ ເພີ່ມການສະໜັບສະໜູນ ໃຫ້ແກ່ ສປປ ລາວ ສຳລັບການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນ ທຳມະຊາດຢ່າງມີຄວາມຮັບຜິດຊອບ, ລວມທັງ ໂດຍຜ່ານໂຄງການສິ່ງແວດລ້ອມ ແລະ ສັງຄົມຂອງ ສປປ ລາວ ໄລຍະ 2 (LENS 2) ທີ່ດຳເນີນຢູ່ໃນປັດຈຸບັນ ທີ່ສະໜັບສະໜູນພາຫະນະການສະໜອງທຶນແບບສະເພາະ ຄື: ກອງທຶນປົກປັກຮັກສາສິ່ງແວດລ້ອມ (Environment Protection Fund) ເພື່ອສ້າງຄວາມສາມາດ ແລະ ຄວາມໜ້າເຊື່ອຖືໃຫ້ສົມຖານະເປັນກອງທຶນ. ກຸ່ມທະນາຄານໂລກຍັງຈະສືບຕໍ່ສະໜັບສະໜູນຄວາມພະຍາຍາມຂອງ ສປປ ລາວ ໃນການຕ້ານການລັກລອບຄ້າຂາຍສັດນ້ຳ-ສັດປ່າທີ່ຜິດກົດໝາຍ, ຊຶ່ງເປັນບັນຫາເປັນຫ່ວງຂອງສາກົນ, ເນື່ອງຈາກ ສປປ ລາວ ເປັນທາງຜ່ານທີ່ສຳຄັນ ໄປສູ່ຫວຽດນາມ ແລະ ຈີນ. ໂຄງການຂະຫຍາຍການຄຸ້ມຄອງຈັດສັນປ່າໄມ້ແບບຍືນນານແລະມີສ່ວນຮ່ວມທີ່ດຳເນີນຢູ່ໃນປັດຈຸບັນ,ຊຶ່ງໄດ້ຮັບການສະໜອງທຶນສ່ວນໜຶ່ງຈາກແຜນງານລົງທຶນໃນປ່າໄມ້ ໄດ້ປະຕິບັດວຽກງານຜ່ານກະຊວງກະສິກຳ ແລະ ປ່າໄມ້ ເພື່ອສະໜັບສະໜູນການຄຸ້ມຄອງແບບຍືນຍົງ ຂອງປ່າຜະລິດຈຳນວນ 40 ແຫ່ງ ແລະ ບ້ານຈຳນວນຫຼາຍກວ່າ 900 ບ້ານ ໃນການດຳລົງຊີວິດແບບຍືນຍົງ, ໂດຍທັງໝົດໝີ້ແມ່ນເລັ່ງໃສ່ການຫລຸດຜ່ອນການປ່ຽນແປງດິນຟ້າອາກາດ. ພາຍໃຕ້ກອງທຶນຮ່ວມ ສຳລັບການກ່ອນຈາກປ່າໄມ້ (FCPF), ການຊ່ວຍເຫຼືອໄດ້ສະໜອງໃຫ້ແກ່ລັດຖະບານ ເພື່ອພັດທະນາຍຸດທະສາດແຫ່ງຊາດ ແລະ ຄວາມສາມາດ ສຳລັບການຫລຸດຜ່ອນການປ່ຽນແປງດິນຟ້າອາກາດ ໂດຍຜ່ານການຫລຸດຜ່ອນການປ່ອຍອາຍພິດຈາກການຕັດໄມ້ທຳລາຍປ່າ ແລະ ການເຊື່ອມໂຊມຂອງປ່າໄມ້ (REDD+). ເຊັ່ນດຽວກັນກັບ FCPF, ກິດຈະການໃໝ່ ກ່ຽວກັບທຶນການກ່ອນ (Carbon Finance operation) ໄດ້ຖືກກະກຽມ ແລະ ມີເປົ້າໝາຍເພື່ອປັບປຸງການປົກປັກຮັກສາປ່າໄມ້ຢູ່ 6 ແຂວງ ເພື່ອຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ.

51. ຊັບສິນທີ່ສຳຄັນຂອງ ສປປ ລາວ ແມ່ນແມ່ນ້ຳຂອງ ແລະ ສາຂາຕ່າງໆຂອງແມ່ນ້ຳຂອງ. ການຄຸ້ມຄອງອ່າງແມ່ນ້ຳຢ່າງຍືນຍົງໃນທົ່ວຂະແໜງການ, ລວມທັງໄຟຟ້ານ້ຳຕົກ, ມີຄວາມສຳຄັນທີ່ສຸດ. ການສະໜັບສະໜູນຂອງທະນາຄານໂລກ ໄດ້ສະໜອງ ໂດຍຜ່ານໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ສຳລັບແມ່ນ້ຳຂອງ (MIWRM program) ທີ່ດຳເນີນຢູ່ໃນປັດຈຸບັນ ທີ່ມີລັກສະນະຄືກັນກັບໂຄງການຢູ່ກຳປູເຈຍ, ຫວຽດນາມ, ແລະ ການສະໜັບສະໜູນໃຫ້ແກ່ຄະນະກຳມາທິການແມ່ນ້ຳຂອງ (Mekong River Commission). ອັນນີ້ໄດ້ຖືກເພີ່ມເສີມໂດຍວຽກງານຢູ່ກະຊວງພະລັງງານ ແລະ ບໍ່ແຮ່ ໂດຍຜ່ານໂຄງການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດ ໃນຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່ (HMTA). ການສະໜອງທຶນເພີ່ມເຕີມໃຫ້ແກ່ໂຄງການ MIWRM ມີຈຸດປະສົງເພື່ອສືບຕໍ່ສະໜັບສະໜູນ ການພັດທະນາສະພາບແວດລ້ອມທີ່ອີງໃສ່ລະບຽບການ ສຳລັບການນຳໃຊ້ນ້ຳໃນທຸກຂະ-ແໜງ ການ ແລະ ໂຄງການຊ່ວຍເຫຼືອດ້ານວິຊາການ ໃຫ້ແກ່ການພັດທະນາພະລັງງານ ແລະ ບໍ່ແຮ່ແບບຍືນຍົງ (SEEDTA) ທີ່ກຳນົດໃຫ້ມີການສຸມໃສ່ການເຊື່ອມສານການຄຸ້ມຄອງນ້ຳ ແລະ ການປະຕິບັດກົດໝາຍວ່າດ້ວຍນ້ຳທີ່ມີຜົນນຳໃຊ້ ໃນຂະແໜງເຂື່ອນໄຟຟ້ານ້ຳຕົກ.

ຈຸດປະສົງ 3.2 - ປັບປຸງການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃຫ້ຂັ້ນແຂງ ແລະ ສ້າງຄວາມເຂັ້ມແຂງທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ

52. ກຸ່ມທະນາຄານໂລກຈະສະໜັບສະໜູນເປົ້າໝາຍຂອງລັດຖະບານ ເພື່ອບັນລຸການເຕີບໂຕສີຂຽວແບບຍືນຍົງ ໂດຍຜ່ານການເສີມຂະຫຍາຍຄວາມເຂັ້ມແຂງທົນທານຕໍ່ໄພທຳມະຊາດ. ຈະສະໜອງທຶນເພື່ອຊ່ວຍຫລຸດຜ່ອນຄວາມສ່ຽງຈາກໄພນ້ຳຖ້ວມ ແລະ ເສີມຂະຫຍາຍຄວາມສາມາດສະໜອງທຶນ ເພື່ອຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ. ໂຄງການຈະເສີມຂະຫຍາຍຄວາມເຂັ້ມແຂງທົນທານຕໍ່ໄພນ້ຳຖ້ວມ ຢູ່ແຂວງອຸດົມໄຊ ທີ່ມີຄວາມບອບບາງເປັນພິ ເສດຕໍ່ໄພນ້ຳຖ້ວມ. ໂຄງການຍັງຈະຍົກລະດັບຂີດຄວາມສາມາດຂອງກົນອຸຕຸນິຍົມ ແລະ ອຸທົກກະສາດ ເພື່ອພະຍາກອນ ໄພນ້ຳຖ້ວມແບບກະທັນຫັນ ແລະ ແຈກຢາຍລະບົບສື່ສານເຕືອນໄພລ່ວງໜ້າ. ທະນາຄານໂລກຍັງຈະໃຫ້ການສະໜັບສະໜູນແກ່ກະຊວງການເງິນ ເພື່ອເພີ່ມຄວາມເຂັ້ມແຂງທາງດ້ານການເງິນຂອງ ສປປ ລາວ ໃນການຕ້ານກັບໄພພິບັດຈາກທຳມະຊາດ ແລະ ຄວາມສາມາດຂອງລັດຖະບານ ເພື່ອຕອບສະໜອງຄວາມຕ້ອງການທຶນ ສຳລັບໄລຍະຫຼັງໄພພິບັດ. ອັນສຸດທ້າຍ, ຂະແໜງການຂົນສົ່ງຈະຖືກປັບປຸງໃຫ້ເຂັ້ມແຂງ ໂດຍລວມເອົາຄວາມເຂັ້ມແຂງທົນທານຕໍ່ໄພພິບັດ ເຂົ້າໃນວຽກງານຟື້ນຟູບູລະນະເສັ້ນທາງ. ບັນດາໂຄງການທີ່ໄດ້ຮັບທຶນຈາກທະນາຄານໂລກ ໄດ້ລວມເອົາອົງປະກອບສຸກເສີນສຳລັບການຕອບໂຕ້ໂດຍໄວ.

ບັນຫາທີ່ພົວພັນກັບຫຼາຍຂະແໜງການ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ

53. ສະຖາບັນທີ່ເຂັ້ມແຂງ ແມ່ນພື້ນຖານສຳລັບຜົນສຳເລັດ ໃນທຸກແຜນງານຂອງລັດຖະບານ ແລະ ແຜນງານ ສະໜອງທຶນ ແລະ ຊ່ວຍເຫລືອວິຊາການ ຂອງຂອບການເປັນຄູ່ຮ່ວມມືກັບ ສປປ ລາວ (CPF) ຂອງກຸ່ມທະນາຄານໂລກ ກໍໄດ້ ເນັ້ນຫນັກໃສ່ສ້າງຄວາມເຂັ້ມແຂງໃຫ້ສະຖາບັນ. ຢູ່ກະຊວງການເງິນ, ການຕິດຕາມສະພາບເສດຖະກິດມະຫາພາກ ແລະ ໂຄງການຫັນວຽກງານຄຸ້ມຄອງການເງິນຂອງລັດໄປສູ່ທັນສະໄໝ ທີ່ດຳເນີນຢູ່ໃນປັດຈຸບັນ ແມ່ນເລັ່ງໃສ່ເພື່ອສະໜອງຄຳແນະນຳຢ່າງທັນການ ຕາມຄວາມຕ້ອງການ. ການສະຫນັບສະຫນູນຕໍ່ຂະແໜງການເງິນ ກໍຄື ການເຮັດວຽກຮ່ວມກັນກັບທະນາຄານແຫ່ງ ສປປ ລາວ. ຄຸນນະພາບຂອງສະຖາບັນ ແລະ ສະພາບແວດລ້ອມທີ່ອີງໃສ່ລະບຽບການໃນຂະແໜງການເງິນ ຈະໄດ້ຮັບການຊ່ວຍເຫຼືອ ດ້ວຍການເສີມຂະຫຍາຍຂອບກົດ ໝາຍ ແລະ ລະບຽບການ, ໂດຍສະເພາະທີ່ພົວພັນກັບການຄຸ້ມຄອງຂະແໜງການ ແລະ ການແກ້ໄຂບັນຫາຕ່າງໆຢ່າງຖືກຂັ້ນຕອນຂອງທະນາຄານໃຫ້ມີຄວາມເປັນລະບຽບຮຽບຮ້ອຍ. ພ້ອມດຽວກັນ ກໍສ້າງຄວາມເຂັ້ມແຂງໃຫ້ພາກສ່ວນຈັດຕັ້ງປະຕິບັດ ເພື່ອຊ່ວຍໃຫ້ສາມາດ ປະຕິບັດໃຫ້ສອດຄ່ອງຕາມລະບຽບກົດໝາຍ. ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສະຖິຕິແຫ່ງຊາດ ທີ່ດຳເນີນຢູ່ໃນປັດຈຸບັນ ມີຄວາມຈຳເປັນແກ່ການອີໄຈຂໍ້ມູນຄວາມທຸກຍາກ ແລະ ສະໜັບສະໜູນການເກັບກຳ ແລະ ເຜີຍແຜ່ບັນດາຕົວຊີ້ບອກແບບແຍກເພດຍິງ-ຊາຍ. ໄດ້ມີແຜນສືບຕໍ່ໂຄງການສະຖິຕິດັ່ງກ່າວ ໂດຍຈະລວມເອົາວຽກງານສະຖິຕິ ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງພົນລະເມືອງ, ຊຶ່ງເປັນພື້ນຖານສຳຄັນໃຫ້ແກ່ການປະຕິບັດແຜນງານປະກັນສັງຄົມຢ່າງມີປະສິດທິຜົນ. ໃນຂະແໜງທາງ, ໂຄງການພັດທະນາຂະແໜງຂົວ-ທາງ ໄລຍະ 2 ທີ່ໄດ້ຮັບອະນຸມັດຫວ່າງມໍ່ໆມານີ້ ລວມເອົາການສະໜັບສະໜູນຢ່າງກວ້າງໃຫ້ແກ່ການພັດທະນາລະບົບການສ້າງແຜນການ ແລະ ແຜນງົບປະມານ ສຳລັບການບຸລະນະຮັກສາເສັ້ນທາງຢ່າງມີປະສິດທິຜົນ ແລະ ສະໜັບສະໜູນການພັດທະນາການຈັດຊື້ແບບເອເລັກໂຕຣນິກ (e-procurement) ຢູ່ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອຄຸ້ມຄອງຂະບວນການເຮັດສັນຍາມອບໝ້າຢ່າງມີປະສິດທິຜົນ ແລະ ຄວາມໂປ່ງໃສເພີ່ມຂຶ້ນ.

54. ແຜນງານຂອງຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ຍັງມີແຜນ ສະໜັບສະໜຸນແຜນງານດຸ່ນດ່ຽງງົບປະມານ (DPF), ໂດຍທີ່ມີເງື່ອນໄຂວ່າເສດຖະກິດມະຫາພາກມີຄວາມຫມັ້ນທ່ຽງ. ບັນດາແຜນງານດຸ່ນດ່ຽງງົບປະມານ ຊຶ່ງຢູ່ໃນຂັ້ນກະກຽມໃນປັດຈຸບັນ ຈະສະໜັບສະໜຸນການຫັນປ່ຽນໄປສູ່ການເຕີບໂຕສີຂຽວຢູ່ ສປປ ລາວ ແລະ ເສີມຂະຫຍາຍຄວາມສາມາດປັບຕົວໄດ້ ໂດຍຜ່ານການປັບປຸງການຄຸ້ມຄອງເສດຖະກິດມະຫາພາກ. ເຖິງແມ່ນວ່າ ຜົນໄດ້ຮັບຂອງແຜນງານດັ່ງກ່າວຈະເລັ່ງໂດຍກົງ ໃສ່ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດຢ່າງຍືນຍົງ, ແຕ່ວາລະການປະຕິຮູບນະໂຍບາຍລວມ ແມ່ນເພື່ອເລັ່ງໃສ່ການປັບປຸງການບໍລິຫານລັດ ແລະ ການສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ. ສິ່ງທ້າທາຍພື້ນຖານຂອງການປ່ຽນແປງໄປສູ່ການເຕີບໂຕທີ່ຍືນຍົງ ແລະ ທົ່ວເຖິງ ມີສາເຫດຕົ້ນຕໍມາຈາກຄວາມບໍ່ເຂັ້ມແຂງຂອງລະບົບການຄຸ້ມຄອງແລະນໍາໃຊ້ຊັບພະຍາກອນທໍາມະຊາດ. ການປຶກສາຫາລືກັບລັດຖະບານ ໃນການກະກຽມແຜນງານດຸ່ນດ່ຽງງົບປະມານ DPF series ໄດ້ສຸມໃສ່ນໍາພາການປະຕິຮູບນະໂຍບາຍໃນບາງຂະແໜງການສະເພາະ, ເປັນຕົ້ນແມ່ນຂະແໜງພະລັງງານ ແລະ ບໍ່ແຮ່, ນ້ໍາ, ປ່າໄມ້ ແລະ ກະສິກໍາ, ທີ່ພົວພັນກັບການວາງແຜນແບບຄໍານຶງເຖິງອະນາຄົດໄລຍະຍາວ ແລະ ການວາງແຜນ ແລະ ການຄຸ້ມຄອງແບບປະສົມປະສານ.

55. ສໍາລັບແຕ່ລະໝາກຜົນທີ່ຄາດໝາຍໄວ້ໃນຂອບການເປັນຄູ່ຮ່ວມມື (CPF) ແມ່ນມີການອອກແບບປະສົມປະສານຮູບແບບຂອງການຊ່ວຍເຫລືອ ໃຫ້ສອດຄ່ອງ ໂດຍລວມມີກົນໄກການເຮັດບົດສຶກສາແລະໃຫ້ຄວາມຮູ້, ການລະດົມການຮ່ວມມືຈາກຫລາຍພາກສ່ວນ ແລະ ການສະໜັບສະໜຸນດ້ານການເງິນຈາກກຸ່ມທະນາຄານໂລກ.

ການຈັດຕັ້ງປະຕິບັດຂອບການເປັນຄູ່ຮ່ວມມືກັບ ສປປ ລາວ (CPF)

56. ຂອບ CPF ຈະໃຫ້ທຶນສະໜັບສະໜຸນການພັດທະນາຂອງ ສປປ ລາວ ໂດຍຜ່ານການນໍາໃຊ້ຂ້ອງທຶນ IDA18 ສໍາລັບປີງົບປະມານ 2018-2020 ໃນມູນຄ່າ ລະຫວ່າງ 242 ລ້ານ ຫາ 272 ລ້ານ ໂດລາສະຫະລັດ. ການຈັດສັນທຶນຂອງ IDA18 ດັ່ງກ່າວ ໄດ້ເພີ່ມຂຶ້ນປະມານ 60 ສ່ວນຮ້ອຍ ທຽບໃສ່ການຈັດສັນທຶນຂອງ IDA17 ສໍາລັບ ປີງົບປະມານ 2015-2017 ຊຶ່ງມີຈໍານວນປະມານ 173 ລ້ານ ໂດລາສະຫະລັດ. ການສະໜອງທຶນໃໝ່ດັ່ງກ່າວ ຈະເພີ່ມເຕີມໃຫ້ແກ່ໂຄງການທີ່ໄດ້ຮັບທຶນຈາກ IDA ທີ່ດໍາເນີນຢູ່ໃນປັດຈຸບັນ ສໍາລັບ ສປປ ລາວ ທີ່ມີມູນຄ່າທັງໝົດ 347,5 ລ້ານ ໂດລາສະຫະລັດ ຮອດເດືອນກຸມພາ 2017 ບວກກັບຈໍານວນ 60 ລ້ານ ໂດລາສະຫະລັດ ຈາກກອງທຶນຊ່ວຍເຫຼືອລ້າ. ການເພີ່ມຂຶ້ນຂອງທຶນ IDA ຈະສ້າງໂອກາດເພື່ອຂະຫຍາຍຜົນກະທົບ ໃນຂົງເຂດຕົ້ນຕໍຂອງການເຕີບໂຕສີຂຽວ ແລະ ການຂາດໂພຊະນາການ ໂດຍຜ່ານໂຄງການສໍາຄັນ ກ່ຽວກັບການສະໜອງນ້ໍາ ແລະ ສຸຂະອະນາໄມຢູ່ເຂດຊົນນະບົດ.

57. ຮອດປະຈຸບັນ ອົງການການເງິນສາກົນ (IFC) ໄດ້ລົງທຶນຈໍານວນ 35 ລ້ານ ໂດລາສະຫະລັດ ໃນຂະແໜງໄຟຟ້າ, ທະນາຄານ, ອຸດສາຫະກໍາປຸງແຕ່ງ ແລະ ການທ່ອງທ່ຽວ. ໂຄງການຊ່ວຍເຫລືອດ້ານວິຊາການຂອງ IFC ໃນປັດຈຸບັນ ມີຈໍານວນ 13 ລ້ານ ໂດລາສະຫະລັດ. ໃນໄລຍະການຈັດຕັ້ງປະຕິບັດຂອບການເປັນຄູ່ຮ່ວມມື, IFC ຈະສືບຕໍ່ແຜນງານໃຫ້ຄໍາປຶກສາວິຊາການ ໃນຂະແໜງຍຸດທະສາດ ລວມທັງຂະແໜງໄຟຟ້ານ້ໍາຕົກ, ປ່າໄມ້ ແລະ ການເງິນ ພ້ອມທັງຊອກຫາໂອກາດການລົງທຶນໃນບາງຂະແໜງການ, ເຊັ່ນ: ພະລັງງານ (ໂດຍສະເພາະແມ່ນໂຄງການເຂື່ອນໄຟຟ້າ ແລະ ໂຄງການພະລັງງານທົດແທນອື່ນໆ), ການບໍລິການດ້ານການເງິນ (ທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ), ການກະສິກໍາ, ການທ່ອງທ່ຽວ ແລະ ອຸດສາຫະກໍາປຸງແຕ່ງ.

ตาຕະລາງ 2: ແຜນງານຂອງກຸ່ມທະນາຄານໂລກ ສຳລັບໄລຍະ 2017-2021

ຂົງເຂດຈຸດສຸມ	ເຄື່ອງມືຕົ້ນຕໍ	
	ຄວາມຮູ້ ແລະ ຄວາມສາມາດ	**ການສະໜອງທຶນ**
ສະໜັບສະໜຸນການເຕີບໂຕທີ່ສົມດຸນ	•ການຕິດຕາມສະພາບເສດຖະກິດມະຫາພາກ •ລວມບົດລາຍງານເສດຖະກິດຂອງ ສປປ ລາວ ແລະ ການວິໄຈລາຍຈ່າຍ ຂອງລັດ •ການວິໄຈຄວາມທຸກຍາກ •ແຜນງານວິໄຈການຫັນການຄຸ້ມຄອງການເງິນຂອງລັດໄປສູ່ ທັນສະໄໝ •ແຜນງານວິໄຈການພັດທະນາຂະແໜງການເງິນ •ແຜນງານວິໄຈການຄ້າ ແລະ ຄວາມສາມາດໃນການແຂ່ງຂັນ	•ໂຄງການພັດທະນາຂະແໜງຂົວທາງ ໄລຍະ II •ເງິນກູ້ໃຫ້ແກ່ Banque Franco Lao IFC •ເງິນກູ້ໃຫ້ແກ່ທະນາຄານ ACLEDA IFC •ເງິນກູ້ໃຫ້ແກ່ທະນາຄານທຸລະກິດ IFC •ວຽກງານສະຖິຕິ ແລະ ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງ ພົນລະເມືອງ •ທຸລະກິດການກະເສດ •ການລົງທຶນໃນໂຄງການເຂື່ອນໄຟຟ້າ IFC •ການຄຸ້ມຄອງການເງິນພາກລັດ •ການພັດທະນາຄວາມສາມາດແຂ່ງຂັນ ແລະ ພາກສ່ວນເອກະຊົນ •ທາງຫຼວງແຫ່ງຊາດ ເລກ 13 ເໜືອ •ການພັດທະນາຊົນນະບົດ / ການຂະຫຍາຍຕາໜ່າງໄຟຟ້າ •ໂຄງການການເຊື່ອມຕໍ່ດ້ານພະລັງງານ
ລົງທຶນໃນການພັດທະນາຄົນ	•ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງ ພົນລະເມືອງ •ການແກ້ໄຂຄວາມທຸກຍາກ ແລະ ການຂາດສານອາຫານ •ການສະໜອງນ້ຳ ແລະ ສຸຂະອະນາໄມ ຢູ່ເຂດຊົນນະບົດ ທີ່ແມ່ໃສ່ຜູ້ທຸກຍາກ •ໂຄງການວິໄຈຂະແໜງການສຶກສາ	•ການສະໜອງທຶນເພີ່ມ ໃຫ້ແກ່ໂຄງການພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ •ລະບົບປະກັນສັງຄົມ ເພື່ອຫລຸດຜ່ອນຄວາມອ່ອນແອ ແລະ ການຂາດສານອາຫານ •ການຄຸ້ມຄອງຮັກສາສຸຂະພາບເພື່ອທຸກຄົນ •ການສະໜອງນ້ຳ ແລະ ສຸຂະອະນາໄມ ເພື່ອສຸຂະພາບ •ການສຶກສາຂອງເດັກກ່ອນໄວຮຽນ
ປົກປັກຮັກສາສິ່ງແວດລ້ອມ	•ຍຸດທະສາດດ້ານບໍ່ແຮ່ ແລະ ນ້ຳ •ແຜນງານວິໄຈພະລັງງານ ແລະ ບໍ່ແຮ່ •ການໃຫ້ຄຳປຶກສາດ້ານພະລັງງານໄຟຟ້ານ້ຳຕົກ (IFC)	•ການສະໜອງທຶນເພີ່ມເຕີມ ໃຫ້ແກ່ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ສຳລັບແມ່ນ້ຳຂອງ •ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ •ການຊ່ວຍເຫຼືອດ້ານວິຊາການ ໃຫ້ແກ່ການພັດທະນາພະລັງງານ ແລະ ບໍ່ແຮ່ ແບບຍືນຍົງ •ການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວຍ້ອນການທຳລາຍປ່າໄມ້ (ກອງທຶນການກອນ) •ການປູກຕົ້ນໄມ້ ແລະ ການປຸງແຕ່ງໄມ້ IFC •ໂຄງການພະລັງງານທົດແທນ (ພະລັງງານຈາກນ້ຳ, ແສງຕາເວັນ ຫຼື ລົມ) IFC
ບັນຫາທີ່ພົວພັນກັບຫຼາຍຂະແໜງການ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ	•ວຽກງານວິເຄາະການເຕີບໂຕສີຂຽວ •ວຽກງານຄວາມຮູ້ເພື່ອປະກອບສ່ວນໃນການສ້າງຄວາມ ເຂັ້ມແຂງໃຫ້ແກ່ສະຖາບັນ	•ການສະໜັບສະໜູນງົບປະມານສຳລັບການເຕີບໂຕສີຂຽວ (ສະໜອງທຶນໃນປີ 2017, 2019 ແລະ 2021)

58. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ຈະກວມໄລຍະຫ້າປີ ເພື່ອໃຫ້ສົມຄູ່ກັບເວລາຂອງແຜນພັດທະ ນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ຈະມີການທົບທວນຜົນການປະຕິບັດງານ ແລະ ຖອດຖອນບົດຮຽນ (PLR) ສຳລັບເຄິ່ງໄລຍະ. ແຜນງານຈະສາມາດປ່ຽນແປງຕາມສະພາບຂອງຄວາມຕ້ອງການ ແລະ ຄວາມຄືບໜ້າຂອງໜ້າວຽກ. ການທົບທວນຜົນການປະຕິບັດງານ ແລະ ຖອດຖອນບົດຮຽນ (PLR) ຈະປະເມີນຄວາມຄືບໜ້າໃນການພັດທະນາ ແລະ ມີໂອກາດດັດປັບຕາມຄວາມຕ້ອງການ.

59. ຜົນການປະຕິບັດງານ ຂອງແຜນງານຂອງລັດຖະບານທີ່ໄດ້ຮັບທຶນຈາກທະນາຄານໂລກຢູ່ ສປປ ລາວ ແມ່ນມີຄວາມເຂັ້ມແຂງ. ການເບີກຈ່າຍສູງຢ່າງສະໜ່ຳສະເໜີ ສະແດງເຖິງຄວາມສາມາດໃນການຈັດຕັ້ງປະຕິບັດ. ບັນດາແຜນ ງານທີ່ໄດ້ຮັບການສະໜັບສະໜູນຈາກທະ ນາຄານໂລກ ໄດ້ຖືກຈັດຕັ້ງປະຕິບັດ ໂດຍຜ່ານກົນໄກຂອງກະຊວງ ໂດຍແມ່ນພະນັກງານຂອງລັດຖະບານເປັນຜູ້ຮັບຜິດຊອບ ແລະ ມີການຊ່ວຍ ເຫຼືອຈາກທະນາຄານໂລກໃນການຈັດຕັ້ງປະຕິບັດ. ແຜນງານໄດ້ເຕີບໃຫຍ່ຂຶ້ນຈາກ 12 ໂຄງການທີ່ໄດ້ຮັບທຶນຈາກ IDA ລວມມູນຄ່າ 233 ລ້ານ ໂດລາສະຫະລັດ ໃນເວລາເລີ່ມຕົ້ນຍຸດທະສາດການເປັນຄູ່ຮ່ວມມືກັບປະເທດ (CPS) ທີ່ຜ່ານມາ (ມີນາ 2012) ເປັນແຜນງານທີ່ມີ 18 ໂຄງການ (ໃນນັ້ນ, ໂຄງການທີ່ໄດ້ຮັບທຶນຈາກ IDA ມີ 14 ໂຄງການ) ທີ່ຈັດຕັ້ງປະຕິບັດຢູ່ໃນປັດຈຸບັນ ລວມມູນຄ່າ 408 ລ້ານ ໂດລາສະຫະລັດ (ໃນນັ້ນ, ທຶນ IDA ມີຈຳນວນ 347,5 ລ້ານ ໂດລາສະຫະລັດ). ມູນຄ່າສະເລ່ຍຂອງໂຄງການໄດ້ເພີ່ມຂຶ້ນເປັນ 25 ລ້ານ ໂດລາສະຫະລັດ. ໃນປັດຈຸບັນ, ບັນດາໂຄງການໄດ້ຖືກຈັດອັນດັບ ມີຄວາມເພິ່ງພໍໃຈໃນລະດັບ 80 ສ່ວນຮ້ອຍ (ໃນຈຳນວນ 18 ໂຄງການ, ມີພຽງ 2 ໂຄງການທີ່ມີບັນຫາຫຍຸ້ງຍາກ). ໂຄງການທີ່ໄດ້ຮັບທຶນຈາກກອງທຶນຮ່ວມ (trust funds) ໄດ້ຖືກຄຸ້ມຄອງຢ່າງມີຍຸດທະສາດ, ໃຫ້ການສະໜັບສະໜູນໂດຍກົງແກ່ຈຸດ ປະສົງຂອງ CPF ແລະ ຖືກເຊື່ອມໂຍງກັບບັນດາໂຄງການທີ່ໄດ້ຮັບທຶນຈາກ IDA. ແຜນງານໄດ້ຖືກຈັດຕັ້ງປະຕິບັດແບບເປັນ ກຸ່ມທະນາຄານໂລກອັນດຽວ (one WBG) ແລະ ການຮ່ວມມືຢ່າງໃກ້ສິດກັບ IFC ໄດ້ສະແດງອອກໃນຫຼາຍຂະແໜງການ. ນອກຈາກໄດ້ມີການທົບທວນໂຄງການຮ່ວມກັນປະຈຳປີ ລະຫວ່າງ ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ (annual WB-ADB joint portfolio reviews) ທີ່ຈັດຂຶ້ນໂດຍກະຊວງແຜນການ ແລະ ການລົງທຶນແລ້ວ, ຍັງໄດ້ມີການທົບທວນໂຄງການທີ່ຈັດຂຶ້ນສອງຄັ້ງຕໍ່ປີ ສະເພາະໂຄງການທີ່ທະນາຄານໂລກສະໜັບສະໜູນ ຊຶ່ງໄດ້ເລີ່ມ ປະຕິບັດມາແຕ່ຕົ້ນປີ 2016 ແລະ ຈະສືບຕໍ່ໄປ.

60. ກຸ່ມທະນາຄານໂລກ (WBG) ໄດ້ສ້າງສາຍສຳພັນການເປັນຄູ່ຮ່ວມມືທີ່ເຂັ້ມແຂງ ກັບລັດຖະບານ ແຫ່ງ ສປປ ລາວ ແລະ ຄູ່ຮ່ວມພັດທະນາອື່ນໆ. ຄູ່ຮ່ວມພັດທະນາທີ່ເຄື່ອນໄຫວຢູ່ ສປປ ລາວ ມີຈຳນວນຫຼາຍສິບຄວນ. ລັດຖະບານໄດ້ພະຍາຍາມເຮັດ ໃຫ້ການສະໜັບສະໜູນຂອງຄູ່ຮ່ວມພັດທະນາມີຄວາມສອດຄ່ອງກົມກຽວກັນ ໂດຍຜ່ານຂະບວນການກອງປະຊຸມໂຕະມົນ (Roundtable Process) ໂດຍການເປັນປະທານຂອງລັດຖະບານ ສປປ ລາວ ແລະ ໂດຍຜ່ານຖະແຫຼງການວຽງຈັນ (Vientiane Declaration) ທີ່ໄດ້ປະຕິ ບັດຕາມຫຼັກການຂອງຖະແຫຼງການປາຣີ (Paris Declaration). ໂຄງການທີ່ໄດ້ຮັບທຶນຈາກກຸ່ມທະນາຄານໂລກ ບໍ່ໄດ້ປະຕິບັດວຽກງານຕາມລຳພັງ ໂດຍບໍ່ເຊື່ອມໂຍງກັບພາກສ່ວນອື່ນ; ແຜນງານຂອງກຸ່ມທະນາຄານໂລກ ພະຍາຍາມໃຫ້ການສະໜັບສະໜູນແກ່ແຜນງານຕ່າງໆຂອງລັດຖະບານ ໂດຍມີ ການປະສານສົມທົບກັບຄູ່ຮ່ວມພັດທະນາອື່ນໆ.

ຂອບການເປັນຄູ່ຮ່ວມມືກັບ ສປປ ລາວ ຂອງກຸ່ມທະນາຄານໂລກ

IV. ການຄຸ້ມຄອງຄວາມສ່ຽງ

61. ຄວາມສ່ຽງລວມ ຕໍ່ການບັນລຸຈຸດປະສົງການພັດທະນາ ຂອງຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໄດ້ຖືກປະເມີນ ຢູ່ໃນລະດັບ*ສູງສົມຄວນ* (*Substantial*). ສປປ ລາວ ໄດ້ປະເຊີນໜ້າກັບຄວາມສ່ຽງ ແລະ ຄວາມບອບບາງໃນບາງດ້ານ ທີ່ສາມາດກະທົບແຮງ ຕໍ່ການບັນລຸເປົ້າໝາຍທາງດ້ານເສດຖະກິດ ແລະ ສັງຄົມຂອງປະເທດ ແລະ ຜົນໄດ້ຮັບທີ່ຄາດໝາຍໄວ້ ຂອງບັນດາໂຄງການທີ່ໄດ້ຮັບການສະໜັບ ສະໜູນຈາກກຸ່ມທະນາຄານໂລກ ພາຍໃຕ້ຂອບການເປັນຄູ່ຮ່ວມມືນີ້. ຄວາມສ່ຽງຕົ້ນຕໍແມ່ນພົວພັນກັບການບໍລິຫານລັດທີ່ຍັງບໍ່ທັນເຂັ້ມແຂງ; ສະພາບເສດຖະກິດມະຫາພາກທີ່ບອບບາງ ແລະ ມີຄວາມສ່ຽງຂອງຄວາມເຄັ່ງຕຶງດ້ານໜີ້ສິນ; ແລະ ການຈັດ ຕັ້ງປະຕິບັດນະໂຍບາຍການຄຸ້ມຄອງຊັບ ພະຍາກອນທຳມະຊາດທີ່ຍັງບໍ່ທັນເຂັ້ມແຂງ. ການມີຄວາມມຸ່ງໝັ້ນແລະໃຫ້ຄຳໝັ້ນສັນຍາຢ່າງໜັກແໜ້ນ ຈະເປັນກຸນແຈເພື່ອເອົາຊະນະສິ່ງທ້າທາຍຕໍ່ ການບໍລິຫານລັດຢູ່ ສປປ ລາວ ແລະ ໃນປັດຈຸບັນ, ໄດ້ມີສິ່ງຊີ້ບອກເຖິງການມີຄວາມມຸ່ງໝັ້ນດັ່ງກ່າວ ໂດຍລັດຖະບານຊຸດໃໝ່.

ເອກະສານຊ້ອນທ້າຍ: ຕາຕະລາງ Matrix ຕິດຕາມຜົນໄດ້ຮັບ ຂອງຂອບການເປັນຄູ່ຮ່ວມມືກັບປະເທດ (CPF)

ຂົງເຂດຈຸດສຸມ ທີ 1: ສະໜັບສະໜູນການເຕີບໂຕທີ່ສົມດູນ

ດັ່ງທີ່ໄດ້ກຳນົດໄວ້ໃນການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD), ການເຕີບໂຕ, ການຫລຸດຜ່ອນຄວາມທຸກຍາກ ແລະ ການແຈກຢາຍຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ຈະຂຶ້ນກັບຍຸດທະສາດການເຕີບໂຕ ທີ່ສະໜັບສະໜູນໂດຍພາກເອກະຊົນທີ່ເປັນຫົວຈັກຂອງການເຕີບໂຕ. ການສະໜັບສະໜູນຂອງກຸ່ມທະນາຄານໂລກ ເພື່ອເຮັດໃຫ້ພາກເອກະຊົນມີຄວາມສາມາດຜະລິດໄດ້ຫຼາຍຂຶ້ນ ເພື່ອສ້າງວຽກເຮັດງານທຳໃຫ້ໄດ້ຫຼາຍ ແລະ ດີຂຶ້ນ ຈະສຸມໃສ່ (i) ພື້ນຖານໂຄງລ່າງ ແລະ ການເຊື່ອມໂຍງທີ່ດີ; (ii) ການເພີ່ມສະມັດຕະພາບການຜະລິດກະສິກຳ; ແລະ (iii) ການຮັບປະກັນຄວາມຍືນຍົງດ້ານການເງິນ-ງົບປະມານ ໂດຍການລະດົມລາຍຮັບ ແລະ ລາຍຈ່າຍທີ່ມີຄຸນນະພາບ ເພື່ອປັບປຸງການຄຸ້ມຄອງໜີ້ສິນ ແລະ ສະຖຽນລະພາບຂອງຂະແໜງການເງິນໃຫ້ດີຂຶ້ນ. ຂົງເຂດບູລິມະສິດນີ້ ຍັງຈະສະໜັບສະໜູນໝາກຜົນທີ 1 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ທີ່ສຸມໃສ່ການເຕີບໂຕຢ່າງຕໍ່ເນື່ອງ-ໝັ້ນທ່ຽງ ແລະ ສົມດູນ ໂດຍຜ່ານການຫັນກະສິກຳໄປສູ່ທັນສະໄໝ, ການພັດທະນາພື້ນຖານໂຄງລ່າງ, ການປັບປຸງຄວາມສາມາດແຂ່ງຂັນ ແລະ ສະຖຽນລະພາບທາງດ້ານເສດຖະກິດມະຫາພາກ.

ຈຸດປະສົງ 1.1: ປັບປຸງວຽກງານການເງິນຂອງລັດ ໃຫ້ກ້າວໄປສູ່ເສັ້ນທາງທີ່ໝັ້ນຄົງຍືນຍົງ ແລະ ສະໜັບສະໜູນສະຖຽນລະພາບຂອງຂະແໜງການເງິນ

ເຫດຜົນຂອງການສະໜັບສະໜູນ: ການຮັບປະກັນໃຫ້ການເຕີບໂຕທາງດ້ານເສດຖະກິດ ມີຄວາມຕໍ່ເນື່ອງ-ໝັ້ນທ່ຽງ ໃນສະພາບແວດລ້ອມຂອງໂລກທີ່ມີຄວາມທ້າທາຍຫຼາຍຂຶ້ນ ຮຽກຮ້ອງໃຫ້ມີຄວາມຍືນຍົງທາງດ້ານການເງິນ-ງົບປະມານ ແລະ ສະຖຽນລະພາບທາງດ້ານເສດຖະກິດມະຫາພາກ. ດ້ວຍເຫດນີ້, ການຈຳກັດການຂາດດຸນງົບປະມານຈຶ່ງມີຄວາມສຳຄັນ ເພື່ອຮັບປະກັນໃຫ້ໜີ້ສິນຂອງລັດ ຢູ່ໃນລະດັບທີ່ມີຄວາມຍືນຍົງ. ຄຽງຄູ່ກັນນັ້ນ, ຄວາມໝັ້ນຄົງຂອງຂະແໜງການເງິນຈະມີຄວາມສຳຄັນ ສຳລັບໂຄງສ້າງເສດຖະກິດມະຫາພາກທີ່ດີ ແລະ ເພື່ອສົ່ງເສີມສະພາບແວດລ້ອມທີ່ມີຊີວິດຊີວາ ສຳລັບທຸລະກິດ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືบໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
1. ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ ໄດ້ຖືກສ້າງຂຶ້ນບົນພື້ນຖານ ໂຄງສ້າງເສດຖະກິດມະຫາພາກ ທີ່ມີຄາດໝາຍການຂາດດຸນທີ່ຮອບຄອບ ເພື່ອຮັກສາໜີ້ສິນໃຫ້ຢູ່ໃນລະດັບທີ່ສາມາດຮັກສາຄວາມຍືນຍົງ. • ຂໍ້ມູນພື້ນຖານ: ໜີ້ພາກລັດ ກວມ 68% ຂອງ GDP ໃນທ້າຍປີ2016 • ຄາດໝາຍ: ໜີ້ພາກລັດ ກວມ 65% ຂອງ GDP ຫຼື ຕ່ຳກວ່າ ໃນປີ 2020 2. ການເຜີຍແຜ່ ແລະ ການປະຕິບັດ ທີ່ສອດຄ່ອງກັບລະບຽບການ ກ່ຽວກັບ ອັດຕາສ່ວນຄວາມພຽງພໍຂອງທຶນ, ຈັດຕາມປະເພດທະນາຄານ: • ຂໍ້ມູນພື້ນຖານ: ບໍ່ມີການລາຍງານ • ຄາດໝາຍ: > ລະດັບຕ່ຳສຸດທີ່ກຳນົດໄວ້ໃນ ລະບຽບການ	% ເພີ່ມຂຶ້ນ ຂອງຈຳນວນຜູ້ລົງທະບຽນຈ່າຍອາກອນ ທີ່ເປັນຜູ້ຈ່າຍອາກອນມູນຄ່າເພີ່ມ. • ຂໍ້ມູນພື້ນຖານ: 75% (ຜູ້ຈ່າຍອາກອນທີ່ຈົດທະບຽນ: 2.777, ໃນນັ້ນ 2.086 ເປັນຜູ້ຈ່າຍອາກອນມູນຄ່າເພີ່ມ. • ຄາດໝາຍ: 85% (ເພີ່ມຂຶ້ນ 10 % ຫຼື 275) ການຫລຸດລົງຂອງລາຍຈ່າຍເງິນເດືອນ: • ຂໍ້ມູນພື້ນຖານ: 8,4% ຂອງ GDP ໃນສົກປີ 2015/16 • ຄາດໝາຍ: 7,4% ຂອງ GDP ໃນປີ 2020 ກົດໝາຍຂອງທະນາຄານ ແຫ່ງ ສປປ ລາວ ແລະ ລະບຽບການທີ່ກ່ຽວຂ້ອງ ຖືກປັບປຸງໃຫ້ສອດຄ່ອງ ກັບມາດຕະຖານສາກົນ (*ເປົ້າໝາຍການພັດທະນາ ແບບຍືນຍົງ 10.5: ປັບປຸງລະບຽບການ ແລະ ການຕິດຕາມກວດກາ & ປະເມີນຜົນ ສະຖາບັນ -ຕະຫຼາດການເງິນ*): • ຂໍ້ມູນພື້ນຖານ: 0 ກົດໝາຍ/ລະບຽບການ (2016) • ຄາດໝາຍ: 5 ກົດໝາຍ/ລະບຽບການ (2021)	ຄວາມຮູ້ແລະການລະດົມການຮ່ວມມືຈາກຫລາຍ ພາກສ່ວນ • ການຕິດຕາມສະພາບເສດຖະກິດມະຫາພາກ ບົດລາຍງານເສດຖະກິດຂອງ ສປປ ລາວ ແລະ ການວິໄຈລາຍຈ່າຍຂອງລັດ (P148008) • ການຫັນວຽກງານຄຸ້ມຄອງການເງິນຂອງລັດໄປສູ່ ທັນສະໄໝ (P158658) • ແຜນງານວິເຄາະການພັດທະນາຂະແໜງການເງິນ (P160715) **ການສະໜອງທຶນ** ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ ລະບົບສະຖິຕິ ແຫ່ງຊາດ (P129825) *ສິ້ນສຸດໃນເດືອນມິຖຸນາ 2017* • ການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດ ຂອງຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່ (P109736) *ຈະສິ້ນສຸດໃນເດືອນກັນຍາ 2018* ໂຄງການທີ່ມີໃນແຜນງານໃໝ່: • ແຜນງານດຸ່ນດ່ຽງງົບປະມານ ການພັດທະນາການເຕີບໂຕສີຂຽວ (IDA 17, 18 ແລະ 19) (P159956) • ວຽກງານສະຖິຕິ ແລະ ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງພົນລະເມືອງ (IDA 18)

ຈຸດປະສົງ 1.2: ສ້າງຄວາມສະດວກ ໃຫ້ແກ່ການດຳເນີນທຸລະກິດ

ເຫດຜົນຂອງການສະໜັບສະໜູນ: ສະພາບແວດລ້ອມທາງດ້ານທຸລະກິດທີ່ອ່ອນແອ ແລະ ການສະໜອງທຶນທີ່ບໍ່ທັນກວ້າງຂວາງ ໄດ້ສະແດງອອກໂດຍລະບຽບການ ກ່ຽວກັບການລົງທຶນ ແລະ ການຄ້າທີ່ຍັງມີລັກສະນະຈຳກັດໂດຍທົ່ວໄປ ແລະ ສ່ວນຫຼາຍແມ່ນບໍ່ສອດຄ່ອງ ແລະ ບໍ່ມີຄວາມແນ່ນອນ. ການປັບປຸງບັນຍາກາດທຸລະກິດ ແລະ ຕະຫຼາດ ແມ່ນໜຶ່ງໃນບັນດາບຸລິມະສິດຂອງລັດຖະບານ ເພື່ອດຶງດູດທຶນຂອງພາກເອກະຊົນທີ່ມີຄວາມຈຳເປັນ ສຳລັບການສ້າງວຽກເຮັດງານທຳ ແລະ ການຫລຸດຜ່ອນຄວາມທຸກຍາກ. ການສະໜັບສະໜູນຂອງກຸ່ມທະນາຄານໂລກຈະສຸມໃສ່ (i) ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ແລະ ຄວາມສາມາດແຂ່ງຂັນຂອງພາກເອກະຊົນລາວ, ແລະ (ii) ເພີ່ມສະມັດຕະພາບຂອງການຜະລິດກະສິກຳ ດ້ວຍການສະໜັບສະໜູນການຫັນປ່ຽນຈາກການຜະລິດເຂົ້າເພື່ອກຸ້ມຕົນເອງ ໄປສູ່ລະບົບການກະສິກຳທີ່ອີງໃສ່ການຜະລິດເຂົ້າທີ່ສາມາດແຂ່ງຂັນໄດ້ດີ ແລະ ຜະລິດຕະພັນອື່ນທີ່ມີມູນຄ່າສູງ ຊຶ່ງມີຕະຫຼາດຮອງຮັບ.

7. ຄາດໝາຍອັດຕາສ່ວນໜີ້ສິນພາກລັດ ເທົ່າກັບ 65% ຂອງ GDP ຄາດວ່າຈະບັນລຸໄດ້ ດ້ວຍການຈັດຕັ້ງປະຕິບັດນະໂຍບາຍລາຍຮັບລາຍຈ່າຍທີ່ກຳນົດໄວ້ໃນແຜນງານດຸ່ນດ່ຽງງົບປະມານ. ຖ້າຫາກບໍ່ມີນະໂຍບາຍດັ່ງກ່າວ, ສະພາບຂໍ້ມູນພື້ນຖານໄດ້ຄາດຄະເນໜີ້ສິນຂອງລັດ ຈະຢູ່ໃນລະດັບ 69% ຂອງ GDP ໃນປີ 2020 ດັ່ງທີ່ໄດ້ສະແດງຢູ່ໃນຕາຕະລາງ 2 ຂອງ CPF.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
3. ປັບປຸງອັນດັບກ່ຽວກັບລະບົບການໃຫ້ສິນເຊື່ອ: • ຂໍ້ມູນພື້ນຖານ: 55 (Doing Business-2017 Distance to Frontier) • ຄາດໝາຍ: ຫຼາຍກວ່າ 60 (DB-2021)	ມູນຄ່າຂອງການສະໜອງສິນເຊື່ອ ທີ່ອຳນວຍຄວາມສະດວກໂດຍຫ້ອງການສິນເຊື່ອ (Credit Bureau) • ຂໍ້ມູນພື້ນຖານ: 1,27 ລ້ານໂດລາສະຫະລັດທຽບເທົ່າ (10.344 ລ້ານກີບ (2014) • ຄາດໝາຍ: ຫຼາຍກວ່າ 1,33 ລ້ານໂດລາສະຫະລັດ ທຽບເທົ່າ (10.843 ລ້ານກີບ) (2022)	ຄວາມຮູ້ແລະການລະດົມການຮ່ວມມືຈາກຫລາຍພາກສ່ວນ • ແຜນງານວິໄຈການຄ້າ ແລະ ຄວາມສາມາດແຂ່ງຂັນ (P146216) • ການວິໄຈຄວາມທຸກຍາກ (P156311) • ແຜນງານວິໄຈການພັດທະນາຂະແໜງການເງິນ (P160715) • ຫ້ອງການສິນເຊື່ອຢູ່ ສປປ ລາວ ໄລຍະ 2 (IFC - 600450) • ການຄ້ຳປະກັນການດຳເນີນທຸລະກຳຢູ່ ສປປ ລາວ ໄລຍະ 2 (IFC - 6005235) • ລະບົບການຊຳລະຂອງ ສປປ ລາວ (IFC - 579207)
4. ຫລຸດຜ່ອນຈຳນວນມື້ສະເລ່ຍເພື່ອສຳເລັດການນຳເຂົ້າສິນຄ້າ (*SDG 8.a: ຄຳໝັ້ນສັນຍາໃນການໃຫ້ການຊ່ວຍເຫຼືອດ້ານການຄ້າ*) • ຂໍ້ມູນພື້ນຖານ: 2,85 ມື້ (ສະເລ່ຍຈາກການປະເມີນບັນຍາກາດການລົງທຶນ 2 ຄັ້ງຫຼ້າສຸດ) • ຄາດໝາຍ: ບໍ່ເກີນ 2,5 ມື້	ຈຳນວນມື້ ເພື່ອໃຫ້ໄດ້ຮັບໃບອະນຸຍາດດຳເນີນກິດຈະການ (ICA-ES) • ຂໍ້ມູນພື້ນຖານ 16,3 ມື້ • ຄາດໝາຍ: ຕ່ຳກວ່າ 13 ມື້	ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການເພື່ອອຳນວຍຄວາມສະດວກດ້ານການຄ້າ ແລະ ພາສີ (P101750) *ສິ້ນສຸດໃນເດືອນມິຖຸນາ 2017* • ໂຄງການເພື່ອພັດທະນາການຄ້າ (TDF) ໄລຍະ 2 (P130512) *ຈະສິ້ນສຸດໃນເດືອນກັນຍາ 2018* • ໂຄງການສົ່ງເສີມການເຂົ້າເຖິງແຫຼ່ງທຶນສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ (P131201) ຈະສິ້ນສຸດໃນເດືອນມິຖຸນາ 2019 • ABL Lao Kip Loan (IFC - 631193) • ລັດວິສາຫະກິດໄຟຟ້າລາວ (IFC - 28141) • ເງິນກູ້ໃຫ້ແກ່ Banque Franco Lao (IFC - 32726) • KS Resort Sofitel LPB (IFC - 27914) Essilao (IFC - 32557) ໂຄງການທີ່ມີໃນແຜນງານໃໝ່: • ໂຄງການຜະລິດກະສິກຳເປັນສິນຄ້າ (P161473) (IDA 18) • ການພັດທະນາຄວາມສາມາດແຂ່ງຂັນ ແລະ ພາກສ່ວນເອກະຊົນ (IDA 18 ແລະ TF) ແຜນກິດຈະການຂອງ IFC: • ການລົງທຶນເພີ່ມເຕີມໃນທະນາຄານທຸລະກິດທີ່ຖືກຄັດເລືອກ
5. ການປ່ຽນແປງມູນຄ່າຂອງການຜະລິດກະສິກຳ ຕໍ່ໜຶ່ງເຮັກຕາຂອງເນື້ອທີ່ດິນກະສິກຳ ໃນເຂດໂຄງການ (*SDG 2.3*) • ຂໍ້ມູນພື້ນຖານ: 715 ໂດລາ ສະຫະລັດ/ເຮັກຕາ • ຄາດໝາຍ: 820 ໂດລາ ສະຫະລັດ/ເຮັກຕາ		

ຈຸດປະສົງ 1.3: ລົງທຶນໃສ່ພື້ນຖານໂຄງລ່າງ ເພື່ອການເຕີບໂຕ ແລະ ຄວາມສົມດູນ

ເຫດຜົນຂອງການສະໜັບສະໜູນ: ການເຊື່ອມຈອດ ແລະ ພື້ນຖານໂຄງລ່າງທີ່ດີ ມີຄວາມຈຳເປັນທີ່ສຸດ ສຳລັບຕະຫຼາດທີ່ມີການເຄື່ອນໄຫວດີ ແລະ ການແຂ່ງຂັນໃນລະດັບສາກົນ ໂດຍສະເພາະແມ່ນ ສຳລັບປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ຄືດັ່ງ ສປປ ລາວ. ແຜນງານຂອງກຸ່ມທະນາຄານໂລກ ຈະສະໜັບສະໜູນການປັບປຸງລະບົບການຂົນສົ່ງ ໂດຍຜ່ານການລົງທຶນໃສ່ພື້ນຖານໂຄງລ່າງ, ເຕັກໂນໂລຊີ ແລະ ເສີມຂະຫຍາຍລະບຽບການຂອງຂະແໜງດັ່ງກ່າວ, ເພີ່ມການເຂົ້າເຖິງການບໍລິການດ້ານພື້ນຖານໂຄງລ່າງ ໃຫ້ແກ່ບັນດາຊຸມຊົນຢູ່ເຂດຊົນນະບົດ ໂດຍຜ່ານການລົງທຶນທີ່ອີງໃສ່ຄວາມເປັນເຈົ້າການຂອງຊຸມຊົນ ແລະ ການເພີ່ມປະສິດທິພາບໃນການນຳໃຊ້ ພະລັງງານ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
6.ສັດສ່ວນຂອງປະຊາຊົນຢູ່ເຂດຊົນນະບົດ ທີ່ສາມາດເຂົ້າເຖິງເສັ້ນທາງທີ່ນຳໃຊ້ໄດ້ໃນທຸກລະດູການ (*SDG 9.1*) • ຂໍ້ມູນພື້ນຖານ: 53% • ຄາດໝາຍ: 57%	ອັດຕາສ່ວນຂອງເສັ້ນທາງທີ່ມີສະພາບດີ ແລະ ດີສົມຄວນ ໃນຈຳນວນເສັ້ນທາງທັງໝົດຂອງແຂວງ ແລະ ເມືອງ ໃນເຂດໂຄງການ. • ຂໍ້ມູນພື້ນຖານ: 50% • ຄາດໝາຍ 65%	ຄວາມຮູ້ແລະການລະດົມການຮ່ວມມືຈາກຫລາຍພາກສ່ວນ • ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ(PPP) ໃນຂະແໜງຂົວ-ທາງຂອງ ສປປ ລາວ (IFC - 600156) • ການວິໄຈຄວາມທຸກຍາກ (P156311) • ການສະໜອງນ້ຳ ແລະ ສຸຂະອະນາໄມ ຢູ່ເຂດຊົນນະບົດທີ່ແພ່ໃສ່ຜູ້ທຸກຍາກ (P161074) ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການພັດທະນາຂະແໜງຂົວ-ທາງ (P102398) *ຈະສິ້ນສຸດໃນເດືອນກັນຍາ 2017* • ໂຄງການພັດທະນາຂະແໜງຂົວ-ທາງ ໄລຍະ 2 (P158504) (IDA 17) *ໄດ້ຮັບອະນຸມັດໃນເດືອນທັນວາ 2016 - ຈະສິ້ນສຸດໃນເດືອນສິງຫາ 2022* • ໂຄງການປັບປຸງຕາໜ່າງສາຍສົ່ງໄຟຟ້າ (P149599) *ຈະສິ້ນສຸດໃນເດືອນມີນາ 2020* • ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ III (P157963) *ໄດ້ຮັບອະນຸມັດໃນເດືອນພຶດສະພາ 2016 - ຈະສິ້ນສຸດໃນເດືອນມິຖຸນາ 2020* ໂຄງການທີ່ມີໃນແຜນງານໃໝ່: • ເສັ້ນທາງຫຼວງແຫ່ງຊາດ ເລກ 13 ໜ່ວຍ (IDA 18) • ໂຄງການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ການພັດທະນາພະລັງງານ ແລະ ບໍ່ແຮ່ ແບບຍືນຍົງ (IDA 18) • ໂຄງການເຊື່ອມຕໍ່ດ້ານພະລັງງານ (IDA 18) • ການພັດທະນາຊົນນະບົດ / ການຂະຫຍາຍຕາໜ່າງໄຟຟ້າ (IDA 18) ແຜນກິດຈະການຂອງ IFC: •ການລົງທຶນໃນໂຄງການເຂື່ອນໄຟຟ້າ(FY18)

ຂົງເຂດຈຸດສຸມ ທີ 2: ລົງທຶນໃສ່ການພັດທະນາຄົນ

ການລົບລ້າງຄວາມທຸກຍາກທີ່ຮ້າຍແຮງ ແລະ ການຊຸກຍູ້ສົ່ງເສີມການແຈກຢ່າຍຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ກ່ຽວພັນເຖິງຄວາມສາມາດເພີ່ມທຶນມະນຸດ, ໂດຍສະເພາະໃນຂົງເຂດສາທາລະນະສຸກ, ການສຶກສາ ແລະ ໂພຊະນາການ ເພື່ອຮັບປະກັນໃຫ້ປະຊາກອນມີສຸຂະພາບແຂງແຮງ ແລະ ສາມາດຜະລິດໄດ້ຫຼາຍໃນອະນາຄົດ. ຂົງເຂດຈຸດສຸມນີ້ ຈະລວມຢູ່ການປັບປຸງໂພຊະນາການໃນຊຸມປີທຳອິດ ແລະ ຄຸນນະພາບ ແລະ ຄວາມທົ່ວເຖິງຂອງການບໍລິການດ້ານສາທາລະນະສຸກ ແລະ ການສຶກສາ ໂດຍແນໃສ່ເຮັດໃຫ້ຄົນລຸ້ນອະນາຄົດ ສາມາດບັນລຸຄວາມອາດສາມາດບໍ່ມຊ້ອນຂອງພວກເຂົາຢ່າງເຕັມສ່ວນ. ຈຸດປະສົງນີ້ມີຄວາມສອດຄ່ອງຢ່າງສະໜິດແໜ້ນ ກັບໝາກຜົນທີ 2 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຊຶ່ງຜົນຮັບທີ 2, 3, 4 ແລະ 5 ໄດ້ສຸມໃສ່ການປັບປຸງວຽກງານໂພຊະນາການ, ການສຶກສາ, ສາທາລະນະສຸກ ແລະ ສະຫວັດດີການສັງຄົມ. ນອກຈາກນັ້ນ, ການປັບປຸງຊັບສິນມະນຸດ ຈະຊ່ວຍເຮັດໃຫ້ປະເທດຫລຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ, ຊຶ່ງເປັນເປົ້າໝາຍຫຼັກສຳລັບ ສປປ ລາວ.

ຈຸດປະສົງ 2.1: ຫລຸດຜ່ອນການແຜ່ຫຼາຍຂອງການຂາດໂພຊະນາການ

ເຫດຜົນຂອງການສະໜັບສະໜຸນ: ການລົງທຶນໃນພັດທະນາຄົນ ເລີ່ມຕົ້ນດ້ວຍການຮັບປະກັນສະພາບໂພຊາການທີ່ດີ ໃນຊຸມປີທຳອິດຂອງຊີວິດ, ຊຶ່ງໃນໄລຍະດັ່ງກ່າວ ແມ່ນມີຊ່ອງທາງຈຳກັດເພື່ອເພີ່ມຄວາມສາມາດຂອງບຸກຄົນ ເພື່ອບັນລຸຄວາມສາມາດເຕັມສ່ວນ. ສປປ ລາວ ຍັງມີຫຼາຍກວ່າ 40 ສ່ວນຮ້ອຍ ຂອງເດັກອາຍຸຕ່ຳກວ່າ 5 ປີ ທີ່ປະສົບກັບພາວະຂາດທາດສານອາຫານຢ່າງຊ້ຳເຮື້ອ (ເຊັ່ນ: ພວກເຂົາ ເຕ້ຍ/ມີລວງສູງຫລຸດມາດຕະຖານ). ສາຍເຫດຂອງຄວາມເຕ້ຍຢູ່ ສປປ ລາວ ແມ່ນມີຫຼາຍ ແລະ ກ່ຽວພັນກັບຫຼາຍຂະແໜງການ, ເຊັ່ນ: (i) ໂດຍທົ່ວໄປ, ວິທີການໃຫ້ອາຫານແກ່ເດັກນ້ອຍ ແລະ ເດັກໜຸ່ມທີ່ທຸກຍາກ ຍັງປະຕິບັດບໍ່ດີ; (ii) ຄວາມຫຼາກຫຼາຍຂອງອາຫານ ແລະ ສານອາຫານ ບໍ່ພຽງພໍ; (iii) ແມ່ຍິງຖືພາຈຳນວນຫຼາຍໄດ້ຮັບອາຫານ ແລະ ສານອາຫານບຳລຸງບໍ່ພຽງພໍ; (iv) ພະຍາດມັກເກີດຂຶ້ນຫຼາຍໃນບັນດາເດັກໜຸ່ມ; (v) ສຸຂະອະນາໄມບໍ່ດີ ແລະ ນ້ຳບໍ່ປອດໄພ; ແລະ (vi) ຄວາມເຊື່ອດ້ານວັດທະນະທຳທີ່ເປັນເອກະລັກຂອງລາວ ແລະ ການຄະລຳອາຫານໃນບັນດາ 49 ກຸ່ມຊົນເຜົ່າ ສ່ວນຫຼາຍແມ່ນບໍ່ສົ່ງເສີມໃຫ້ມີໂພຊະນາການທີ່ດີ. ດັ່ງນັ້ນ, ການເລັ່ງລັດຄວາມກ້າວໜ້າໃນການຫລຸດຜ່ອນບັນຫາເດັກເຕ້ຍ ຈະຮຽກຮ້ອງໃຫ້ມີວິທີການທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ ທີ່ຈະປະກອບມີການສະໜັບສະໜຸນເພື່ອປັບປຸງການເຂົ້າເຖິງນ້ຳສະອາດ ແລະ ສຸຂະອະນາໄມ, ການນຳໃຊ້ວິດຖ່າຍໃນໂຮງຮຽນ ແລະ ຊຸມຊົນຢູ່ເຂດຫ່າງໄກສອກຫຼີກ, ການປັບປຸງສຸຂະພາບແມ່ ແລະ ການດູແລເບິ່ງແຍງຜູ້ຖືພາ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
9. ອັດຕາສ່ວນຂອງເດັກຕ່ຳກວ່າ 5 ປີ ທີ່ມີລວງສູງ ບໍ່ໄດ້ມາດຕະຖານຢູ່ເຂດເປົ້າໝາຍ (*SDG 2.2*) • ຂໍ້ມູນພື້ນຖານ: 42% • ຄາດໝາຍ: <33% 10. ຈຳນວນບ້ານທີ່ປະກາດ ຢຸດຕິການຖ່າຍແບບຊະຊາຍ ໃນບັນດາເມືອງທີ່ເປັນ ບູລິມະສິດເປົ້າໝາຍ • ຂໍ້ມູນພື້ນຖານ: 0 • ຄາດໝາຍ: 200	ຈຳນວນຜູ້ອຳນວຍຄວາມສະດວກຂັ້ນບ້ານ ເພດຍິງ ທີ່ໄດ້ຮັບການຝຶກອົບຮົມໃນດ້ານ SBCC ຢູ່ບັນດາເມືອງເປົ້າ ໝາຍ (ຂໍ້ມູນການບໍລິຫານ): • ຂໍ້ມູນພື້ນຖານ: 0 • ເສັ້ນທາງ: 300 • ຄາດໝາຍ: 600	ຄວາມຮູ້ ແລະ ຄວາມສາມາດ • ການຫຼຸດຜ່ອນຄວາມສ່ຽງ ແລະ ການຂາດສານອາຫານ (P160711) • ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການແຜນງານບໍລິຫານຄຸ້ມຄອງສາທາລະນະສຸກ ແລະ ໂພຊະນາການ (P151425) *ຈະສິ້ນສຸດໃນເດືອນທັນວາ 2020* • ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ III (P157963) *ໄດ້ຮັບອະນຸມັດໃນເດືອນພຶດສະພາ 2016 - ຈະສິ້ນສຸດໃນເດືອນມິຖຸນາ 2020* ໂຄງການທີ່ມີໃນແຜນງານໃໝ່: • ລະບົບປະກັນສັງຄົມ ເພື່ອຫລຸດຜ່ອນຄວາມອ່ອນແອ ແລະ ການຂາດສານອາຫານ (IDA18) • ການສະໜອງທຶນເພີ່ມເຕີມໃຫ້ແກ່ໂຄງການຜນ ງານບໍລິຫານຄຸ້ມຄອງສາທາລະນະສຸກ ແລະ ໂພຊະນາການ (IDA 18 and TF) • ການປົກຄຸມສຸຂະພາບທຸກຖ້ວນໜ້າ (UHC) (IDA 18) • ການສະໜອງນ້ຳ ແລະ ສຸຂະອະນາໄມ ເພື່ອສຸຂະພາບ (IDA 18) • ການທຸລະກິດດ້ານການກະເສດ (IDA 18) ການລົງທຶນພັດທະນາເດັກກ່ອນໄວຮຽນ (ການສຶກສາຂອງເດັກກ່ອນໄວຮຽນ/ການອ່ານໜັງສືໃນ ປີຕົ້ນຂອງຊັ້ນປະຖົມ) (IDA19)

ຈຸດປະສົງ 2.2.: ປັບປຸງຄຸນນະພາບຂອງການສຶກສາຂັ້ນປະຖົມ ແລະ ອະນຸບານ ແລະ ສົ່ງເສີມໃຫ້ເດັກຍິງມາໂຮງຮຽນ

ເຫດຜົນຂອງການສະໜັບສະໜຸນ: ໜຶ່ງສ່ວນສາມຂອງນັກຮຽນຫ້ອງ ປ 2 ຂອງລາວ ບໍ່ສາມາດອ່ານໜັງສືໄດ້, ຊຶ່ງຈຳກັດຄວາມສາມາດຂອງພວກເຂົາໃນການສືບຕໍ່ການຮຽນ (ແລະ ຈາກນັ້ນ ກໍາລັງເປັນກໍາມະກອນທີ່ສາມາດຜະລິດ). ໂດຍສະເພາະ ສໍາລັບເດັກຈາກຄອບຄົວທີ່ມີລາຍຮັບຕ່ຳ, ບັນຫາໄດ້ເລີ່ມເກີດຂຶ້ນແຕ່ຫົວທີ ໂດຍເດັກອາຍຸ 6 ປີ ທີ່ບໍ່ມີການກະກຽມເພື່ອຮຽນໜັງສື ໄດ້ມີອັດຕາສ່ວນສູງ. ເພື່ອແກ້ໄຂສິ່ງທ້າທາຍດັ່ງກ່າວ, ກຸ່ມທະນາຄານໂລກຈະສຸມໃສ່ເສີມຂະຫຍາຍຜົນໄດ້ຮັບຂອງການຮູ້ໜັງສືໃນຊັ້ນເບື້ອງຕົ້ນ ດ້ວຍການເຮັດທົດລອງວິທີການສອນອ່ານໜັງສືແບບໃໝ່ ສໍາລັບຫ້ອງຕົ້ນຂອງຫ້ອງປະຖົມ ແລະ ສະໜອງຊັບພະຍາກອນຫຼາຍຂຶ້ນໃຫ້ແກ່ໂຮງຮຽນປະຖົມ (ໂດຍຜ່ານທຶນຊ່ວຍເຫຼືອລ້ຳ (block grants)) ເພື່ອປັບປຸງສະພາບແວດລ້ອມການຮຽນຂອງພວກເຂົາໃຫ້ດີຂຶ້ນ. ນອກຈາກນັ້ນ, CPF ຍັງເລັ່ງໃສ່ຂະຫຍາຍການເຂົ້າເຖິງ ແລະ ປັບປຸງຄຸນນະພາບ ຂອງແຜນງານການສຶກສາຂອງເດັກກ່ອນໄວຮຽນ ທັງແບບທາງການ ແລະ ບໍ່ເປັນທາງການ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
15. ອັດຕາສ່ວນຂອງເດັກທີ່ມີອາຍຸກ່ອນໄວຮຽນ (ອາຍຸ 3-5 ປີ) ເຂົ້າຮ່ວມໂຄງການພັດທະນາໄວເດັກ/ການສຶກສາຂອງເດັກກ່ອນໄວຮຽນ/ການຮຽນອະນຸບານ (ECD/ECE/preschool) ເພີ່ມຂຶ້ນໃນເຂດເປົ້າ ໝາຍ (*SDG 4.2.2*) • ຂໍ້ມູນພື້ນຖານ (2015/16): 11% (ຍິງ: 11%) • ຄາດໝາຍ: 48% (ຍິງ: 48%) 16. ຈຳນວນເດັກອາຍຸຮຽນຊັ້ນປະຖົມທີ່ບໍ່ໄດ້ເຂົ້າໂຮງຮຽນ (SDG 4.1.2) • ຂໍ້ມູນພື້ນຖານ (2015-16): 8.761 (ຍິງ: 5.217) ປະມານ 1,2% ຂອງເດັກຊາຍທັງໝົດ ແລະ 1,5% ຂອງເດັກຍິງທັງໝົດ • ຄາດໝາຍ: 6.500 (ຍິງ: 3.000)	ອັດຕາສ່ວນການປະລະການຮຽນຊັ້ນປະຖົມ (ແຍກເພດຍິງ-ຊາຍ) • ຂໍ້ມູນພື້ນຖານ (2015-16): 4,7% (ຍິງ:4,5%) • ຄາດໝາຍ: 4 % (ຍິງ: 3,8%)	ຄວາມຮູ້ ແລະ ຄວາມສາມາດ • ການປະເມີນຜົນການບໍລິການເພື່ອພັດທະນາເດັກກ່ອນໄວຮຽນ (P156227) *ສິ້ນສຸດໃນເດືອນກຸມພາ 2017* • ຄຸນນະພາບການສຶກສາຢູ່ ສປປ ລາວ (P153341) *ສິ້ນສຸດໃນເດືອນກຸມພາ 2017* ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການການສຶກສາຂອງເດັກກ່ອນໄວຮຽນ (P145544) *ຈະສິ້ນສຸດໃນເດືອນກໍລະກົດ 2019* • ກອງທຶນຮ່ວມສາກົນເພື່ອການສຶກສາ (GPE) ເທື່ອທີສອງ (P149130) *ຈະສິ້ນສຸດໃນເດືອນກໍລະກົດ 2019* ໂຄງການທີ່ມີໃນແຜນງານໃໝ່: ການສຶກສາຂອງເດັກກ່ອນໄວຮຽນ (IDA)

ຈຸດປະສົງ 2.3: ປັບປຸງຄຸນນະພາບ ແລະ ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ

ເຫດຜົນຂອງການສະໜັບສະໜຸນ: ການແກ້ໄຂສິ່ງກີດກັ້ນທາງດ້ານສຸຂະພາບ ໃນການໄດ້ຮັບທັກສະສີມື ແລະ ເຂົ້າຮ່ວມໃນຕະຫຼາດແຮງງານ ມີຄວາມຈຳເປັນ ເພື່ອຮັບປະກັນໃຫ້ໝົດທຸກຄົນມີຄວາມສາມາດໃນປະກອບສ່ວນໃຫ້ແກ່ສະມັດຕະພາບ ແລະ ໄດ້ຮັບໝາກຜົນຂອງການພັດທະນາມະນຸດ. ການສະໜັບສະໜຸນຂອງກຸ່ມທະນາຄານໂລກ ຈະລວມເອົາມາດຕະການທີ່ເລັ່ງໃສ່ປັບປຸງການປ້ອງກັນສຸຂະພາບທາງດ້ານການເງິນ, ແກ້ໄຂປັດໄຈຫຼັກທີ່ເຮັດໃຫ້ມີຄວາມບອບບາງ ແລະ ຄວາມທຸກຍາກ - ລາຍຈ່າຍສຸຂະພາບທີ່ມີຜົນກະທົບຮ້າຍແຮງທີ່ສຸດ. ນອກຈາກນັ້ນ, ກໍຈະສືບຕໍ່ພະຍາຍາມເພື່ອປັບປຸງຜົນໄດ້ຮັບຂອງສຸຂະພາບຈະເລີນພັນ ແລະ ສຸຂະພາບຂອງເດັກ ລວມທັງກະກຽມລະບົບສາທາລະນະສຸກ ເພື່ອການຫັນປ່ຽນພະຍາດລະບາດ ໄປສູ່ພະຍາດທີ່ບໍ່ຕິດຕໍ່.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
21. ອັດຕາສ່ວນການຕາຍຂອງແມ່ (SDG 3.1.1) • ຂໍ້ມູນພື້ນຖານ: 197 (2015 - WHO, UNICEF, UNFPA, WBG ແລະ United Nations Population Division Maternal Mortality Estimation Inter-Agency Group, *ການຕາຍຂອງແມ່ ໃນໄລຍະ 1990 - 2015)* • ຄາດໝາຍ: 180 22. ຈຳນວນແມ່ຍິງທີ່ເກີດລູກ ໂດຍມີຜູ້ຊຳນານຊ່ວຍເກີດລູກຢູ່ເຮືອນ ຫຼື ສະຖານທີ່ອຳນວຍຄວາມສະດວກດ້ານສາທາລະນະສຸກ (*SDG 3.1*) • ຂໍ້ມູນພື້ນຖານ: 95.528 (18 ແຂວງ, 2016, ອີງໃສ່ DHIS2) ປະມານ 53% ຂອງເດັກເກີດທັງໝົດ • ຄາດໝາຍ: ເພີ່ມຂຶ້ນ 10% ທຽບໃສ່ຂໍ້ມູນພື້ນຖານ 23. ຈຳນວນແມ່ຍິງອາຍຸ 15-49 ປີ ທີ່ນຳໃຊ້ວິທີການວາງແຜນຄອບຄົວ ການເກີດລູກຫ່າງຢູ່ບັນດາແຂວງເປົ້າໝາຍ (*ຂໍ້ມູນຈະຖືກແຍກສຳລັບແມ່ຍິງໄວໜຸ່ມທີ່ມີອາຍຸ 15-19 ປີ*): • ຂໍ້ມູນພື້ນຖານ: ແມ່ຍິງ 45.746 ຄົນ (14 ແຂວງ, 2016, ອີງໃສ່ HGNDP DLIs/ DHIS2) • ຄາດໝາຍ: ເພີ່ມຂຶ້ນ 10% ທຽບໃສ່ຂໍ້ມູນພື້ນຖານ	ຈຳນວນແມ່ຍິງຖືພາທີ່ໄດ້ຮັບການກວດທ້ອງກ່ອນການເກີດຄັ້ງທີ 4 • ຂໍ້ມູນພື້ນຖານ: 94.511 (18 ແຂວງ, 2016, ອີງໃສ່ DHIS2) ປະມານ 53% ຂອງເດັກເກີດທັງໝົດ ຄາດໝາຍ: ເພີ່ມຂຶ້ນ 10% ທຽບໃສ່ຂໍ້ມູນພື້ນຖານ • ຈຳນວນເດັກອາຍຸ age 12-23 ເດືອນທີ່ໄດ້ຮັບການສັກຢາ-ຢອດຢາກັນພະຍາດເຫືອທີສາມ (DPT3) ໃນຄົບຮອບວັນເກີດເຫືອທຳອິດຂອງເດັກ • ຂໍ້ມູນພື້ນຖານ: 74,6% (ອີງຕາມ DHIS 2) • ຄາດໝາຍ: ກວມສູງກວ່າ 85%	ຄວາມຮູ້ ແລະ ຄວາມສາມາດ • ການແກ້ໄຂຄວາມອ່ອນແອ ແລະ ການຂາດສານອາຫານ(P160711) • ການສະໜອງນ້ຳ ແລະ ສຸຂະອະນາໄມ ຢູ່ເຂດຊົນນະບົດ ທີ່ແນໃສ່ຜູ້ທຸກຍາກ (P161074) ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການພັດທະນາລະບົບຄຸ້ມຄອງບໍລິຫານ ສາທາລະນະສຸກ ແລະ ພັດທະນາໂພຊະນາການ (P151425) ຈະສິ້ນສຸດໃນເດືອນທັນວາ 2020 ໂຄງການທີ່ມີໃນແຜນງານໃໝ່: • ການສະໜອງທຶນເພີ່ມເຕີມໃຫ້ແກ່ ໂຄງການພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ (IDA 18 and TF)

ຈຸດປະສົງ 2.4: ຫລຸດຜ່ອນຄວາມຂອບບາງ ແລະ ເພີ່ມການເຂົ້າເຖິງການບໍລິການດ້ານສັງຄົມຢ່າງທົ່ວເຖິງ

ເຫດຜົນຂອງການສະໜັບສະໜູນ: ດັ່ງທີ່ໄດ້ລະບຸຢູ່ໃນການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD), ຈ້ຳຫວະຄວາມຄືບໜ້າຂອງການຫລຸດຜ່ອນຄວາມທຸກຍາກຢູ່ ສປປ ລາວ ຍັງບໍ່ໄວເທົ່າທີ່ຄວນ ທຽບໃສ່ປະເທດອື່ນໃນພາກພື້ນ ແລະ ຄວາມບໍ່ຄວາມສະເໝີພາບໄດ້ຂະຫຍາຍຕົວເພີ່ມຂຶ້ນ. ຄວາມຂອບບາງມີລະດັບສູງ - ເຖິງແມ່ນວ່າ ປະຊາຊົນໄດ້ຫລຸດພົ້ນອອກຈາກຄວາມທຸກຍາກໄປແລ້ວ, ແຕ່ຜົນສຳເລັດດັ່ງກ່າວໄດ້ຕົກຢູ່ໃນຄວາມສ່ຽງ ຍ້ອນວິກິດການທີ່ມັກເກີດຂຶ້ນເລື້ອຍໆ - ໂດຍສະເພາະໃນບັນດາກຸ່ມຊົນເຜົ່າສ່ວນນ້ອຍ ແລະ ປະຊາຊົນຢູ່ເຂດຊົນນະບົດ ແລະ ເຂດພູດອຍ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ສຸດຕ້ອງມີການປະຕິບັດແຜນງານປະກັນສັງຄົມ ໂດຍການນຳພາຂອງລັດຖະບານ ເພື່ອຫລຸດຜ່ອນຄວາມຂອບບາງ ແລະ ການຂາດສານອາຫານ ໃນໄລຍະສັ້ນ; ພ້ອມດຽວກັນ ກໍສ້າງພື້ນຖານໃຫ້ແກ່ລະບົບການສະໜອງການປະກັນສັງຄົມທີ່ມີປະສິດທິຜົນ ເພື່ອຮັບໃຊ້ແຜນງານຂອງຫຼາຍຂະແໜງການ ໃນໄລຍະຍາວ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
30. ຜູ້ໄດ້ຮັບຜົນປະໂຫຍດຈາກແຜນງານ ເປັນອັດຕາສ່ວນຮ້ອຍຂອງພົນລະເມືອງຢູ່ເຂດຊົນນະບົດ ໃນບັນດາເມືອງທີ່ຖືກຄັດເລືອກ • ຂໍ້ມູນພື້ນຖານ: 0% • ຄາດໝາຍ: 50% *ຕົວຊີ້ບອກເພີ່ມເຕີມທີ່ເປັນໄປໄດ້ຈະນຳປຶກສາຫາລືກັບລັດຖະບານ ແລະ ເອົາບັນຈຸເຂົ້າ ໃນເວລາດຳເນີນການທົບທວນຜົນການປະຕິບັດງານ ແລະ ການຖອດຖອນບົດຮຽນຂອງ CPF.*	ລະບົບການກຳນົດເປົ້າໝາຍໃນລະດັບຊາດ ໄດ້ຖືກພັດທະນາ ແລະ ນຳໃຊ້ໃນຫຼາຍກວ່າໜຶ່ງແຜນງານ. • ຂໍ້ມູນພື້ນຖານ: 0 • ຄາດໝາຍ: >1	ຄວາມຮູ້ ແລະ ຄວາມສາມາດ • ການແກ້ໄຂຄວາມອ່ອນແອ ແລະ ການຂາດສານອາຫານ (P160711) ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ III (P157963) ໄດ້ຮັບອະນຸມັດໃນເດືອນພຶດສະພາ 2016 - ຈະສິ້ນສຸດໃນເດືອນມີຖຸນາ 2020 ໂຄງການທີ່ມີໃນແຜນງານໃໝ່: • ການປະກັນສັງຄົມເພື່ອຫລຸດຜ່ອນຄວາມອ່ອນແອ ແລະ ການຂາດສານອາຫານ (IDA 18)

ຂົງເຂດຈຸດສຸມ ທີ 3: ການປົກປັກຮັກສາສິ່ງແວດລ້ອມ

ຊັບພະຍາກອນທຳມະຊາດໄດ້ຊ່ວຍເຮັດໃຫ້ມີການເຕີບໂຕ ແລະ ສາມາດສືບຕໍ່ຊ່ວຍໄດ້ ຖ້າຫາກໄດ້ຮັບການຄຸ້ມຄອງຢ່າງຖືກຕ້ອງ. ສະນັ້ນ, ການສ້າງຕັ້ງລະບົບທີ່ມີປະສິດທິຜົນສຳລັບການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງມີຄວາມຮັບຜິດຊອບຈະມີຄວາມສຳຄັນທີ່ສຸດ ເພື່ອຮັບປະກັນຄວາມຍືນຍົງຂອງການເຕີບໂຕ ແລະ ຜົນສຳເລັດທາງດ້ານສັງຄົມໃນໄລຍະກາງ. ນອກຈາກນັ້ນ, ເນື່ອງຈາກວ່າ ຄວາມບອບບາງຢູ່ ສປປ ລາວ ມີລະດັບສູງ, ການເສີມຂະຫຍາຍການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ຄວາມເຂັ້ມແຂງທົນທານຕໍ່ການປ່ຽນແປງດິນຟ້າອາກາດ ກໍມີຄວາມສຳຄັນທີ່ສຸດ ເພື່ອປົກປ້ອງລາຍຮັບ ແລະ ຊີວິດການເປັນຢູ່ຂອງຜູ້ທຸກຍາກ ແລະ ປະຊາຊົນ 40 ສ່ວນຮ້ອຍທີ່ມີລາຍຮັບຕ່ຳທີ່ສຸດ. ຂົງເຂດຈຸດສຸມນີ້ສະໜັບສະໜູນໝາກຜົນທີ 3 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກ່ຽວກັບການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແລະ ໂດຍສະເພາະແມ່ນ ສອງໝາກຜົນທຳອິດທີ່ກວມເອົາການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການກະກຽມເພື່ອຮັບມືກັບໄພພິບັດຈາກທຳມະຊາດ ແລະ ການຫລຸດຜ່ອນຄວາມສ່ຽງ.

ຈຸດປະສົງ 3.1: ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຍືນຍົງ

ເຫດຜົນຂອງການສະໜັບສະໜູນ: ຊີວະນາໆພັນດ້ານປ່າໄມ້ທີ່ອຸດົມຮັ່ງມີໄດ້ຫລຸດລົງຢ່າງໄວວາ ຊຶ່ງເກີດມາຈາກຫລາຍປັດໄຈ ລວມທັງການພັດທະນາອຸດສາຫະກຳ ແລະ ກິດຈະກຳເພື່ອການດຳລົງຊີວິດ ທີ່ໄດ້ຮັບຜົນສະທ້ອນຈາກການຂາດລະບົບການຄຸ້ມຄອງບໍລິຫານ. ການພັດທະນາຊັບພະຍາກອນທຳມະຊາດ ເຊັ່ນ: ນໍ້າ ແລະ ແຮ່ທາດ ທີ່ໄດ້ຂັບເຄື່ອນການເຕີບໂຕຂອງປະເທດໃນທົດສະວັດທີ່ຜ່ານມາ ໄດ້ຕົກຢູ່ໃນສະພາບຫລຸດນ້ອຍຖອຍລົງ ໂດຍບໍ່ມີລະບອບການຄຸ້ມຄອງບໍລິຫານຢ່າງເປັນລະບົບ ເພື່ອຮັບປະກັນຄວາມຍືນຍົງຂອງຊັບສິນດັ່ງກ່າວ ຫຼື ເພື່ອບຳລຸງຂະແໜງດັ່ງກ່າວໃຫ້ຈະເລີນເຕີບໂຕຢ່າງຮອບດ້ານ. ບັນຫາທີ່ໜ້າເປັນຫ່ວງທີ່ເກີດຂຶ້ນໃໝ່ ແມ່ນບັນຫາມົນລະພິດ, ຊຶ່ງແມ່ນຜົນສະທ້ອນຂອງການເຄື່ອນໄຫວດ້ານອຸດສາຫະກຳ ແລະ ປ່ຽນແປງພຶດຕິກຳຂອງຜູ້ຊົມໃຊ້. ສະນັ້ນ, ການສະໜັບສະໜູນຂອງກຸ່ມທະນາຄານໂລກຈະສຸມໃສ່ສະໜັບສະໜູນລັດຖະບານ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບອບການການຄຸ້ມຄອງບໍລິຫານລັດ ໃນດ້ານສະຖາບັນ, ເຕັກນິກວິຊາການ ແລະ ນະໂຍບາຍ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
33. ເນື້ອທີ່ທີ່ຖືກນຳເຂົ້າສູ່ການເພີ່ມທະວີປົກປັກຮັກສາຊີວະນາໆພັນ ຊຶ່ງວັດແທກໂດຍຄະແນນປະສິດທິຜົນຂອງການຄຸ້ມຄອງ (SDG *15.1*) • ຂໍ້ມູນພື້ຖານ: 0 • ຄາດໝາຍ: 1,2 ລ້ານເຮັກຕາ (ເນື້ອທີ່ເພີ່ມຂຶ້ນ ເມື່ອຄະແນນເພີ່ມຂຶ້ນຈາກລະດັບໜຶ່ງ ຫາ ອີກລະດັບໜຶ່ງ) 34. ເນື້ອທີ່ປ່າໄມ້ທີ່ກຳນົດເອົາເຂົ້າໃນແຜນການຄຸ້ມຄອງພື້ນທີ່ທີວວະທັດປ່າໄມ້ (ເຮັກຕາ) (*SDG 15.2*) • ຂໍ້ມູນພື້ນຖານ: 0 • ຄາດໝາຍ: 750.000 ເຮັກຕາ 35. ຢ່າງນ້ອຍ ສາມແຜນຄຸ້ມຄອງອ່າງນ້ຳ ໄດ້ຮັບອະນຸມັດຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. • ຂໍ້ມູນພື້ນຖານ: 0 • ຄາດໝາຍ: 3 ແຜນຄຸ້ມຄອງ 36. ຈຳນວນບົດລາຍງານປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍການພັດທະນາເຂື່ອນໄຟຟ້າແບບຍືນຍົງ ໄດ້ມີສຳລັບເຜີຍແຜ່ແກ່ມວນຊົນ (2016-2021). • ຂໍ້ມູນພື້ນຖານ: 1 • ຄາດໝາຍ: 5 37. ຈຳນວນເຂດບູລິມະສິດ ສຳລັບການຕິດຕາມມົນລະພິດ ຊຶ່ງບົດລາຍງານການຕິດຕາມກວດກາ ໄດ້ມີການປັບປຸງໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ຢ່າງເປັນປົກກະຕິ ແລະ ເປີດເຜີຍແກ່ມວນຊົນ. • ຂໍ້ມູນພື້ນຖານ: 0 • ຄາດໝາຍ: 3 ເຂດບູລິມະສິດ ສຳລັບການຕິດຕາມມົນລະພິດ	ຍຸດທະສາດດ້ານພະລັງງານໄຟຟ້າໄດ້ຮັບການປັບປຸງ/ບົດລາຍງານທາງການ (White paper) • ຂໍ້ມູນພື້ນຖານ: ຍຸດທະສາດທີ່ມີໃນປັດຈຸບັນ (2016) • ຄາດໝາຍ: ບົດລາຍງານທາງການ (White paper) ໄດ້ເຮັດອອກໂດຍ ກະຊວງພະລັງງານ ແລະ ບໍ່ແຮ່ (2018); ບົດລາຍງານທາງການ (White paper) ໄດ້ນຳສະເໜີຕໍ່ລັດຖະບານເພື່ອຮັບຮອງ (2019) ຍຸດທະສາດຂອງຂະແໜງບໍ່ແຮ່ໄດ້ຮັບການປັບປຸງ • ຂໍ້ມູນພື້ນຖານ: ຍຸດທະສາດທີ່ມີໃນປັດຈຸບັນ (2016) ຄາດໝາຍ: ການດັດແກ້/ປັບປຸງຍຸດທະສາດຂອງຂະແໜງບໍ່ແຮ່ ໄດ້ປະຕິບັດໂດຍກະຊວງພະລັງງານ ແລະ ບໍ່ແຮ່ (2018); ຍຸດທະສາດທີ່ດັດແກ້/ປັບປຸງໃໝ່ ໄດ້ນຳສະເໜີຕໍ່ລັດຖະບານ ເພື່ອຮັບຮອງ (2019)	ຄວາມຮູ້ ແລະ ຄວາມສາມາດ • ການໃຫ້ຄຳປຶກສາດ້ານວຽກງານປ່າໄມ້ (IFC - 594367) • ການໃຫ້ຄຳປຶກສາດ້ານການຄຸ້ມຄອງນ້ຳຢູ່ ສປປ ລາວ (IFC - 589087) • ການວິເຄາະການເຕີບໂຕສີຂຽວ (P162394) ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການສິ່ງແວດລ້ອມ ແລະ ສັງຄົມຢູ່ ສປປ ລາວ ໄລຍະ 2 (P149130) ຈະສິ້ນສຸດໃນເດືອນມີຖຸນາ 2021 • ການຂະຫຍາຍການຄຸ້ມຄອງ-ຈັດສັນປ່າໄມ້ແບບຍືນນານ ແລະ ມີສ່ວນຮ່ວມ (P130222) ຈະສິ້ນສຸດໃນເດືອນສິງຫາ 2018 • ການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດ ໃນຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່ (P109736) ຈະສິ້ນສຸດໃນເດືອນກັນຍາ 2018 • ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ສຳລັບແມ່ນ້ຳຂອງ (P104806) ຈະສິ້ນສຸດໃນເດືອນມີນາ 2018 • ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ນ້ຳເທີນ 2 (049290) ຈະສິ້ນສຸດໃນເດືອນທັນວາ 2017 ໂຄງການທີ່ມີໃນແຜນງານໃໝ່: • ການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຍ້ອນການທຳລາຍປ່າໄມ້ (ກອງທຶນກາກບອນ) (P125082) • ການສະໜອງທຶນເພີ່ມເຕີມໃຫ້ແກ່ການຄຸ້ມຄອງຊັບ ພະຍາກອນນ້ຳແບບປະສົມປະສານ ສຳລັບແມ່ນ້ຳຂອງ (IDA 18) (P159447) • ການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາພະລັງງານ ແລະ ບໍ່ແຮ ຢ່າງຍືນຍົງ (IDA 18) ແຜນກິດຈະການຂອງ IFC: • ການປູກຕົ້ນໄມ້ ແລະ ການປຸງແຕ່ງໄມ້ ໂຄງການພະລັງງານທົດແທນ (ພະລັງານຈາກນ້ຳ, ແສງຕາເວັນ ຫຼື ລົມ)

ຈຸດປະສົງ 3.2: ສ້າງຕັ້ງລະບົບການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃຫ້ເຂັ້ມແຂງ ແລະ ສ້າງຄວາມເຂັ້ມແຂງ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ

ເຫດຜົນຂອງການສະໜັບສະໜູນ: ການສູນເສຍທາງດ້ານເສດຖະກິດຈາກໄພພິບັດ ເປັນສິ່ງນາບຂູ່ເພີ່ມຂຶ້ນຕໍ່ການພັດທະນາແບບຍືນຍົງ, ຂັດຂວາງການຫລຸດຜ່ອນຄວາມທຸກຍາກ ແລະ ການເຕີບໂຕຢ່າງກວ້າງຂວາງຢູ່ ສປປ ລາວ. ຍ້ອນມີຄວາມສ່ຽງສູງຈາກໄພພິບັດ, ສປປ ລາວ ຈຳເປັນຕ້ອງໄດ້ລົງທຶນໃສ່ວຽກງານຄຸ້ມຄອງຄວາມສ່ຽງຈາກໄພພິບັດ ເພື່ອປ້ອງກັນໝາກຜົນຂອງການພັດທະນາຂອງຕົນ. ເຖິງແມ່ນວ່າ ມັນນຳໄປສູ່ການເພີ່ມຂຶ້ນຂອງການໃຊ້ຈ່າຍລ່ວງໜ້າ, ແຕ່ປະສົບປະການຂອງໂລກໄດ້ສະແດງໃຫ້ເຫັນວ່າ ຜົນປະໂຫຍດທາງກົງ ແລະ ທາງອ້ອມທີ່ໄດ້ຮັບ ແມ່ນລື່ນຄ່າໃຊ້ຈ່າຍດັ່ງກ່າວ. ການລົງທຶນເພື່ອສ້າງຄວາມເຂັ້ມແຂງທົນທານ ສາມາດຊ່ວຍຊີວິດ, ຫລຸດຜ່ອນຄວາມການສູນເສຍ ແລະ ປົກປ້ອງການເຕີບໂຕໃນອະນາຄົດ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
48. ຄວາມຍາວຂອງເສັ້ນທາງ ທີ່ໄດ້ຮັບການບູລະນະຮັກສາເປັນແຕ່ລະໄລຍະ ເພື່ອໃຫ້ມີຄວາມເຂັ້ມແຂງທົນທານຕໍ່ການປ່ຽນແປງ ດິນຟ້າອາກາດ • ຂໍ້ມູນພື້ນຖານ: 0 ກິໂລແມັດ • ຄາດໝາຍ: 687 ກິໂລແມັດ 49. ກົມອຸຕຸນິຍົມ ແລະ ອຸທົກກະສາດ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ປັບປຸງລະບົບການເຕືອນໄພລ່ວງໜ້າ ແລະ ລະບົບຂໍ້ມູນຂ່າວສານ ສະພາບດິນຟ້າອາກາດ ໃຫ້ມີຄວາມເຂັ້ມແຂງ (*SDG 1.5 & SDG 13.1*). • ຂໍ້ມູນພື້ນຖານ: ບໍ່ມີ • ຄາດໝາຍ: ມີ 50. ສປປ ລາວສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍໄວ ເພື່ອຮັບມືກັບ-ຕອບໂຕ້ເຫດສຸກເສີນທີ່ມີເງື່ອນໄຂໄດ້ຮັບທຶນ • ຂໍ້ມູນພື້ນຖານ: ບໍ່ມີ • ຄາດໝາຍ: ມີ		ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການພັດທະນາຂະແໜງຂົວ-ທາງ ໄລຍະ 2 (P158504) *ອະນຸມັດໃນເດືອນທັນວາ 2016 - ສິ້ນສຸດໃນເດືອນສິງຫາ 2022* ໂຄງການທີ່ມີໃນແຜນງານໃໝ່: • ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ (IDA 18) (P160930

ບັນຫາທີ່ພົວພັນກັບຫຼາຍຂະແໜງການ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ

ເຖິງແມ່ນວ່າ ສປປ ລາວ ໄດ້ຮັບເອົາແນວຄວາມຄິດເສດຖະກິດຕະຫຼາດ, ແຕ່ລະບຽບຫຼັກການດ້ານການບໍລິຫານຄຸ້ມຄອງລັດ ເພື່ອສະໜັບສະໜູນການການຫັນປ່ຽນໃໝ່ ໄດ້ດຳເນີນຢ່າງເປັນແຕ່ລະກ້າວ. ລະບຽບຫຼັກການເຮັດໃຫ້ມີສະຖຽນລະພາບ, ແຕ່ການຄຸ້ມຄອງລັດດ້ວຍກົດໝາຍຍັງມີລັກສະນະອ່ອນແອ, ຄວາມຕ້ອງການຢາກປັບປຸງຄຸນນະພາບຂອງລະບຽບການໄດ້ຫລຸດລົງ ແລະ ການສໍ້ລາດບັງຫຼວງໄດ້ແຜ່ຂະຫຍາຍ. ສະນັ້ນ, ການປັບປຸງສະຖາບັນໃຫ້ມີຄວາມເຂັ້ມແຂງຈຶ່ງມີຄວາມສຳຄັນທີ່ສຸດ ເພື່ອບັນລຸຄາດຫມາຍຜົນໄດ້ຮັບໃນ ສາມຂົງເຂດບູລິມະສິດທີ່ໄດ້ກຳນົດໄວ້ຂ້າງເທິງ ແລະ ກໍມີຄວາມສອດຄ່ອງກັບຫນຶ່ງໃນສາມຂອງເປົ້າຫມາຍທີ່ພົວພັນກັບຫລາຍຂະແຫນງການ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ທີ່ເລັງໃສ່ເສີມຂະຫຍາຍປະສິດທິພາບຂອງການປົກຄອງ ແລະ ການບໍລິຫານລັດ.

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
57. ອັດຕາສ່ວນຂອງໂຄງການລົງທຶນປະເພດ 2 ທີ່ໄດ້ສຳເລັດການເປີດເຜີຍຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ຜ່ານຖານຂໍ້ມູນແບບປະສົມປະສານ ແລະ ເວທີເຜີຍແຜ່ຂໍ້ມູນຂ່າວສານສາທາລະນະ ແລະ ມີໃບຢັ້ງຢືນການສຶກສາດ້ານສິ່ງແວດລ້ອມ (ECC) ທີ່ຖືກຕ້ອງກ່ອນການອະນຸມັດສັນຍາສຳປະທານ (ກ່ຽວພັນກັບຕົວຊີ້ບອກຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ)[8].		ຄວາມຮູ້ແລະການລະດົມການຮ່ວມມືຈາກຫລາຍພາກສ່ວນ • ການວິເຄາະການເຕີບໂຕສີຂຽວ (P162394) ການສະໜອງທຶນ ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ: • ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ນ້ຳເທີນ 2 (P049290) *ຈະສິ້ນສຸດໃນເດືອນທັນວາ 2017* • ການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດ

8. ນີ້ແມ່ນຕົວຊີ້ບອກ ທີ່ໄດ້ປະກອບສ່ວນໂດຍສອງຕົວຊີ້ບອກຜົນໄດ້ຮັບ (ຂອບນະໂຍບາຍການພັດທະນາການເຕີບໂຕສີຂຽວ (Green Growth DPF) ແລະ ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ ຂອງຄົວເຮືອນຢູ່ ສປປ ລາວ ຄັ້ງທີ 2 (LENS2)

ຕົວຊີ້ບອກຈຸດປະສົງຂອງ CPF	ຕົວຊີ້ບອກຄວາມຄືບໜ້າເພີ່ມຕື່ມ	ແຜນງານຂອງກຸ່ມທະນາຄານໂລກ
• ຂໍ້ມູນພື້ນຖານ: 0% ຄາດໝາຍ: 50% 58. ການສ້າງຄູ່ມືການດຳເນີນງານທີ່ມີມາດຕະຖານ (SOP) ສຳລັບການພັດທະນາເຂື່ອນໄຟຟ້າ. • ຂໍ້ມູນພື້ນຖານ: ບໍ່ມີວິທີການດຳເນີນງານທີ່ມີມາດຕະຖານ (SOP) • ຄາດໝາຍ: ມີການນຳໃຊ້ວິທີການດຳເນີນງານທີ່ມີມາດຕະຖານ (SOP)		ໃນຂະແໜງເຂື່ອນໄຟຟ້າ ແລະ ບໍແຮ່ (P109736) *ຈະສິ້ນສຸດໃນເດືອນກັນຍາ 2018* • ໂຄງການສິ່ງແວດລ້ອມ ແລະ ສັງຄົມຢຸ່ ສປປ ລາວ ໄລຍະ 2 (P149130) *ຈະສິ້ນສຸດໃນເດືອນມິຖຸນາ 2021* ໂຄງການທີ່ມີໃນແຜນງານໃໝ່: • ແຜນດຸ່ນດ່ຽງງົບປະມານການພັດທະນາການເຕີບໂຕສີຂຽວ (IDA 17, 18 and 19) (P159956)

VIENGVANG TOWER OFFICE
LADLF
SNC·LAVALIN
JETRO
MUONG THANH VIENTIANE
CHA LEUN XAY HOTEL
2016

WORLD BANK GROUP



WORLD BANK GROUP

The World Bank Group Lao PDR Country Office, East Asia and Pacific Region
Xieng Ngeun Village, Chao Fa Ngum Road, Chantabouly District, Vientiane, Lao PDR

worldbank.org/lao